# ແຜນພັດທະນາ
# ວິສາຫະກິດຂະໜາດນ້ອຍ ແລະ ກາງ
# 2016-2020

ກະຊວງອຸດສາຫະກຳ ແລະ ການຄ້າ

# ສາລະບານ


– ດຳລັດສະບັບເລກທີ 253/ນຍ, ລົງວັນທີ 18 ສິງຫາ 2017 ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ ແຜນພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ 2016-2020.
– ຄຳນຳ.

**I. ພາກສະເໜີ 1**

1.1 ບົດບາດ ແລະ ຄວາມສຳຄັນຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ 1

1.2 ປະຫວັດຄວາມເປັນມາຂອງການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ຢູ່ ສປປ ລາວ 2

**II. ສະຫລຸບຕີລາຄາຜົນການຈັດຕັ້ງປະຕິບັດແຜນພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ 2011-2015 2**

2.1 ຜົນສຳເລັດຂອງການຈັດຕັ້ງປະຕິບັດວຽກງານ ຕາມ 7 ຂົງເຂດນະໂຍບາຍ 3

2.2 ການຍາດແຍ່ງການຮ່ວມມືກັບປະເທດເພື່ອນມິດ ແລະ ອົງການຈັດຕັ້ງສາກົນ 7

**III. ອຸປະສັກ ແລະ ສິ່ງທ້າທາຍ ຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ 7**

3.1 ດ້ານຜະລິດຕະພາບ, ເຕັກໂນໂລຊີ ແລະ ນະວັດຕະກຳ 8
3.2 ດ້ານການເຂົ້າເຖິງສິນເຊື່ອ ຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ 8
3.3 ການເຂົ້າເຖິງການບໍລິການໃຫ້ຄຳປຶກສາພັດທະນາທຸລະກິດ 9
3.4 ການເຂົ້າເຖິງຕະຫລາດ 9
3.5 ການກໍ່ສ້າງຜູ້ປະກອບກິດຈະການ 10
3.6 ສະພາບແວດລ້ອມຂອງການດຳເນີນທຸລະກິດ 10
3.7 ອຸປະສັກ ແລະ ສິ່ງທ້າທາຍອື່ນໆ 10

**IV. ແຜນພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ 2016-2020 11**

4.1 ວິໄສທັດ ແລະ ຈຸດປະສົງ 11
4.2 ນະໂຍບາຍສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ 2016-2020 12
4.3 ບັນດາມາດຕະການ, ໂຄງການ ແລະ ກິດຈະກຳໃນແຕ່ລະຂົງເຂດນະໂຍບາຍ 16
4.4 ໝາກຜົນ ແລະ ຕົວຊີ້ວັດ 20

**V. ມາດຕະການຈັດຕັ້ງປະຕິບັດ ແລະ ກົນໄກການປະສານງານ 22**
5.1 ມາດຕະການຈັດຕັ້ງປະຕິບັດ 22
5.2 ກົນໄກການປະສານງານ 22

**VI. ວິທີການຈັດຕັ້ງປະຕິບັດ 23**
6.1 ການຜັນຂະຫຍາຍ 23
6.2 ກົນໄປການປະສານງານ 24
6.3 ການຕິດຕາມກວດກາ, ປະເມີນຜົນ ແລະ ການລາຍງານ 26

**VII. ງົບປະມານ ແລະ ແຫລ່ງທຶນ 27**
7.1 ຄາດຄະເນງົບປະມານ 27
7.2 ແຫລ່ງທຶນ 27

**ເອກະສານຊ້ອນທ້າຍ 1**: ຂົງເຂດນະໂຍບາຍ, ໝາກຜົນ ແລະ ມາດຕະການ, ໂຄງການ ແລະ ກິດຈະກໍາ
**ເອກະສານຊ້ອນທ້າຍ 2**: ພາກສ່ວນທີ່ມີສ່ວນຮ່ວມໃນການຈັດຕັ້ງປະຕິບັດ
**ເອກະສານຊ້ອນທ້າຍ 3**: ຄາດຄະເນງົບປະມານການຈັດຕັ້ງປະຕິບັດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ນາຍົກລັດຖະມົນຕີ** ເລກທີ 253/ນຍ

ນະຄອນຫຼວງວຽງຈັນ, ວັນທີ 18.08.2017

# ດຳລັດ
## ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ ແຜນພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ 2016-2020

- ອີງຕາມ ກົດໝາຍວ່າດ້ວຍ ລັດຖະບານ ສະບັບປັບປຸງ, ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016.
- ອີງຕາມ ກົດໝາຍວ່າດ້ວຍ ການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ສະບັບເລກທີ 11/ສພຊ, ລົງວັນທີ 21 ທັນວາ 2011.
- ອີງຕາມ ເອກະສານລາຍງານຂອງກະຊວງ ອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 1275/ອຄ.ກສວ, ລົງວັນທີ 08 ສິງຫາ 2017.

**ນາຍົກລັດຖະມົນຕີ ອອກດຳລັດ:**

**ມາດຕາ 01:** ຮັບຮອງ ແລະ ປະກາດໃຊ້ ແຜນພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ 2016-2020.

**ມາດຕາ 02:** ມອບໃຫ້ກະຊວງ ອຸດສາຫະກຳ ແລະ ການຄ້າ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດແຜນພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ 2016-2020 ສະບັບນີ້ ໃນຂອບເຂດທົ່ວປະເທດ.

**ມາດຕາ 03:** ບັນດາກະຊວງ-ອົງການ, ແຂວງ, ນະຄອນຫຼວງວຽງຈັນ ແລະ ພາກສ່ວນທີ່ກ່ຽວຂ້ອງອື່ນໆ ຈົ່ງຮັບຮູ້, ໃຫ້ຄວາມຮ່ວມມື ແລະ ພ້ອມກັນຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ມີຜົນເປັນຢ່າງດີ.

**ມາດຕາ 04:** ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ນາຍົກລັດຖະມົນຕີ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ນາຍົກລັດຖະມົນຕີ

ທອງລຸນ ສີສຸລິດ

# ຄຳນຳ

ແຜນພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ 2016-2020 ແມ່ນການສືບຕໍ່ຜັນຂະຫຍາຍເນື້ອໃນກິດຈະການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ສະບັບເລກທີ 11/ສພຊ, ລົງວັນທີ 21 ທັນວາ 2011 ແລະ ສ້າງຂຶ້ນບົນພື້ນຖານບົດຮຽນທີ່ຖອດຖອນໄດ້ຈາກການຈັດຕັ້ງປະຕິບັດແຜນພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ 2011-2015. ກະຊວງອຸດສາຫະກຳ ແລະ ການຄ້າ ໂດຍແມ່ນ ກົມສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ເປັນແກນກາງໃນການຄົ້ນຄວ້າ ແລະ ສ້າງແຜນພັດທະນາສະບັບນີ້ຂຶ້ນ ບົນພື້ນຖານເສີມຂະຫຍາຍບົດບາດຄວາມສຳຄັນ ຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ຊຶ່ງເປັນພື້ນຖານເສດຖະກິດຂອງຊາດ, ການສ້າງວຽກເຮັດງານທຳ ແລະ ການສ້າງລາຍຮັບໃຫ້ປະຊາຊົນບັນດາເຜົ່າ ທັງເປັນການຜັນຂະຫຍາຍທິດທາງ ແລະ ໜ້າທີ່ການພັດທະນາເສດຖະກິດ-ສັງຄົມຂອງລັດຖະບານ ໃນການຊຸກຍູ້ສົ່ງເສີມພາກສ່ວນເສດຖະກິດເອກະຊົນ ແລະ ເສດຖະກິດຮ່ວມມືຂອງປະຊາຊົນ.

ແຜນພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ 2016-2020 ປະກອບມີ 7 ຂົງເຂດນະໂຍບາຍ ແລະ 43 ມາດຕະການ, ໂຄງການ ແລະ ກິດຈະກຳຈັດຕັ້ງປະຕິບັດ ທີ່ແທດເໝາະກັບສະພາບການພັດທະນາເສດຖະກິດ-ສັງຄົມໃນປະຈຸບັນ ໂດຍສະເພາະແມ່ນເພື່ອສ້າງເງື່ອນໄຂໃຫ້ວິສາຫະກິດຂະໜາດນ້ອຍ ແລະ ກາງ ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ ເປັນຕົ້ນກໍ່ແມ່ນປະຊາຄົມເສດຖະກິດອາຊຽນ ຊຶ່ງໄດ້ຮັບການສ້າງຕັ້ງຢ່າງເປັນທາງການໃນທ້າຍປີ 2015.

ບັນດາ 7 ຂົງເຂດນະໂຍບາຍ ແລະ 43 ມາດຕະການ, ໂຄງການ ແລະ ກິດຈະກຳຈັດຕັ້ງປະຕິບັດ ທີ່ກຳນົດໄວ້ໃນແຜນພັດທະນາສະບັບນີ້ ແມ່ນໄດ້ຖືກບັນຈຸຊັບຊ້ອນເຂົ້າໃນບັນດາໝາກຜົນ ຂອງແຜນພັດທະນາຂະແໜງອຸດສາຫະກຳ ແລະ ການຄ້າ 5 ປີ (2016-2020) ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020) ແລະ ສອດຄ່ອງກັບແຜນຍຸດທະສາດພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ 2016-2025 ຂອງ ອາຊຽນທີ່ຖືກຮັບຮອງ ແລະ ປະກາດໃຊ້ແລ້ວ.

ກະຊວງອຸດສາຫະກຳ ແລະ ການຄ້າ ຂໍສະແດງຄວາມຂອບໃຈ ມາຍັງທຸກພາກສ່ວນ ທັງພາກລັດ, ພາກເອກະຊົນ ແລະ ຄູ່ຮ່ວມພັດທະນາທີ່ໄດ້ໃຫ້ການຮ່ວມມື ແລະ ປະກອບຄຳຄິດຄຳເຫັນ ເຮັດໃຫ້ການສ້າງແຜນພັດທະນາສະບັບນີ້ສຳເລັດຕາມລະດັບຄາດໝາຍ ແລະ ກໍ່ຫວັງຢ່າງຍິ່ງວ່າທຸກພາກສ່ວນທີ່ກ່ຽວຂ້ອງ ຈະໃຫ້ການຮ່ວມມືໃນການຈັດຕັ້ງປະຕິບັດແຜນພັດທະນາດັ່ງກ່າວ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ. ພ້ອມນີ້, ກໍ່ສະແດງຄວາມຂອບໃຈ ມາຍັງຄູ່ຮ່ວມພັດທະນາ ໂດຍສະເພາະແມ່ນທະນາຄານພັດທະນາອາຊີ (ADB), ທະນາຄານໂລກ (WB), ການຮ່ວມມື ລາວ-ເຢຍລະມັນ (GIZ) ທີ່ໄດ້ໃຫ້ການຊ່ວຍເຫຼືອທາງດ້ານທຶນຮອນ ແລະ ເຕັກນິກວິຊາການ ເຂົ້າໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ຂອງ ສປປ ລາວ ຢ່າງຕໍ່ເນື່ອງ. ກະຊວງອຸດສາຫະກຳ ແລະ ການຄ້າ ຍິນດີຮັບເອົາຄຳສະເໜີ ແລະ ຄຳຄິດຄຳເຫັນຈາກທຸກພາກສ່ວນທີ່ນຳໃຊ້ແຜນພັດທະນາສະບັບນີ້ເປັນບ່ອນອີງໃນການສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ໃຫ້ມີຄວາມເຂັ້ມແຂງ ແລະ ຂະຫຍາຍຕົວສູງຂຶ້ນ.

ນະຄອນຫລວງວຽງຈັນ, ວັນທີ 22 AUG 2017

ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ

ຂ. ເຂັມມະນີ ພົນເສນາ

# ແຜນພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ 2016-2020

## I. ພາກສະເໜີ

### 1.1 ບົດບາດ ແລະ ຄວາມສຳຄັນຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ

ວິສາຫະກິດຂະໜາດນ້ອຍ ແລະ ກາງ ຫລື ວນກ (Small and Medium Enterprise ຫລື SME) ມີບົດບາດສຳຄັນຕໍ່ການພັດທະນາເສດຖະກິດ-ສັງຄົມ ໂດຍສະເພາະແມ່ນການຜະລິດສິນຄ້າ, ການຄ້າ ແລະ ການບໍລິການ, ປະກອບສ່ວນເຂົ້າໃນການສ້າງວຽກເຮັດງານທຳ, ສ້າງລາຍຮັບ ແລະ ຍົກສູງຊີວິດການເປັນຢູ່ຂອງປະຊາຊົນ ກໍ່ຄືການສ້າງປະຖົມປັດໃຈໃຫ້ແກ່ການຫັນເປັນອຸດສາຫະກຳ ແລະ ທັນສະໄໝ ເທື່ອລະກ້າວ, ເຮັດໃຫ້ເສດຖະກິດຂອງຊາດມີການຂະຫຍາຍຕົວຢ່າງຕໍ່ເນື່ອງ. ການພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ນອກຈາກຈະມີຕົ້ນທຶນຕໍ່າແລ້ວ ຍັງເນັ້ນການນຳໃຊ້ທ່າແຮງຊັບພະຍາກອນພາຍໃນເປັນຫລັກ. ນອກຈາກນັ້ນ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ຍັງສາມາດປັບຕົວໄດ້ໄວກັບສະພາບການທີ່ມີການປ່ຽນແປງ ໂດຍສະເພາະແມ່ນໃນເວລາເກີດມີວິກິດການທາງດ້ານເສດຖະກິດ ແລະ ການເງິນ.

ຍ້ອນເຫັນໄດ້ຄວາມສຳຄັນຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ບັນດາປະເທດສ່ວນໃຫຍ່ໃນໂລກ ໂດຍສະເພາະໃນພາກພື້ນອາຊຽນ ຈຶ່ງໄດ້ເອົາໃຈໃສ່ຕໍ່ການສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ໂດຍໄດ້ວາງນະໂຍບາຍ, ຍຸດທະສາດ ແລະ ແຜນພັດທະນາ ທີ່ເປັນອັນສະເພາະເຈາະຈົງສຳລັບສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ, ລວມທັງການສ້າງໃຫ້ມີກົນໄກ ແລະ ສ້າງໜ່ວຍງານສະເພາະຂຶ້ນມາເພື່ອຮັບຜິດຊອບຢ່າງຈິງຈັງ ແລະ ເປັນລະບົບຕໍ່ເນື່ອງ. ໃນບັນດາປະເທດສະມາຊິກອາຊຽນ ວິສາຫະກິດຂະໜາດນ້ອຍ ແລະ ກາງ, ລວມທັງຈຸນລະວິສາຫະກິດ ເປັນອົງປະກອບທີ່ສຳຄັນຂອງເສດຖະກິດ ກວມເຖິງ 88,8%-99,9% ຂອງຈຳນວນວິສາຫະກິດທັງໝົດ, ສ້າງວຽກເຮັດງານທຳໄດ້ 51,7%-97,2% ແລະ ປະກອບສ່ວນເຂົ້າໃນການສົ່ງອອກ 10%-29,9%,

ສຳລັບ ສປປ ລາວ, ອີງຕາມຜົນຂອງການສຳຫລວດເສດຖະກິດທົ່ວປະເທດຄັ້ງທີ 2 ໃນປີ 2013 ໃນຈຳນວນຫົວໜ່ວຍພື້ນຖານເສດຖະກິດທີ່ໄດ້ຂຶ້ນບັນຊີສຳຫລວດທັງໝົດແມ່ນ 178.557 ຫົວໜ່ວຍ ໄດ້ດຳເນີນການສຳຫລວດຕົວຈິງ 134.577 ຫົວໜ່ວຍ ກວມ 75% ໃນຂອບເຂດທົ່ວປະເທດ. ໃນການດຳເນີນການສຳຫລວດຕົວຈິງ 134.577 ຫົວໜ່ວຍນັ້ນ ເປັນຫົວໜ່ວຍວິສາຫະກິດ ຫລື ສະຖາບັນທີ່ຫວັງຜົນກຳໄລ 124.873 ຫົວໜ່ວຍ ແລະ ສະຖາບັນທີ່ບໍ່ຫວັງຜົນກຳໄລ 9.704 ຫົວໜ່ວຍ. ໃນນີ້ ອີງຕາມການຈັດແບ່ງຂະໜາດຂອງຫົວໜ່ວຍວິສາຫະກິດທີ່ຫວັງຜົນກຳໄລທີ່ມີແຮງງານ 99 ຄົນລົງມາ ແມ່ນສາມາດຈັດແບ່ງເປັນປະເພດວິສາຫະກິດຂະໜາດນ້ອຍ ແລະ ກາງ 124.567 ຫົວໜ່ວຍ ຫລື ເທົ່າກັບ 99.8%. ໃນນີ້ ວິສາຫະກິດທີ່ມີຈຳນວນແຮງງານ 5 ຄົນລົງມາ ແມ່ນກວມເຖິງ 86%. ວິສາຫະກິດຂະໜາດນ້ອຍ ແລະ ກາງ ປະກອບສ່ວນໃນການສ້າງວຽກເຮັດງານທຳໄດ້ເຖິງ 471.282 ຄົນ ຫລື ເທົ່າກັບ 82,18% ຂອງຈຳນວນແຮງງານທັງໝົດໃນຂະແໜງການທຸລະກິດ.

## 1.2 ປະຫວັດຄວາມເປັນມາຂອງການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ຢູ່ ສປປ ລາວ

ສປປ ລາວ ມີນິຕິກຳເພື່ອເປັນຂອບໃຫ້ແກ່ການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ແຕ່ປີ 2004 ເປັນຕົ້ນມາ ໂດຍລັດຖະບານໄດ້ອອກດຳລັດເລກທີ 42/ນຍ, ລົງວັນທີ 20 ເມສາ 2004. ບົນພື້ນຖານດຳລັດດັ່ງກ່າວ ຫ້ອງການສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ແລະ ຄະນະກຳມະການສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ແລະ ຜະລິດຕະພາບ ໄດ້ຮັບການສ້າງຕັ້ງຂຶ້ນ. ພາຍຫລັງທີ່ຫ້ອງການສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ໄດ້ຮັບການສ້າງຕັ້ງຂຶ້ນແລ້ວ ກໍ່ໄດ້ສ້າງຍຸດທະສາດພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ໄລຍະ 5 ປີ (2006-2010) ຊຶ່ງຍຸດທະສາດດັ່ງກ່າວແມ່ນຖືກຮັບການຮັບຮອງ ແລະ ປະກາດໃຊ້ໂດຍດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 157/ນຍ, ລົງວັນທີ 9 ກັນຍາ 2008 ຊຶ່ງຖືວ່າເປັນຍຸດທະສາດສະບັບທຳອິດ ຂອງ ສປປ ລາວ ໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ. ຍຸດທະສາດພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ 2006-2010 ໄດ້ກຳນົດເອົາ 6 ຂົງເຂດວຽກງານເປັນຈຸດສຸມໃນການແກ້ໄຂ, ປັບປຸງ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ. ພາຍຫລັງລັດຖະບານໄດ້ອອກນິຕິກຳ ແລະ ຍຸດທະສາດພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ກໍ່ສາມາດດຶງດູດການຮ່ວມມືຂອງສາກົນໃນການສະໜັບສະໜູນສ້າງຄວາມເຂັ້ມແຂງໃຫ້ຫ້ອງການສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ແລະ ພາກສ່ວນກ່ຽວຂ້ອງ ພ້ອມທັງສະໜອງທຶນ ແລະ ຜູ້ຊ່ຽວຊານໃນການຈັດຕັ້ງປະຕິບັດແຜນຍຸດທະສາດດັ່ງກ່າວ. ຮອດປີ 2010 ສາມາດລະດົມທຶນເຂົ້າໃນການພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ໄດ້ບໍ່ຕ່ຳກວ່າ 12 ລ້ານໂດລາສະຫະລັດ. ບັນດາອົງການອົງການທີ່ໃຫ້ການສະໜັບສະໜູນຫລັກປະກອບດ້ວຍ GTZ, ADB, EU, UNIDO, ການຮ່ວມມືລະຫວ່າງລັດຖະບານ ແລະ ອົງການບໍ່ໄດ້ສັງກັດລັດຖະບານຈຳນວນໜຶ່ງ.

ຜ່ານການຈັດຕັ້ງປະຕິບັດຍຸດທະສາດພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ 2006-2010 ສາມາດບັນລຸໄດ້ໝາກຜົນເບື້ອງຕົ້ນຈຳນວນໜຶ່ງ ແລະ ເປັນການສ້າງພື້ນຖານໃຫ້ແກ່ວຽກງານສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນການເປັນເຈົ້າຕົນເອງໃນການສ້າງແຜນພັດທະນາ ແລະ ກຳນົດມາດຕະການຕ່າງໆໃນການສະໜັບສະໜູນວິສາຫະກິດຂະໜາດນ້ອຍ ແລະ ກາງ. ພະນັກງານທີ່ເຮັດວຽກກ່ຽວກັບການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ໄດ້ຮັບການຍົກລະດັບວິຊາສະເພາະ ແລະ ວິສາຫະກິດຂະໜາດນ້ອຍ ແລະ ກາງ ກໍ່ໄດ້ຮັບການຝຶກອົບໃນຮົມດ້ານຕ່າງໆ.

ເພື່ອເພີ່ມປະສິດທິຜົນໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ, ໃນປີ 2011 ລັດຖະບານໄດ້ຍົກລະດັບນິຕິກຳຈາກດຳລັດວ່າດ້ວຍການສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ມາເປັນກົດໝາຍວ່າດ້ວຍການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ສະບັບເລກທີ 11/ສພຊ, ລົງວັນທີ 21 ທັນວາ 2011.

# II. ສະຫລຸບຕີລາຄາຜົນການຈັດຕັ້ງປະຕິບັດແຜນພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ 2011-2015

ແຜນພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ 2011-2015 ໄດ້ກຳນົດເອົາ 7 ຂົງເຂດນະໂຍບາຍເປັນໜ້າທີ່ຈຸດສຸມໃນການຈັດຕັ້ງປະຕິບັດ ຄື:

1. ປັບປຸງສະພາບແວດລ້ອມທາງດ້ານລະບຽບການ ແລະ ການຄຸ້ມຄອງຂອງລັດຕໍ່ການເຄື່ອນໄຫວທຸລະກິດ;

2. ປັບປຸງການເຂົ້າຫາແຫລ່ງທຶນຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ;
3. ການກໍ່ສ້າງຜູ້ປະກອບກິດຈະການໃໝ່;
4. ການໃຫ້ການຊ່ວຍເຫລືອ ແລະ ບໍລິການພັດທະນາທຸລະກິດ;
5. ການສົ່ງເສີມໃນການຮ່ວມມືທຸລະກິດລະຫວ່າງ ວິສາຫະກິດຂະໜາດໃຫຍ່ ແລະ ວິສາຫະກິດຂະໜາດນ້ອຍ ແລະ ກາງ;
6. ການສົ່ງເສີມການເພີ່ມຜະລິດຕະພາບ ເພື່ອຍົກລະດັບຄຸນະພາບ ແລະ ມາດຕະຖານຜະລິດຕະພັນ ແລະ ການບໍລິການຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ;
7. ການສົ່ງເສີມການເຂົ້າເຖິງຕະຫລາດ ແລະ ການຂະຫຍາຍຕະຫລາດຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ.

ໂດຍພາຍໃຕ້ການຊີ້ນໍາຂອງລັດຖະບານ, ຄະນະນໍາກະຊວງອຸດສາຫະກໍາ ແລະ ການຄ້າ ໂດຍສະເພາະກົມສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ກໍ່ໄດ້ປະຕິບັດໜ້າທີ່ຂອງຕົນໃນການເປັນຈຸດປະສານງານທຸກວຽກງານສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ, ໂດຍສະເພາະແມ່ນການປະສານງານກັບພາກສ່ວນທີ່ກ່ຽວຂ້ອງໃນການລະດົມທຶນຮອນ ແລະ ການຊ່ວຍເຫລືອທາງດ້ານເຕັກນິກວິຊາການ ເພື່ອມາຈັດຕັ້ງປະຕິບັດແຜນພັດທະນາວິສາຫະກິດຂະ ໜາດນ້ອຍ ແລະ ກາງ 2011-2015 ແລະ ການຕິດຕາມປະເມີນຜົນການຈັດຕັ້ງປະຕິບັດແຜນພັດທະນາດັ່ງກ່າວ.

ເນື່ອງຈາກແຜນພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ 2011-2015 ກວມເອົາໜ້າວຽກຂອງຫລາຍຂະແໜງການ ໂດຍອີງຕາມຈຸດພິເສດຂອງການສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ຕາມສາຍຕັ້ງ ແລະ ສາຍຂວາງ, ການຈັດຕັ້ງປະຕິບັດບັນດາມາດຕະການ ແລະ ໂຄງການທີ່ລະບຸໄວ້ຢູ່ໃນແຜນພັດທະນາດັ່ງກ່າວຈຶ່ງມີ ຄວາມແຕກຕ່າງກັນໄປ. ບາງມາດຕະການ ແລະ ໂຄງການຖືກຈັດຕັ້ງປະຕິບັດໂດຍນໍາໃຊ້ການຊ່ວຍເຫລືອທາງດ້ານວິຊາ ການທີ່ລະດົມໄດ້ພາຍໃຕ້ຂອບຂອງແຜນພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ, ແຕ່ວ່າມາດຕະການ ແລະ ໂຄງການສ່ວນໃຫຍ່ແມ່ນຂະແໜງການກ່ຽວຂ້ອງເປັນຜູ້ຈັດຕັ້ງປະຕິບັດຕາມພາລະບົດບາດ ໂດຍການນໍາໃຊ້ງົບປະມານໃນຂອບເຂດວຽກງານຂອງຂະແໜງການຕົນເອງ ແລະ ແຫລ່ງງົບປະມານຈາກຄູ່ຮ່ວມພັດທະນາ. ເຖິງແນວໃດກໍ່ຕາມ, ການຈັດຕັ້ງປະຕິບັດທຸກມາດຕະການ ແລະ ໂຄງການທີ່ລະບຸໃນແຜນພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ 2011-2015 ລ້ວນແຕ່ເປັນການປະກອບສ່ວນເຂົ້າໃນການສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ໂດຍທາງກົງ ແລະ ທາງອ້ອມ ຊຶ່ງຄວາມຄືບໜ້າໂດຍລວມສາມາດສະຫລຸບໂດຍຫຍໍ້ໄດ້ດັ່ງນີ້:

## 2.1 ຜົນສໍາເລັດຂອງການຈັດຕັ້ງປະຕິບັດວຽກງານ ຕາມ 7 ຂົງເຂດນະໂຍບາຍ

### 2.1.1 ການປັບປຸງສະພາບແວດລ້ອມທາງດ້ານລະບຽບການ ແລະ ການຄຸ້ມຄອງຂອງລັດຕໍ່ການເຄື່ອນໄຫວທຸລະກິດ

ການຂຶ້ນທະບຽນວິສາຫະກິດມີຄວາມສະດວກ, ໄວຂຶ້ນ ແລະ ປະຢັດທັງເວລາ ແລະ ຄ່າທໍານຽມໃນການໃຊ້ຈ່າຍດ້ານເອກະສານ ເຊັ່ນ: ໃນເມື່ອກ່ອນຄ່າທໍານຽມໃນການໃຊ້ຈ່າຍແມ່ນ 100.000-200.000 ກີບ ແຕ່

ປະຈຸບັນຍັງເຫລືອພຽງ 50.000-150.000 ກີບ (ແລ້ວແຕ່ຮູບແບບວິສາຫະກິດ), ສຳລັບເວລາໃນການຂຶ້ນທະບຽນວິສາຫະກິດ ໃນເມື່ອກ່ອນແມ່ນ 60-90 ວັນ ແຕ່ປະຈຸບັນຍັງເຫລືອພຽງ 3-10 ວັນລັດຖະການ ແລະ ເອກະສານທີ່ປະກອບເຂົ້າໃນການຂໍຂຶ້ນທະບຽນວິສາຫະກິດ ໃນເມື່ອກ່ອນແມ່ນ 18 ເອກະສານ ແຕ່ປະຈຸບັນຍັງເຫລືອພຽງ 2-5 ເອກະສານ (ແລ້ວແຕ່ຮູບແບບວິສາຫະກິດ). ນອກນັ້ນ ຍັງສາມາດເຫັນໄດ້ຂໍ້ມູນການຂຶ້ນທະບຽນວິສາຫະກິດໄດ້ຢູ່ຂັ້ນແຂວງ/ເມືອງທີ່ມີການເຊື່ອມຕໍ່.

ບົດລາຍງານຂອງທະນາຄານໂລກໄດ້ ຊີ້ໃຫ້ເຫັນວ່າ: ລະບົບການຂຶ້ນທະບຽນວິສາຫະກິດຖືກປັບປຸງໃຫ້ດີຂຶ້ນກວ່າເກົ່າ ຈາກອັນດັບທີ 93 ໃນປີ 2012 ມາເປັນອັນດັບທີ 81 ໃນປີ 2013. ສຳຫລັບການອຳນວຍຄວາມສະດວກໃນການດຳເນີນທຸລະກິດ ສປປ ລາວ ຖືກຈັດຢູ່ໃນອັນດັບທີ່ດີຂຶ້ນ 14 ອັນດັບ ຈາກອັນດັບ 148 ໃນປີ 2015 ມາເປັນ 134 ໃນປີ 2016 ຈາກ 189 ປະເທດ.

### 2.1.2 ການປັບປຸງການເຂົ້າຫາແຫລ່ງທຶນຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ

ກອງທຶນສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ໄດ້ຮັບການສ້າງຕັ້ງຂຶ້ນໃນຕົ້ນປີ 2010 ແລະ ໄດ້ເລີ່ມດຳເນີນງານຕົວຈິງໃນຕົ້ນປີ 2012 ໂດຍໄດ້ປ່ອຍສິນເຊື່ອໃຫ້ວິສາຫະກິດຂະໜາດນ້ອຍ ແລະ ກາງ ຜ່ານທະນາຄານພັດທະນາລາວ ໄລຍະ I ໃນວົງເງິນ 14 ຕື້ກີບ ແລະ ໃນກາງປີ 2015 ໄດ້ສະໜອງທຶນໃຫ້ແກ່ທະນາຄານພັດທະນາລາວ ໄລຍະ II ອີກ ຈຳນວນ 16 ຕື້ກີບ ລວມເປັນເງິນທັງໝົດ 30 ຕື້ກີບ. ມາຮອດທ້າຍປີ 2016 ທະນາຄານໄດ້ປ່ອຍສິນເຊື່ອໃຫ້ວິສາຫະກິດຂະໜາດນ້ອຍ ແລະ ກາງ ຈຳນວນ 92 ຫົວໜ່ວຍ, ໃນນັ້ນ 44 ຫົວໜ່ວຍແມ່ນແມ່ຍິງເປັນເຈົ້າຂອງ ໃນອັດຕາດອກເບ້ຍ 7-10% ແລະ ບໍ່ມີລາຍງານເງິນກູ້ທີ່ຕົກເປັນປະເພດໜີ້ເສຍ ຫລື NPL. ບັນດາຫົວໜ່ວຍທຸລະກິດທີ່ໄດ້ຮັບເງິນກູ້ ໄດ້ລາຍງານວ່າທຸລະກິດຂອງເຂົາເຈົ້າມີການຂະຫຍາຍຕົວ ເນື່ອງຈາກມີອັດຕາດອກເບ້ຍຕ່ຳທຽບໃສ່ອັດຕາດອກເບ້ຍເງິນກູ້ທົ່ວໄປປະມານ 4-6% ເຮັດໃຫ້ຕົ້ນທຶນຂອງເຂົາເຈົ້າຫລຸດລົງ ແລະ ສາມາດແຂ່ງຂັນໄດ້ຫລາຍຂຶ້ນ. ໃນປີ 2014 ລັດຖະບານໄດ້ອະນຸມັດການຮ່ວມມືກັບທະນາຄານໂລກ ເພື່ອຈັດຕັ້ງປະຕິບັດໂຄງການປ່ອຍສິນເຊື່ອໃຫ້ແກ່ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນມູນຄ່າ 20 ລ້ານໂດລາ, ໃນນັ້ນ 10 ລ້ານໂດລາ ເປັນເງິນຊ່ວຍເຫລືອລ້າ ແລະ 10 ລ້ານໂດລາ ເປັນເງິນກູ້ດອກເບ້ຍຕ່ຳ. ຈຸດປະສົງຫລັກຂອງໂຄງການດັ່ງກ່າວແມ່ນເພື່ອແກ້ໄຂບັນຫາແຫລ່ງທຶນໄລຍະຍາວໃຫ້ແກ່ວິສາຫະກິດຂະໜາດນ້ອຍ ແລະ ກາງ ເພື່ອຮັບໃຊ້ການລົງທຶນ ແລະ ຂະຫຍາຍທຸລະກິດ ໂດຍມີອັດຕາດອກເບ້ຍຕ່ຳກວ່າດອກເບ້ຍທົ່ວໄປປະມານ 3-5%. ມາຮອດປັດຈຸບັນສາມາດປ່ອຍສິນເຊື່ອໃຫ້ແກ່ວິສາຫະກິດຂະໜາດນ້ອຍ ແລະ ກາງ ໄດ້ຈຳນວນໜຶ່ງແລ້ວ.

ສະຫລຸບແລ້ວ ການສະໜອງສິນເຊື່ອໃຫ້ແກ່ວິສາຫະກິດຂະໜາດນ້ອຍ ແລະ ກາງ ແມ່ນໄດ້ຮັບການແກ້ໄຂຢ່າງຕໍ່ເນື່ອງ. ຮອດເດືອນ 7/2016, ບໍລິມາດເງິນທີ່ສະໜອງສິນເຊື່ອໃຫ້ແກ່ພາກທຸລະກິດທັງໝົດມີປະມານ 49,55% ຂອງ GDP ເພີ່ມຂຶ້ນ 15,55% ທຽບໃສ່ ປີ 2014 ທີ່ມີການສະໜອງສິນເຊື່ອງພຽງແຕ່ 44% ຂອງ GDP.

### 2.1.3 ການກໍ່ສ້າງຜູ້ປະກອບກິດຈະການໃໝ່

ໄດ້ສ້າງຫລັກສູດວິຊາກໍ່ສ້າງຜູ້ປະກອບກິດຈະການຂອງອາຊຽນເຂົ້າໃນລະບົບການສຶກສາ ຊຶ່ງປະຈຸບັນແມ່ນຢູ່ໃນຂັ້ນຕອນດຳເນີນການ ແລະ ປະສານກັບຂະແໜງການກ່ຽວຂ້ອງ. ໄດ້ສືບຕໍ່ເອົາຫລັກສູດວິຊາກໍ່ສ້າງຜູ້ປະກອບກິດຈະການທີ່ມີແລ້ວ ເຂົ້າໃນລະບົບການສຶກສາໃນລະດັບສາມັນສຶກສາ ແລະ ໄດ້ດຳເນີນການຝຶກ

ອົບຮົມຄູອາຈານຢູ່ແຂວງຄໍາມ່ວນ, ສະຫວັນນະເຂດ, ຈໍາປາສັກ, ອຸດົມໄຊ ແລະ ຊຽງຂວາງ ຊຶ່ງມີຜູ້ເຂົ້າຮ່ວມໃນຫລັກສູດດັ່ງກ່າວທັງໝົດ 1.733 ຄົນ. ພ້ອມນີ້ກໍ່ໄດ້ດໍາເນີນໂຄງການກໍ່ສ້າງຜູປະກອບກິດຈະການໃໝ່ ໂດຍກອງທຶນສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ເປັນຜູ້ສະໜັບສະໜູນທຶນສົມທົບ 50% ຂອງມູນຄ່າການຝຶກອົບຮົມໃຫ້ແກ່ຊາວໜຸ່ມທີ່ມີອາຍຸບໍ່ເກີນ 35 ປີ ທີ່ເຂົ້າຮ່ວມການຝຶກອົບຮົມໃນຫລັກສູດການກໍ່ສ້າງຜູ້ປະກອບກິດຈະການໃໝ່ໃນສະຖາບັນຕ່າງໆ. ໃນໄລຍະປີ 2013-2015 ໄດ້ຈັດຕັ້ງຝຶກອົບຮົມໃຫ້ຊາວໜຸ່ມຜູ້ທີ່ສົນໃຈຢາກເປັນຜູ້ປະກອບກິດຈະການໄດ້ 238 ຄົນ (ຍິງ 133 ຄົນ) ແລະ ໄດ້ດໍາເນີນກິດຈະກໍາຕ່າງໆໃນແຕ່ລະໄລຍະເພື່ອກະຕຸກຊຸກຍູ້ຊາວໜຸ່ມໃຫ້ຫັນມາສົນໃຈປະກອບອາຊີບເປັນຜູ້ປະກອບກິດຈະການໃຫ້ຫລາຍຂຶ້ນ ເຊັ່ນ: ການຈັດການປະກວດແຜນທຸລະກິດສໍາຫລັບຊາວໜຸ່ມ ແລະ ແມ່ຍິງ, ການເຮັດປາຖະກາຖາໃນສະບັນການສຶກສາຕ່າງໆ.

### 2.1.4 ການໃຫ້ການຊ່ວຍເຫລືອ ແລະ ບໍລິການພັດທະນາທຸລະກິດ

ໄດ້ສ້າງຖານຂໍ້ມູນກ່ຽວກັບອົງການ ແລະ ຜູ້ຊ່ຽວຊານດ້ານຕ່າງໆທີ່ສາມາດສະໜອງບໍລິການດ້ານວິຊາການແກ່ວິສາຫະກິດຂະໜາດນ້ອຍ ແລະ ກາງ ພ້ອມດຽວກັນກໍ່ໄດ້ສ້າງເຄືອຂ່າຍຜູ້ສະໜອງບໍລິການໃຫ້ຄໍາປຶກສາພັດທະນາທຸລະກິດແລ້ວ ຊຶ່ງມີສະມາຊິກທັງໝົດ 25 ຫົວໜ່ວຍ. ກະຊວງສ້າງສູນບໍລິການວິສາຫະກິດຂະໜາດນ້ອຍ ແລະ ກາງ ເພື່ອສະໜອງການຝຶກອົບຮົມ ແລະ ໃຫ້ການຊ່ວຍເຫລືອ ຫລື ບໍລິການໃຫ້ຄໍາປຶກສາພັດທະນາທຸລະກິດ ເຊັ່ນ: ການສະໜອງຂໍ້ມູນ-ຂ່າວສານ, ການປັບປຸງການບໍລິຫານຄຸນນະພາບ, ການຊ່ວຍເຫລືອໃນການເຂົ້າເຖິງແຫລ່ງທຶນ, ການເຂົ້າເຖິງຕະລາດ,  ການຖ່າຍທອດເຕັກໂນໂລຊີ ແລະ ອື່ນໆ. ພ້ອມນີ້ ກໍ່ໄດ້ດໍາເນີນໂຄງການສະໜອງທຶນສົມທົບໃຫ້ແກ່ການສະໜອງບໍລິການດ້ານທີ່ປຶກສາເພື່ອປັບປຸງທຸລະກິດ ໂດຍການຮ່ວມມືກັບທະນາຄານໂລກ ໃນຂອບໂຄງການພັດທະນາການຄ້າ ໄລຍະ 2 (2nd Trade Development Facility ຫລື TDF 2). ມາຮອດທ້າຍປີ 2015 ໄດ້ອະນຸມັດທຶນສົມທົບໃຫ້ແກ່ໂຄງການປັບປຸງທຸລະກິດໃຫ້ແກ່ຫົວໜ່ວຍທຸລະກິດ ຈໍານວນ 123 ຫົວໜ່ວຍ ຄິດເປັນມູນຄ່າ 692.671 ໂດລາ, ໃນນັ້ນ ວິສາຫະກິດຂະໜາດນ້ອຍ ແລະ ກາງ ຈໍານວນ 101 ຫົວໜ່ວຍ ເທົ່າກັບ 82% ຂອງຈໍານວນວິສາຫະກິດທີ່ໄດ້ອະນຸມັດທຶນສົມທົບ.

### 2.1.5 ການສົ່ງເສີມໃນການຮ່ວມມືທຸລະກິດລະຫວ່າງ ວິສາຫະກິດຂະໜາດໃຫຍ່ ແລະ ວິສາຫະກິດຂະໜາດນ້ອຍ ແລະ ກາງ

ນະໂຍບາຍນີ້ແມ່ນມີຈຸດປະສົງເພື່ອສ້າງເງື່ອນໄຂໃຫ້ວິສາຫະກິດຂະໜາດນ້ອຍ ແລະ ກາງ ແລະ ວິສາຫະກິດຂະໜາດໃຫຍ່ ລວມທັງວິສາຫະກິດທີ່ເປັນການລົງທຶນໂດຍກົງຂອງຕ່າງປະເທດ (FDI) ໃຫ້ມີການຮ່ວມມືກັນ ໂດຍວິສາຫະກິດຂະໜາດນ້ອຍ ແລະ ກາງ ເຮັດບົດບາດເປັນຜູ້ສະໜອງ ຫລື ເປັນຜູ້ຮັບເໝົາຕໍ່ຈາກວິສາຫະກິດຂະໜາດໃຫຍ່ ເຮັດໃຫ້ວິສາຫະກິດຂະໜາດນ້ອຍ ແລະ ກາງ ມີຕະຫລາດທີ່ໝັ້ນຄົງ. ເຖິງແນວໃດກໍ່ຕາມນະໂຍບາຍດັ່ງກ່າວນີ້ ແມ່ນຍັງບໍ່ທັນມີຄວາມຄືບໜ້າໃນການຈັດຕັ້ງປະຕິບັດເທົ່າທີ່ຄວນ ເນື່ອງຈາກຍັງຂາດບຸກຄະລາກອນ ແລະ ທຶນຮອນ, ມີພຽງແຕ່ໄດ້ສຶກສາກໍລະນີການຮ່ວມມື ລະຫວ່າງວິສາຫະກິດຂະໜາດນ້ອຍ ແລະ ກາງ ແລະ  ບໍລິສັດເບຍລາວ ແລະ ເຊໂປນມາຍນິງ. ໃນຕໍ່ໜ້າ ຈະຕ້ອງໄດ້ສືບຕໍ່ເຮັດການສຶກສາ ເພື່ອໃຫ້ກໍານົດໄດ້ວ່າພວກເຮົາຈະມີກົນໄກ, ນະໂຍບາຍ ຫລື ສິ່ງຈູງໃຈຫຍັງແດ່ໃຫ້ແກ່ວິສາຫະກິດຂະໜາດໃຫຍ່ ເພື່ອໃຫ້ນໍາໃຊ້ຜະລິດຕະພັນສໍາເລັດຮູບ ຫລື ເຄິ່ງສໍາເລັດຮູບຈາກວິສາຫະກິດຂະໜາດນ້ອຍ ແລະ ກາງ. ພ້ອມນີ້ ຈະຊ່ວຍເຫລືອວິສາຫະກິດຂະໜາດນ້ອຍ ແລະ ກາງ ດ້ານໃດເພື່ອເຮັດໃຫ້ຜະລິດຕະພັນ ແລະ ການບໍລິການເປັນທີ່ຍອມຮັບຂອງວິສາຫະກິດຂະໜາດໃຫຍ່.

### 2.1.6 ການສົ່ງເສີມການເພີ່ມຜະລິດຕະພາບ ເພື່ອຍົກລະດັບຄຸນນະພາບ ແລະ ມາດຕະຖານ ຜະລິດຕະພັນ ແລະ ການບໍລິການ ຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ

ໄດ້ດຳເນີນໂຄງການປັບປຸງໂຮງງານຈຳນວນໜຶ່ງເພື່ອຍົກລະດັບການບໍລິຫານຄຸນນະພາບ ເພື່ອເປັນຕົວແບບໃຫ້ແກ່ໂຮງງານອື່ນໆ ເຊັ່ນ: ໂຮງງານຜະລິດເກືອເວີນຄຳ, ໂຮງງານນ້ຳດື່ມມາວີຕ້າ ແລະ ໂຮງງານເຂົ້າໜົມ C&A ຊຶ່ງໂຄງການດັ່ງກ່າວ ແມ່ນດຳເນີນເປັນເວລາ 1 ປີ ໂດຍໄດ້ຮັບການສະໜັບສະໜູນທາງດ້ານງົບປະມານ ແລະ ຊ່ຽວຊານຈາກອົງການຜະລິດຕະພາບແຫ່ງອາຊີ (Asian Productivity Organization ຫລື APO). ຜ່ານການຈັດຕັ້ງປະຕິບັດໂຄງການສາມາດເຫັນໄດ້ວ່າທັງ 3 ໂຮງງານຕົວແບບດັ່ງກ່າວໄດ້ມີການປັບປຸງວຽກງານບໍລິຫານຈັດການທີ່ດີ ເປັນຕົ້ນແມ່ນ: ມີແຜນອາດການຜະລິດ, ການເຂົ້າ-ອອກເປັນລະບົບ ແລະ ມີລະບົບເອກະສານທີ່ດີ ຊຶ່ງຜ່ານການປະເມີນຜົນແລ້ວທັງ 3 ໂຮງງານສາມາດຂໍການຢັ້ງຢືນການຜະລິດທີ່ດີ (GMP) ຈາກກົມອາຫານ ແລະ ຢາ. ພ້ອມກັນນີ້ກໍ່ໄດ້ສຳເລັດໂຄງການສ້າງໂຮງງານຕົວແບບດ້ານການຜະລິດທີ່ດີ (GMP) ແລະ ການນຳໃຊ້ລະບົບການວິເຄາະ ແລະ ຄວບຄຸມຈຸດວິກິດ (HACCP) ເພື່ອຍົກລະດັບຄຸນນະພາບ ແລະ ຄວາມປອດໄພຂອງອາຫານໃຫ້ແກ່ 3 ໂຮງງານ ເຊັ່ນ: ໂຮງງານປາແດກຮຸ່ງເຮືອງສິນ, ໂຮງງານລູກຊີ້ນຮ່ອງເຕ້ ແລະ ໂຮງງານກາເຟເລີທຣີໂອ ຊຶ່ງໂຄງການດັ່ງກ່າວຈັດຕັ້ງປະຕິບັດແຕ່ເດືອນ 8/2013 – 11/2014.

### 2.1.7 ການສົ່ງເສີມການເຂົ້າເຖິງຕະຫລາດ ແລະ ການຂະຫຍາຍຕະຫລາດຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ

ໄດ້ດຳເນີນການວິໄຈ ແລະ ພັດທະນາຕ່ອງໂສ້ມູນຄ່າເພີ່ມ (Value Chain) ສິນຄ້າທີ່ເປັນທ່າແຮງຂອງ ສປປ ລາວ ຈຳນວນໜຶ່ງ ເຊັ່ນ: ໄມ້ປ່ອງ, ຜ້າໄໝ, ເຂົ້າອິນຊີ, ປໍສາ, ກາເຟອິນຊີ. ພ້ອມດຽວກັນ ກໍ່ໄດ້ສົ່ງເສີມຜູ້ປະກອບກິດຈະການດ້ານທຸລະກິດຜ້າໄໝ ແລະ ເຂົ້າອິນຊີ ໃຫ້ສ້າງຕັ້ງກຸ່ມຜູ້ຜະລິດເພື່ອສົ່ງອອກ ແລະ ໄດ້ນຳເອົາສິນຄ້າໄປຮ່ວມວາງສະແດງຢູ່ຕ່າງປະເທດ. ປະຈຸບັນ ກຳລັງດຳເນີນການສົ່ງເສີມເພື່ອພັດທະນາຕ່ອງໂສ້ມູນຄ່າເພີ່ມ (Value Chain) ຂອງໃບຊາລາວໃຫ້ເປັນລະບົບ ໂດຍໄດ້ຊ່ວຍສົ່ງເສີມພາກທຸລະກິດທີ່ຜະລິດຊາໃຫ້ສາມາດຈັດຕັ້ງເປັນສະມາຄົມຊາລາວໃນຕໍ່ໜ້າ. ກອງທຶນສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ໄດ້ໃຫ້ການສະໜັບສະໜູນທຶນແກ່ໂຄງການສົ່ງເສີມດ້ານຕະຫລາດທີ່ຈັດຕັ້ງປະຕິບັດໂດຍສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ແລະ ບັນດາສະມາຄົມທຸລະກິດຕ່າງໆ ຈຳນວນ 06 ໂຄງການ ເປັນຈຳນວນເງິນທັງໝົດປະມານ 1,5 ຕື້ກີບ ເຊັ່ນ: ງານມະຫາກຳສີມືຫັດຖະກຳ ຄັ້ງທີ 11-14 ໃນໄລຍະປີ 2012-2015, ງານວາງສະແດງຫັດຖະກຳແຜ່ນແພທີ່ປະເທດຟີລິບປິນ ຂອງສະມາຄົມຫັດຖະກຳ, ງານເທດສະການອາຫານລາວ ຄັ້ງທີ 9-10 ໃນໄລຍະປີ 2014-2015 ຂອງສະມາຄົມນັກທຸລະກິດຍິງ, ງານວາງສະແດງສິນຄ້າ Made in Laos 2014 ແລະ ການໄປສຳຫລວດຕະຫລາດເຂົ້າ ແລະ ງານວາງສະແດງໂລກ ທີ່ປະເທດອີຕາລີຂອງສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ, ການສຳມະນາໃນຫົວຂໍ້ "ການສ້າງຄວາມເຂັ້ມແຂງໃຫ້ແກ່ວິສາຫະກິດຂະໜາດນ້ອຍ ແລະ ກາງ ເພື່ອກຽມເຂົ້າສູ່ປະຊາຄົມເສດຖະກິດອາຊຽນ" ແລະ ກອງປະຊຸມສຳມະນາ "ເປີດໂອກາດສູ່ຕະຫລາດ AEC" ຂອງສະມາຄົມນັກທຸລະກິດໜຸ່ມ.

## 2.2 ການຍາດແຍ່ງການຮ່ວມມືກັບປະເທດເພື່ອນມິດ ແລະ ອົງການຈັດຕັ້ງສາກົນ

ການອອກກົດໝາຍວ່າດ້ວຍການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ສະບັບເລກທີ 11/ສພຊ, ລົງວັນທີ 21 ທັນວາ 2011 ໄດ້ເພີ່ມການດຶງດູດການຊ່ວຍເຫລືອຈາກບັນດາປະເທດເພື່ອນມິດ ແລະ ອົງການຈັດຕັ້ງສາກົນ ຍ້ອນວ່າລັດຖະບານໄດ້ກຳນົດນະໂຍບາຍທີ່ຈະແຈ້ງກ່ຽວກັບການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ກໍ່ຄືພາກທຸລະກິດເອກະຊົນ. ພ້ອມດຽວກັນນັ້ນ, ການມີແຜນພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ 2011-2015 ໄດ້ເຮັດໃຫ້ການລະດົມທຶນ ແລະ ການຍາດແຍ່ງການຊ່ວຍເຫລືອທາງດ້ານວິຊາການດຳເນີນໄປຢ່າງມີຈຸດສຸມ ແລະ ສາມາດນຳໃຊ້ເຂົ້າໃນການສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ໄດ້ຢ່າງເປັນລະບົບ ແລະ ຕໍ່ເນື່ອງ ບໍ່ວ່າຈະເປັນການສົ່ງເສີມທາງກົງໃຫ້ແກ່ວິສາຫະກິດຂະໜາດນ້ອຍ ແລະ ກາງ ໂດຍຜ່ານການຝຶກອົບຮົມ, ການໃຫ້ຄຳປຶກສາ ແລະ ອື່ນໆ ກໍ່ຄືການສົ່ງເສີມທາງອ້ອມໂດຍຜ່ານການປັບປຸງສະພາບແວດລ້ອມການດຳເນີນທຸລະກິດ ເປັນຕົ້ນແມ່ນການເຮັດໃຫ້ລະບຽບການ ແລະ ຂັ້ນຕອນການຄຸ້ມຄອງ ແລະ ກວດກາຂອງລັດຕໍ່ທຸລະກິດມີຄວາມກະທັດຮັດ, ສະດວກ ແລະ ວ່ອງໄວ ແນໃສ່ຫລຸດຜ່ອນຕົ້ນທຶນການຜະລິດ ແລະ ການບໍລິການຂອງວິສາຫະກິດ. ການຮ່ວມມືກັບບັນດາປະເທດເພື່ອນມິດ ແລະ ອົງການຈັດຕັ້ງສາກົນທີ່ພົ້ນເດັ່ນໃນໄລຍະຜ່ານມາ ມີດັ່ງນີ້: ອົງການພັດທະນາຂອງປະເທດເຢຍລະມັນ (GIZ), ທະນາຄານພັດທະນາອາຊີ (ADB), ທະນາຄານໂລກ (WB) ແລະ ອົງການຜະລິດຕະພາບແຫ່ງອາຊີ (APO).

# III. ອຸປະສັກ ແລະ ສິ່ງທ້າທາຍຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ

ອີງໃສ່ໂຄງປະກອບຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ຂອງປະເທດພວກເຮົາ ເຫັນວ່າ 63% ແມ່ນດຳເນີນທຸລະກິດໃນຂະແໜງການຄ້າ, ຂາຍຍົກ, ຂາຍຍ່ອຍ ແລະ ສ້ອມແປງລົດ; ຂະແໜງອຸດສາຫະກຳປຸງແຕ່ງ ກວມ 12,5%; ຂະແໜງບໍລິການອາຫານ ແລະ ທີ່ພັກ ກວມ 11,7% ແລະ ຂະແໜງການອື່ນໆກວມ 13%. ເຖິງແມ່ນວ່າວິສາຫະກິດຂະໜາດນ້ອຍ ແລະ ກາງ ຈະກວມເອົາຈຳນວນຫລວງຫລາຍ, ແຕ່ 86% ຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ກໍ່ຍັງຈັດເປັນປະເພດຈຸນລະວິສາຫະກິດ ທີ່ມີແຮງງານ ແຕ່ 1-5 ຄົນ ຊຶ່ງສ່ວນໃຫຍ່ແມ່ນດຳເນີນທຸລະກິດຢູ່ນອກລະບົບ ແບບເອກະເທດ ຫລື ເປັນລັກສະນະການສ້າງເສດຖະກິດຄອບຄົວ ບໍ່ໄດ້ຂຶ້ນທະບຽນວິສາຫະກິດຢ່າງເປັນທາງການ.

ຈາກຕົວເລກດັ່ງກ່າວສະແດງໃຫ້ເຫັນວ່າ ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນປະເທດພວກເຮົາແມ່ນມີຈຸດເລີ່ມຕົ້ນທີ່ຕ່ຳຫລາຍ ເປັນທຸລະກິດແບບພື້ນຖານ ງ່າຍດາຍ ບໍ່ໄດ້ນຳໃຊ້ວິທະຍາສາດ ວິທະຍາການ ແລະ ເຕັກໂນໂລຊີທີ່ກ້າວໜ້າເຂົ້າໃນການຜະລິດ ແລະ ການຄຸ້ມຄອງ ເຮັດໃຫ້ການສ້າງມູນຄ່າເພີ່ມຈຶ່ງມີໜ້ອຍ, ຄຸນນະພາບ ແລະ ມາດຖານຜະລິດຕະພັນກໍ່ຕ່ຳ.

ລະບຽບການ ແລະ ການຄຸ້ມຄອງຂອງລັດ ຂອງບັນດາຂະແໜງການ ຕໍ່ການຈັດຕັ້ງ ແລະ ເຄື່ອນໄຫວຂອງທຸລະກິດ ຍັງບໍ່ໄປທິດທາງດຽວກັນ ໂດຍສະເພາະແມ່ນການຂຶ້ນທະບຽນວິສາຫະກິດ ແລະ ການອອກອະນຸຍາດຈາກຂະແໜງການຕ່າງໆຍັງໃຊ້ເວລາ ແລະ ມີຄ່າໃຊ້ຈ່າຍສູງ, ບາງຄັ້ງກໍ່ບໍ່ຄົງທີ່ ແລະ ບໍ່ສາມາດຄາດເດົາໄດ້. ອີງຕາມຜົນສຳຫລວດຂອງທະນາຄານພັດທະນາອາຊີ ໃນປີ 2010 ເຫັນວ່າ ຄ່າໃຊ້ຈ່າຍຂອງພາກທຸລະກິດໃນການຈັດຕັ້ງປະຕິບັດລະບຽບການຂອງລັດ ປະມານ 3% ຂອງ GDP.

### 3.1 ດ້ານຜະລິດຕະພາບ, ເຕັກໂນໂລຊີ ແລະ ນະວັດຕະກຳ

ຜະລິດຕະພາບແມ່ນການປຽບທຽບລະຫວ່າງຜົນໄດ້ຮັບ ແລະ ປັດໄຈນຳເຂົ້າຂອງການເຄື່ອນໄຫວວຽກງານໃດໜຶ່ງ ຈະເປັນການເຄື່ອນໄຫວວຽກງານຂອງອົງການຂອງລັດ ຫລື ພາກເອກະຊົນ. ຈາກການສຳຫລວດຂອງອົງການຜະລິດຕະພາບແຫ່ງອາຊີ (Asian Productivity Organization ຫລື APO) ໄດ້ປະເມີນໄວ້ໃນປຶ້ມລາຍງານ Productivity DATA BOOK 2016 ວ່າ: ໃນປີ 2014 ແຮງງານຂອງ ສປປ ລາວ 1 ຄົນສາມາດຜະລິດໄດ້ໃນມູນຄ່າ 9.000 ໂດລາ/ຄົນ/ປີ ຫລື 72.900.000 ກີບ/ຄົນ/ປີ. ຖ້າທຽບໃສ່ຜະລິດຕະພາບດ້ານແຮງງານຂອງບັນດາປະເທດສະມາຊິກອາຊຽນແລ້ວ ເຫັນວ່າຜະລິດຕະພາບດ້ານແຮງງານຂອງລາວຍັງຕ່ຳຫລາຍ ເຊັ່ນ: ປະເທດສິງກະໂປ 125.400 ໂດລາ, ມາເລເຊຍ 54.400 ໂດລາ ແລະ ປະເທດໄທ 25.500 ໂດລາ/ຄົນ/ປີ. ເນື່ອງຈາກວິສາຫະກິດຂະໜາດນ້ອຍ ແລະ ກາງ ສ່ວນໃຫຍ່ຍັງນຳໃຊ້ເຕັກໂນໂລຊີທີ່ຫລ້າຫລັງ ເຖິງແມ່ນວ່າຈະມີການຊຸກຍູ້ສົ່ງເສີມໃຫ້ເຂົ້າເຖິງເຕັກໂນໂລຊີອັນໃໝ່ໆ ເຊັ່ນ: ມີການລິເລີ່ມຈັດງານວາງສະແດງຕະຫລາດນັດເຕັກໂນໂລຊີແລ້ວກໍ່ຕາມ. ພ້ອມກັນນີ້ ວິສາຫະກິດຂະໜາດນ້ອຍ ແລະ ກາງ ຍັງຂາດແນວຄວາມຄິດຄົ້ນຄິດນະວັດຕະກຳໃໝ່ໆອອກມາດ້ວຍຕົນເອງ ສ່ວນໃຫຍ່ແມ່ນເບິ່ງຕາມປະເທດເພື່ອນບ້ານ ແລ້ວນຳມາຜະລິດດ້ວຍຕົນເອງ. ນອກນີ້ ຍັງຂາດບັນດາສະຖາບັນຄົ້ນຄວ້າວິໄຈເພື່ອຜະລິດນະວັດຕະກຳໃໝ່ໆອອກມາ ເພື່ອກາຍເປັນສິນຄ້າ.

### 3.2 ດ້ານການເຂົ້າເຖິງສິນເຊື່ອ ຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ

ວິສາຫະກິດຂະໜາດນ້ອຍ ແລະ ກາງ ແມ່ນມີຄວາມຫຍຸ້ງຍາກຫລາຍໃນການເຂົ້າເຖິງສິນເຊື່ອຂອງທະນາຄານ ແລະ ສະຖາບັນການເງິນຂອງລັດ, ຂາດເງິນທຶນໄລຍະຍາວເພື່ອການລົງທຶນ ແລະ ການດຳເນີນທຸລະກິດ, ມີປະມານ 20% ຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ທີ່ສາມາດເຂົ້າເຖິງແຫລ່ງທຶນຂອງທະນາຄານທຸລະກິດ.

ການປະກອບເອກະສານເພື່ອຂໍເງິນກູ້ຈາກທະນາຄານມີຫລາຍຂັ້ນຕອນ, ໃຊ້ເວລາດົນ ແລະ ມີຄ່າໃຊ້ຈ່າຍສູງ, ອັດຕາດອກເບ້ຍເງິນກູ້ກໍ່ສູງ ເນື່ອງຈາກວ່າແຫລ່ງທຶນຂອງທະນາຄານທຸລະກິດແມ່ນໄດ້ມາຈາກການລະດົມເງິນຝາກຈາກສັງຄົມເປັນຕົ້ນຕໍ ຊຶ່ງເປັນແຫລ່ງທຶນທີ່ມີຕົ້ນທຶນສູງ ແລະ ມີໄລຍະສັ້ນ. ການສະໜັບສະໜູນດ້ານແຫລ່ງທຶນຂອງລັດໃຫ້ແກ່ທະນາຄານ ເພື່ອປ່ອຍກູ້ໃຫ້ແກ່ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນເງື່ອນໄຂທີ່ເໝາະສົມແມ່ນຍັງມີຈຳກັດ, ການບໍລິການສິນເຊື່ອຂອງທະນາຄານມີການຮຽກຮ້ອງໃຫ້ມີຫລັກຊັບຄ້ຳປະກັນສູງກວ່າເງິນກູ້, ຮູບແບບໃນການບໍລິການກໍ່ຍັງມີຈຳກັດ.

ຄວາມຊຳນານໃນການວາງແຜນ ແລະ ຄຸ້ມຄອງດ້ານການເງິນຂອງວິສາຫະກິດຂະໜາດນ້ອຍ ແລະ ກາງຍັງມີຈຳກັດ, ຂາດຊັບສິນ ຫລື ຊັບສິນບໍ່ພຽງພໍເພື່ອຄ້ຳປະກັນໃນການຂໍກູ້ຢືມເງິນ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ບາງຈຳນວນ ໂດຍສະເພາະແມ່ນ ຈຸນລະວິສາຫະກິດ ຍັງບໍ່ຂຶ້ນທະບຽນວິສາຫະກິດ, ບໍ່ຖືບັນຊີທີ່ຖືກຕ້ອງ ແລະ ຄົບຖ້ວນ ເຮັດໃຫ້ທະນາຄານບໍ່ສາມາດປະເມີນສະຖານະທາງການເງິນໄດ້, ບໍ່ເຄີຍໃຊ້ບໍລິການຂອງທະນາຄານ ຍັງຂາດຂໍ້ມູນກ່ຽວກັບແຫລ່ງທຶນ ແລະ ວິສາຫະກິດຂະໜາດນ້ອຍ ແລະ ກາງ ບາງຈຳນວນບໍ່ປະຕິບັດພັນທະສັນຍາທີ່ຕົກລົງກັບທະນາຄານ. ຍັງຂາດລະບົບ ແລະ ສະຖາບັນດ້ານວິຊາການທີ່ສາມາດບໍລິການວິຊາການກ່ຽວກັບການວາງແຜນທຸລະກິດ ແລະ ການຖືບັນຊີ.

ພ້ອມນີ້ ການບັງຄັບໃຊ້ກົດໝາຍໃນຂົງເຂດເສດຖະກິດຍັງບໍ່ມີປະສິດທິພາບເພື່ອແກ້ໄຂຂໍ້ຂັດແຍ່ງໃນກໍລະນີມີການຜິດສັນຍາລະຫວ່າງທະນາຄານ ກັບວິສາຫະກິດຂະໜາດນ້ອຍ ແລະ ກາງ. ນອກນັ້ນລະບົບຂໍ້ມູນຂ່າວສານກ່ຽວກັບປະຫວັດດ້ານສິນເຊື່ອຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ແລະ ຂອງບຸກຄົນທີ່ຈະສະເໜີເງິນກູ້ຍັງມີຈຳກັດ ເຮັດໃຫ້ທະນາຄານພິຈາລະນາໃນການປ່ອຍກູ້ໃຫ້ແກ່ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃຊ້ໄລຍະເວລາດົນໃນການປະເມີນຄວາມສ່ຽງ.

## 3.3 ການເຂົ້າເຖິງການບໍລິການໃຫ້ຄຳປຶກສາພັດທະນາທຸລະກິດ

ການເຂົ້າເຖິງການຊ່ວຍເຫລືອດ້ານວິຊາການຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນໄລຍະຜ່ານມາ ຍັງມີໜ້ອຍ. ຕາມການສຳຫລວດວິສາຫະກິດຂອງອົງການ GIZ ໃນປີ 2013 ເຫັນວ່າ ມີພຽງ 2,54% ຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ທີ່ສາມາດເຂົ້າເຖິງການບໍລິການໃຫ້ຄຳປຶກສາພັດທະນາທຸລະກິດ. ສະຖາບັນວິຊາການ ແລະ ຜູ້ຊ່ຽວຊານດ້ານຕ່າງໆທີ່ວິສາຫະກິດຂະໜາດນ້ອຍ ແລະ ກາງ ມີຄວາມຕ້ອງການ ມີຈຳກັດ ເຊັ່ນ: ດ້ານປັບປຸງຄຸນນະພາບ, ດ້ານການພັດທະນາຜະລິດຕະພັນ, ການເງິນ-ການບັນຊີ, ການວາງແຜນການຕະຫລາດ, ດ້ານກົດໝາຍ, ເຕັກນິກວິຊາການໃນຂະແໜງວິຊາຊີບຕ່າງໆ.

ທີ່ຜ່ານມາ ວິສາຫະກິດຂະໜາດນ້ອຍ ແລະ ກາງ ຍັງບໍ່ທັນຮັບຮູ້ເຖິງຄວາມສຳຄັນຂອງການຊ່ວຍເຫລືອວິຊາການ ໂດຍການນຳໃຊ້ການບໍລິການໃຫ້ຄຳປຶກສາພັດທະນາທຸລະກິດ ຍ້ອນວ່າໜ່ວຍງານທີ່ສະໜອງບໍລິການໃຫ້ຄຳປຶກສາພັດທະນາທຸລະກິດກໍ່ຍັງມີຈຳກັດ ທັງທາງດ້ານປະລິມານ, ຄຸນນະພາບ ແລະ ອີກດ້ານໜຶ່ງຄວາມສາມາດທາງດ້ານທຶນຮອນໃນການຈັດຈ້າງຜູ້ຊ່ຽວຊານຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ຍັງມີຈຳກັດ.

ໃນໄລຍະຜ່ານມາການສະໜັບສະໜູນທຶນຮອນຈາກພາກລັດ ໃນການດຳເນີນໂຄງການສະໜັບສະໜູນດ້ານວິຊາການຍັງມີຈຳກັດ ສ່ວນໃຫຍ່ແມ່ນອາໄສໂຄງການຊ່ວຍເຫລືອຈາກຕ່າງປະເທດ ຊຶ່ງບາງຄັ້ງກໍ່ບໍ່ສອດຄ່ອງກັບຄວາມຈຳເປັນຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ.

## 3.4 ການເຂົ້າເຖິງຕະຫລາດ

ວິສາຫະກິດຂະໜາດນ້ອຍ ແລະ ກາງ ຍັງມີຄວາມຫຍຸ້ງຍາກຫລາຍໃນການເຂົ້າເຖິງຕະຫລາດ ໂດຍສະເພາະແມ່ນຕະຫລາດພາກພື້ນ ແລະ ສາກົນ. ອີງຕາມການສຳຫລວດເບື້ອງຕົ້ນຂອງບໍລິສັດທີ່ປຶກສາ PricewaterhouseCoopers (PWC) ໂດຍການສະໜັບສະໜູນຂອງລັດຖະບານຍີ່ປຸ່ນໃນຂອບການຮ່ວມມືລະຫວ່າງອາຊຽນ-ຍີ່ປຸ່ນ ສະແດງໃຫ້ເຫັນວ່າມູນຄ່າການສົ່ງອອກຂອງວິສາຫະກິດຂະໜາດນ້ອຍ ແລະ ກາງກວມເອົາພຽງແຕ່ 12,91% ຂອງມູນຄ່າການສົ່ງອອກທັງໝົດ ໃນປີ 2016. ສາເຫດທີ່ເຮັດໃຫ້ຜະລິດຕະພັນຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ບໍ່ສາມາດເຂົ້າເຖິງ ແລະ ຂະຫຍາຍຕະຫລາດໄດ້ຢ່າງກວ້າງຂວາງ ກໍ່ແມ່ນຍ້ອນຂາດຂໍ້ມູນຂ່າວສານທີ່ຄົບຖ້ວນ ແລະ ເປັນລະບົບ, ການດຳເນີນການສົ່ງອອກຍັງມີຄວາມຫຍຸ້ງຍາກ, ຂາດການສະໜັບສະໜູນທາງດ້ານທຶນຮອນເພື່ອການສົ່ງອອກ, ການຜະລິດສິນຄ້າຍັງເປັນລັກສະນະເອກະເທດກະແຈກກະຈາຍ ບໍ່ມີການຮ່ວມກຸ່ມທຸລະກິດ (Cluster) ແລະ ການຜະລິດຍັງບໍ່ເຊື່ອມໂຍງກັບຕ່ອງໂສ້ມູນຄ່າ

ເພີ່ມ (Value Chain) ຂອງການຜະລິດຂອງພາກພື້ນ ແລະ ສາກົນ. ມາດຕະຖານ ແລະ ຄຸນນະພາບຂອງຜະລິດຕະພັນກໍ່ບໍ່ສາມາດຕອບສະໜອງຕາມຄວາມຮຽກຮ້ອງຕ້ອງການຂອງຕະຫລາດໄດ້.

### 3.5 ການກໍ່ສ້າງຜູ້ປະກອບກິດຈະການ

ຕາມການສຳຫລວດເສດຖະກິດທົ່ວປະເທດ ປີ 2013 ສະແດງໃຫ້ເຫັນວ່າ ປະຊາກອນທຸລະກິດຂອງ ສປປ ລາວ ມີປະມານ 2% ຂອງຈຳນວນປະຊາກອນທັງໝົດເທົ່ານັ້ນ. ບັນດາສາເຫດທີ່ເຮັດໃຫ້ຄົນໃນສັງຄົມບໍ່ນິຍົມເປັນຜູ້ປະກອບກິດຈະການໃນຂະແໜງວິຊາຊີບຕ່າງໆປະກອບດ້ວຍ ລະບຽບການໃນການອຳນວຍຄວາມສະດວກໃນການສ້າງຕັ້ງ ແລະ ດຳເນີນທຸລະກິດມີຫລາຍຂັ້ນຂອດ, ເຫັນວ່າການປະກອບກິດຈະການໃນຂະແໜງວິຊາຊີບຕ່າງໆເປັນອາຊີບທີ່ສ່ຽງ ແລະ ບໍ່ໝັ້ນຄົງ, ສິ່ງຈູງໃຈ ແລະ ມາດຕະການໃນການຊຸກຍູ້ສົ່ງເສີມຍັງມີຈຳກັດ ເຊັ່ນ: ແຫລ່ງທຶນ, ນະໂຍບາຍດ້ານພາສີ-ອາກອນ, ສະຖາບັນທີ່ສະໜອງຄວາມຮູ້ກ່ຽວກັບການປະກອບກິດຈະການໃນຂະແໜງການຕ່າງໆ, ຂໍ້ມູນຂ່າວສານດ້ານໂອກາດທາງທຸລະກິດ, ມາດຕະການ ແລະ ໂຄງການສະໜັບສະໜູນຜູ້ປະກອບກິດຈະການໃໝ່ (Start Up) ກໍ່ເຊັ່ນດຽວກັນ.

### 3.6 ສະພາບແວດລ້ອມຂອງການດຳເນີນທຸລະກິດ

ສະພາບແວດລ້ອມໃນການສ້າງຕັ້ງ ແລະ ການດຳເນີນທຸລະກິດຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ແມ່ນຍັງບໍ່ເອື້ອອຳນວຍເທົ່າທີ່ຄວນ, ອີງຕາມການສຳຫລວດຂອງທະນາຄານໂລກກ່ຽວກັບການດຳເນີນທຸລະກິດປີ 2017 ສປປ ລາວ ຖືກຈັດຢູ່ລຳດັບທີ 139 (ລຳດັບລວມ) ແລະ ລຳດັບ 160 (ສຳລັບການກໍ່ຕັ້ງທຸລະກິດໃໝ່) ຈາກ 190 ປະເທດ ຫລື ເຂດເສດຖະກິດ, ສ່ວນປະເທດສິງກະໂປຈັດຢູ່ໃນລຳດັບ 2 ແລະ 6, ສສ ຫວຽດນາມ ລຳດັບ 82 ແລະ 121, ກຳປູເຈຍ 131 ແລະ 180. ເຖິງວ່າໄດ້ມີນະໂຍບາຍ ແລະ ນິຕິກຳເພື່ອປັບປຸງສະພາບແວດລ້ອມດ້ານທຸລະກິດແລ້ວກໍ່ຕາມ ແຕ່ການຈັດຕັ້ງປະຕິບັດຍັງເປັນລັກສະນະຊັກຊ້າ ຍັງບໍ່ມີຄວາມເປັນເອກະພາບລະຫວ່າງຂະແໜງການກ່ຽວຂ້ອງ ຍັງຂາດການປະສານງານກັນລະຫວ່າງຂະແໜງການຂອງພາກລັດ. ການອອກອະນຸຍາດດຳເນີນທຸລະກິດ ຍັງມີຫລາຍຂອດຫລາຍຂັ້ນ ໃຊ້ເວລາ, ແຮງງານ ແລະ ຄ່າໃຊ້ຈ່າຍສູງ.

### 3.7 ອຸປະສັກ ແລະ ສິ່ງທ້າທາຍອື່ນໆ

ນອກຈາກອຸປະສັກ ແລະ ສິ່ງທ້າທາຍທີ່ກ່າວມາຂ້າງເທິງແລ້ວ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ຍັງປະເຊີນກັບອຸປະສັກ ແລະ ສິ່ງທ້າທາຍທີ່ປິ່ນອ້ອມອີກຫລາຍຢ່າງ ເຊັ່ນ: ພະນັກງານທີ່ເຮັດໜ້າທີ່ສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ມີຈຳກັດ, ທຶນທີ່ໃຊ້ເຂົ້າໃນວຽກງານບໍລິຫານບໍ່ພຽງພໍ, ໂຄງລ່າງທາງດ້ານສະຖາບັນ ແລະ ດ້ານວັດຖຸເຕັກນິກທີ່ເຮັດການສົ່ງເສີມ ແລະ ອຳນວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ຍັງບໍ່ເຂັ້ມແຂງ, ການປະສານງານກັນລະຫວ່າງພາກລັດ ແລະ ພາກສ່ວນທີ່ກ່ຽວຂ້ອງຍັງມີຄວາມຫຍຸ້ງຍາກ ແລະ ຍັງບໍ່ເປັນເອກະພາບກັນ. ວິສາຫະກິດຂະໜາດນ້ອຍ ແລະ ກາງ ຍັງບໍ່ມີຫົວຄິດປະດິດສ້າງ ແລະ ນະວັດຕະກຳຕ່າງໆເພື່ອພັດທະນາຜະລິດຕະພັນ ແລະ ສິນຄ້າ ໃຫ້ເປັນທີ່ຍອມຮັບຂອງຕະຫລາດສະໄໝໃໝ່.

# IV. ແຜນພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ 2016-2020

ເພື່ອສືບຕໍ່ເສີມຂະຫຍາຍບົດບາດຄວາມສຳຄັນຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ຊຶ່ງເປັນພື້ນຖານເສດຖະກິດຂອງຊາດ, ການສ້າງວຽກເຮັດງານທຳ ແລະ ການສ້າງລາຍຮັບໃຫ້ປະຊາຊົນລາວບັນດາເຜົ່າ ທັງເປັນການຜັນຂະຫຍາຍທິດທາງ ແລະ ໜ້າທີ່ການພັດທະນາເສດຖະກິດ-ສັງຄົມຂອງລັດຖະບານ ໃນການຊຸກຍູ້ສົ່ງເສີມພາກສ່ວນເສດຖະກິດເອກະຊົນ ແລະ ເສດຖະກິດຮ່ວມມືຂອງປະຊາຊົນ, ສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ໃຫ້ເຕີບໃຫຍ່ຂະຫຍາຍຕົວ ບົນພື້ນຖານບົດຮຽນທີ່ຖອດຖອນໄດ້ຈາກການຈັດຕັ້ງປະຕິບັດແຜນພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ 2011-2015, ແຜນພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ 2016-2020 ແມ່ນຍັງສືບຕໍ່ຜັນຂະຫຍາຍ 13 ກິດຈະການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ສະບັບເລກທີ 11/ສພຊ, ລົງວັນທີ 21 ທັນວາ 2011 ແຕ່ໄດ້ມີການເລືອກເຟັ້ນ ແລະ ຈັດລຽງບູລິມະສິດເພື່ອໃຫ້ມີຄວາມແທດເໝາະກັບສະພາບປະຈຸບັນ ໂດຍສະເພາະແມ່ນເພື່ອສ້າງເງື່ອນໄຂໃຫ້ວິສາຫະກິດຂະໜາດນ້ອຍ ແລະ ກາງ ຂອງ ສປປ ລາວ ສາມາດເຊື່ອມຕົວເຂົ້າກັບເສດຖະກິດຂອງພາກພື້ນ ແລະ ສາກົນ ເປັນຕົ້ນແມ່ນປະຊາຄົມເສດຖະກິດອາຊຽນທີ່ໄດ້ຮັບການສ້າງຕັ້ງຢ່າງເປັນທາງການ ໃນທ້າຍປີ 2015.

ສະນັ້ນ, ແຜນພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ 2016-2020 ສະບັບນີ້ ໄດ້ເນັ້ນໃສ່ 7 ວຽກງານຈຸດສຸມເປັນນະໂຍບາຍຫລັກ ຊຶ່ງປະກອບດ້ວຍບັນດາມາດຕະການ, ໂຄງການ ແລະ ກິດຈະກຳຕ່າງໆ ເພື່ອຈັດຕັ້ງປະຕິບັດ ແນໃສ່ສ້າງຜົນກະທົບທາງບວກຕໍ່ວິສາຫະກິດຂະໜາດນ້ອຍ ແລະ ກາງ ແລະ ໄດ້ຖືກບັນຈຸຊັບຊ້ອນເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020) ແລະ ສອດຄ່ອງກັບແຜນຍຸດທະສາດພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ 2016-2025 ຂອງອາຊຽນທີ່ຖືກຮັບຮອງ ແລະ ປະກາດໃຊ້ແລ້ວ.

## 4.1 ວິໄສທັດ ແລະ ຈຸດປະສົງ

### 4.1.1 ວິໄສທັດ

ວິສາຫະກິດຂະໜາດນ້ອຍ ແລະ ກາງເປັນພາກສ່ວນທີ່ສຳຄັນໃນການປະກອບສ່ວນເຂົ້າໃນເສດຖະກິດຂອງຊາດ, ມີຄວາມສາມາດເຊື່ອມຕົວເຂົ້າຮ່ວມການຜະລິດ ແລະ ແລກປ່ຽນສິນຄ້າ ຢູ່ໃນພາກພື້ນ ແລະ ສາກົນ, ດຳເນີນທຸລະກິດພາຍໃຕ້ສະພາບແວດລ້ອມທີ່ເອື້ອອຳນວຍ ແລະ ມີກົນໄກສະໜັບສະໜູນຢ່າງມີປະສິດທິພາບ.

### 4.1.2 ຈຸດປະສົງ

ເພື່ອສ້າງສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ການເຄື່ອນໄຫວທຸລະກິດ ແລະ ສ້າງເງື່ອນໄຂໃຫ້ວິສາຫະກິດຂະໜາດນ້ອຍ ແລະ ກາງ ໄດ້ປັບປຸງຕົນເອງ ແລະ ເພີ່ມຄວາມສາມາດໃນການແຂ່ງຂັນ ເພື່ອຄວາມຄົງຕົວ ແລະ ເຕີບໃຫຍ່ຂະຫຍາຍຕົວພາຍໃຕ້ເງື່ອນໄຂຂອງການເປີດເສລີທາງການຄ້າ.

## 4.2 ນະໂຍບາຍສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ 2016-2020

### 4.2.1 ນະໂຍບາຍສົ່ງເສີມການເພີ່ມຜະລິດຕະພາບ, ເຕັກໂນໂລຊີ ແລະ ນະວັດຕະກຳ

- ສົ່ງເສີມການປັບປຸງຍົກລະດັບປະສິດທິພາບ ໃນການຄຸ້ມຄອງການຜະລິດ ແລະ ການບໍລິການ, ປັບປຸງຄຸນນະພາບ ແລະ ມາດຕະຖານຂອງຜະລິດຕະພັນ ໂດຍການສະໜອງການຝຶກອົບຮົມ ແລະ ການບໍລິການໃຫ້ຄໍາປຶກສາພັດທະນາທຸລະກິດ ເຮັດໃຫ້ວິສາຫະກິດຂະໜາດນ້ອຍ ແລະ ກາງ ສາມາດແຂ່ງຂັນທາງດ້ານລາຄາ ແລະ ຄຸນນະພາບ ທັງຢູ່ໃນຕະຫລາດພາຍໃນປະເທດ ແລະ ຕະຫລາດຕ່າງປະເທດ.
- ສະໜອງທຶນສົມທົບສູງສຸດບໍ່ເກີນ 50% ເພື່ອລົງທຶນໃນການປ່ຽນຖ່າຍເຕັກໂນໂລຊີ ເນື່ອງຈາກວ່າວິສາຫະກິດຂະໜາດນ້ອຍ ແລະ ກາງ ສ່ວນໃຫຍ່ແມ່ນນຳໃຊ້ເຄື່ອງມື ແລະ ເຕັກໂນໂລຊີການຜະລິດທີ່ຫລ້າຫລັງ ຊຶ່ງເປັນສາເຫດໃຫ້ການຜະລິດທີ່ເປັນມູນເຊື້ອຈຳນວນໜຶ່ງໄດ້ຢຸດເຊົາກິດຈະການ.
- ຝຶກອົບຮົມ ແລະ ເຜີຍແຜ່ກ່ຽວກັບຂ່າວສານນະວັດຕະກຳໃໝ່ໆໃນການຄຸ້ມຄອງການຜະລິດ, ການອອກແບບ ແລະ ພັດທະນາສິນຄ້າ, ການປັບປຸງເຕັກໂນໂລຊີການຜະລິດ ແລະ ການບໍລິການ.
- ສະໜັບສະໜູນດ້ານງົບປະມານໃຫ້ແກ່ສະຖາບັນການສຶກສາ ແລະ ພາກທຸລະກິດໃນການຄົ້ນຄວ້າພັດທະນາ ແລະ ຖ່າຍທອດເຕັກໂນໂລຊີໃຫ້ແກ່ການຜະລິດທຸລະກິດຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ.
- ປົກປ້ອງຊັບສິນທາງປັນຍາຂອງນັກປະດິດຄິດແຕ່ງ ໂດຍການສ້າງເງື່ອນໄຂໃຫ້ເຂົາເຈົ້າໄດ້ຈົດທະບຽນຊັບສິນທາງປັນຍາ ແລະ ໃຊ້ມາດຕະການທີ່ເດັດຂາດຕໍ່ຜູ້ທີ່ລະເມີດຊັບສິນທາງປັນຍາ.
- ສະໜັບສະໜູນທຶນ ແລະ ໃຫ້ບໍລິການຄໍາປຶກສາແກ່ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃຫ້ສາມາດໄດ້ຮັບການຢັ້ງຢືນຄຸນນະພາບ ແລະ ມາດຕະຖານຂອງການຜະລິດ ແລະ ການບໍລິການ.
- ສ້າງໃຫ້ມີລະບົບການຍ້ອງຍໍແກ່ວິສາຫະກິດຂະໜາດນ້ອຍ ແລະ ກາງ ທີ່ປະສົບຜົນສຳເລັດໃນການສ້າງນະວັດຕະກຳດ້ານຕ່າງໆ ເຊັ່ນ: ການອອກແບບ ແລະ ພັດທະນາສິນຄ້າທີ່ມີຄວາມໂດດເດັ່ນ ທາງດ້ານຄຸນນະພາບ ແລະ ມີປະໂຫຍດໃຊ້ສອຍ ແລະ ເປັນທີ່ຍອມຮັບຂອງຕະຫລາດ, ການປັບປຸງດ້ານເຕັກໂນໂລຊີທີ່ມີຄວາມທັນສະໄໝ ແລະ ກ້າວໜ້າ, ວິທີການຄຸ້ມຄອງການຜະລິດ ແລະ ທຸລະກິດ ທີ່ມີປະສິດທິພາບ ສາມາດປະຢັດພະລັງງານ ແລະ ເປັນມິດກັບສິ່ງແວດລ້ອມ.

### 4.2.2 ນະໂຍບາຍສົ່ງເສີມການເຂົ້າເຖິງແຫລ່ງທຶນ

- ສ້າງບັນດາເງື່ອນໄຂທີ່ຈຳເປັນເພື່ອໃຫ້ວິສາຫະກິດຂະໜາດນ້ອຍ ແລະ ກາງ ສາມາດເຂົ້າເຖິງແຫລ່ງທຶນໄດ້ຫລາຍຂຶ້ນ ຈະເປັນການພັດທະນາແບບວິທີໃນການສະໜອງສິນເຊື່ອໃຫ້ມີຫລາຍຮູບຫລາຍສີ ມີທັງການສະໜອງສິນເຊື່ອທີ່ຕ້ອງການຫລັກຊັບຄໍ້າປະກັນ ແລະ ແບບບໍ່ມີຫລັກຊັບຄໍ້າປະກັນ ຄື:

  + ສ້າງໃຫ້ມີລະບົບຄໍ້າປະກັນສິນເຊື່ອເພື່ອໃຫ້ພາກສ່ວນທີສາມ ຈະເປັນບຸກຄົນ, ກອງທຶນຄໍ້າປະກັນສິນເຊື່ອຂອງລັດ, ບໍລິສັດຄໍ້າປະກັນສິນເຊື່ອ ເປັນຜູ້ຄໍ້າປະກັນສິນເຊື່ອໃຫ້ແກ່ໂຄງການທຸລະກິດທີ່ບໍ່ມີຫລັກຊັບຄໍ້າປະກັນ ຫລື ມີຫລັກຊັບຄໍ້າປະກັນບໍ່ພຽງພໍ ໃຫ້ສາມາດໄປຢືມເງິນກັບທະນາຄານທີ່ເຂົ້າຮ່ວມໄດ້. ໃນສະເພາະໜ້ານີ້ ໃຫ້ກອງທຶນສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ສົມທົບກັບທະນາຄານແຫ່ງ ສປປ ລາວ ແລະ ພາກສ່ວນກ່ຽວຂ້ອງສ້າງເປັນໂຄງການທົດລອງໃນການຄໍ້າປະກັນສິນເຊື່ອໃຫ້ແກ່ວິສາຫະກິດຂະໜາດນ້ອຍ ແລະ ກາງ. ພ້ອມກັນນັ້ນ ກໍ່ໃຫ້ຄົ້ນຄວ້າບັນດາລະບຽບການທີ່ຈຳເປັນໃນການຄຸ້ມຄອງການຄໍ້າປະກັນສິນເຊື່ອ.

+ ກອງທຶນລົງທຶນຮ່ວມເປັນກອງທຶນຂອງລັດ ຫລື ບໍລິສັດທີ່ໄປຮ່ວມລົງທຶນກັບໂຄງການທຸລະກິດ ແລະ ແບ່ງເງິນປັນຜົນກຳໄລຈາກທຸລະກິດນັ້ນໆ ແຕ່ບໍ່ແມ່ນການເກັບດອກເບ້ຍ.

+ ການເຊົ່າສິນເຊື່ອ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ສາມາດເຂົ້າເຖິງເຄື່ອງມືການຜະລິດໄດ້ໂດຍກົງ ຈະເປັນເຄື່ອງຈັກ, ພາຫະນະ ແລະ ອຸປະກອນການຜະລິດ ໂດຍອາໄສສິນເຊື່ອຂອງບໍລິສັດເຊົ່າສິນເຊື່ອທີ່ໄດ້ຮັບສິນເຊື່ອຈາກບໍລິສັດທີ່ສະໜອງເຄື່ອງຈັກ, ພາຫະນະ ແລະ ອຸປະກອນການຜະລິດ. ການສະໜອງສິນເຊື່ອໃນຮູບແບບນີ້ບໍ່ຈຳເປັນຕ້ອງມີຫລັກຊັບຄ້ຳປະກັນ ແຕ່ຈະຕ້ອງໄດ້ເສຍດອກເບ້ຍສູງ.

- ໃນສະເພາະໜ້ານີ້ ກະຊວງການເງິນ ແລະ ພາກສ່ວນກ່ຽວຂ້ອງ ມີຄວາມຈຳເປັນຈະຕ້ອງຂຶ້ນຂວາຍທຶນຈາກແຫລ່ງຕ່າງໆທີ່ເປັນໄປໄດ້ ຄື: ງົບປະມານປະຈຳປີຂອງລັດ (10 ຫາ 50 ຕື້ກີບຕໍ່ປີ ຕາມຄວາມສາມາດຕົວຈິງ), ຈາກສະຖາບັນການເງິນສາກົນ ແລະ ປະເທດເພື່ອນມິດ ເຂົ້າໃສ່ກອງທຶນສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ. ກະຊວງແຜນການ ແລະ ການລົງທຶນ ແລະ ກະຊວງການເງິນ ເປັນຜູ້ອຳນວຍໃນການລະດົມທຶນຈາກສາກົນ ເພື່ອຂະຫຍາຍໂຄງການສິນເຊື່ອຂອງກອງທຶນສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ໂດຍບໍ່ມີການເກັບດອກເບ້ຍເພີ່ມ ແລະ ມີໄລຍະຍາວ ທັງນີ້ກໍ່ເພື່ອເຮັດໃຫ້ອັດຕາດອກເບ້ຍທີ່ທະນາຄານທຸລະກິດສະໜອງໃຫ້ວິສາຫະກິດຂະໜາດນ້ອຍ ແລະ ກາງ ຕ່ຳກວ່າດອກເບ້ຍທົ່ວໄປ ແຕ່ 4-6 % ຕໍ່ປີ ແລະ ມີໄລຍະການຊຳລະທຶນຄືນໃຫ້ສອດຄ່ອງຄວາມຈຳເປັນດ້ານການເງິນຂອງແຕ່ລະຂະແໜງທຸລະກິດ ແຕ່ 3-8 ປີ. ການສະໜອງເງິນກູ້ຈາກກອງທຶນສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ຜ່ານທະນາຄານ ທີ່ມີອັດຕາດອກເບ້ຍຕ່ຳ ແລະ ໄລຍະຍາວໃຫ້ບັນດາຂະແໜງທຸລະກິດທີ່ເປັນບູລິມະສິດຂອງລັດຖະບານ ຄື: ຂະແໜງທີ່ຮັບໃຊ້ຄວາມໝັ້ນຄົງດ້ານສະບຽງອາຫານ, ກິດຈະການທີ່ປະກອບສ່ວນໃນການລຶບລ້າງຄວາມທຸກຍາກ, ຂະແໜງປຸງແຕ່ງກະສິກຳ ແລະ ຫັດຖະກຳທີ່ເປັນພູມປັນຍາຂອງທ້ອງຖິ່ນ, ຂະແໜງອຸດສາຫະກຳການຜະລິດທີ່ສະໜັບສະໜູນໃຫ້ແກ່ວິສາຫະກິດຂະໜາດໃຫຍ່ ແລະ ກິດຈະການອື່ນທີ່ຮັບໃຊ້ແນວທາງ ແລະ ນະໂຍບາຍຂອງພັກ ແລະ ລັດຖະບານ. ສຳລັບບັນຊີກ່ຽວກັບຂະແໜງການທີ່ຈະໄດ້ຮັບບູລິມະສິດໃນການສະໜອງສິນເຊື່ອໃນອັດຕາດອກເບ້ຍຕ່ຳ ແລະ ມີໄລຍະຍາວ ແມ່ນລັດຖະບານຈະເປັນຜູ້ກຳນົດໃນແຕ່ລະໄລຍະ.
- ຍົກລະດັບຄວາມອາດສາມາດຂອງຜູ້ປະກອບກິດຈະການ ເພື່ອເພີ່ມຄວາມຊຳນານໃນການວາງແຜນທຸລະກິດ ແລະ ການຄຸ້ມຄອງການເງິນ ການບັນຊີ.
- ປັບປຸງກົນໄກທາງດ້ານທະນາຄານ ແລະ ຍົກລະດັບພະນັກງານສິນເຊື່ອໃຫ້ມີຄວາມຊຳນານ ໃນການບໍລິການສິນເຊື່ອໃຫ້ແກ່ວິສາຫະກິດຂະໜາດນ້ອຍ ແລະ ກາງ.
- ປັບປຸງບັນດາຂັ້ນຂອດໃນການສະເໜີຂໍເງິນກູ້ຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ໃຫ້ມີຂັ້ນຕອນທີ່ກະທັດຮັດ ແລະ ມີຄ່າໃຊ້ຈ່າຍທີ່ສົມເຫດສົມຜົນ.
- ຊຸກຍູ້ພາກທຸລະກິດສ້າງຕັ້ງສະມາຄົມສະໜອງສິນເຊື່ອແບບບໍ່ຕ້ອງການຫລັກຊັບຄ້ຳປະກັນ ເພື່ອສະໜອງສິນເຊື່ອໃຫ້ໂຄງການສ້າງທຸລະກິດໃໝ່ຂອງຊາວໜຸ່ມ (Start Up).
- ສ້າງກອງທຶນເພື່ອສົມທົບໃຫ້ແກ່ໂຄງການລົງທຶນ ຂອງຊາວໜຸ່ມທີ່ມີແຜນທຸລະກິດທີ່ດີ ແລະ ມີຄວາມເປັນໄປໄດ້ສູງ ແຕ່ຂາດເງິນທຶນ ແລະ ເງື່ອນໄຂທີ່ຈະໄປກູ້ເງິນກັບທະນາຄານ.

### 4.2.3 ນະໂຍບາຍສົ່ງເສີມການເຂົ້າເຖິງການບໍລິການໃຫ້ຄຳປຶກສາພັດທະນາທຸລະກິດ

- ສະໜອງການຝຶກອົບຮົມ ແລະ ບໍລິການໃຫ້ຄຳປຶກສາ ໂດຍການນຳໃຊ້ວິທີວິທະຍາກ່ຽວກັບການຄຸ້ມຄອງຄຸນນະພາບ ເຊັ່ນ: 5ສ (5S), ໄຄເຊັນ (KAIZEN), ການຜະລິດທີ່ດີ (GMP), ການຜະລິດກະສິກຳທີ່ດີ (GAP), ມາດຕະຖານສາກົນ (ISO), ການວິເຄາະ ແລະ ຄວບຄຸມຈຸດວິກິດຄວາມປອດໄພການຜະລິດອາຫານ (HACCP) ເພື່ອໃຫ້ຜະລິດຕະພັນ ແລະ ການບໍລິການມີຄຸນນະພາບ ແລະ ໄດ້ມາດຕະຖານ ແລະ ສາມາດແກ່ງແຍ້ງແຂ່ງຂັນຢູ່ໃນຕະຫລາດພາຍໃນປະເທດ ແລະ ຕ່າງປະເທດ.
- ຝຶກອົບຮົມ ແລະ ຍົກລະດັບຄວາມສາມາດຂອງຜູ້ປະກອບກິດຈະການດ້ານຕ່າງໆ ເປັນຕົ້ນແມ່ນການຍົກລະດັບຄວາມຊຳນານໃນການຄຸ້ມຄອງທຸລະກິດ, ການວາງແຜນທຸລະກິດ, ການວາງແຜນຍຸດທະສາດດ້ານການຕະຫລາດ, ດ້ານການບັນຊີ ການເງິນ, ດ້ານກົດໝາຍ ແລະ ອື່ນໆ.
- ສະໜັບສະໜູນການດຳເນີນງານຂອງສູນບໍລິການວິສາຫະກິດຂະໜາດນ້ອຍ ແລະ ກາງ (SME Service Center) ຂອງສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ຊຶ່ງໄດ້ສ້າງຂຶ້ນໃນວັນທີ 17 ກຸມພາ 2017 ທີ່ນະຄອນຫລວງວຽງຈັນ ໃຫ້ສາມາດສະໜອງການບໍລິການແກ່ວິສາຫະກິດຂະໜາດນ້ອຍ ແລະ ກາງ ແລະ ຂະຫຍາຍໄປບັນດາແຂວງ ໂດຍເລີ່ມຈາກແຂວງທີ່ມີເງື່ອນໄຂກ່ອນ ແລ້ວຈຶ່ງຂະຫຍາຍໃຫ້ມີໃນບັນດາແຂວງຕ່າງໆຕໍ່ໄປ.
- ບັນດາສູນ, ສະຖາບັນວິຊາການຂອງຂະແໜງການ ລວມທັງມະຫາວິທະຍາໄລ ແລະ ບັນດາວິທະຍາໄລຕ່າງໆ ຕ້ອງເພີ່ມທະວີການສະໜອງບໍລິການດ້ານເຕັກນິກ ແລະ ວິຊາການທີ່ຕົນເອງມີບົດບາດ ໃຫ້ແກ່ການຜະລິດ ແລະ ທຸລະກິດ ຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ຈະເປັນເຕັກນິກການປູກຝັງລ້ຽງສັດ, ການຜະລິດ, ການປຸງແຕ່ງ, ການຖ່າຍທອດເຕັກໂນໂລຊີ ດັ່ງນີ້ເປັນຕົ້ນ.

### 4.2.4 ນະໂຍບາຍເຂົ້າເຖິງ ແລະ ຂະຫຍາຍຕະຫລາດ

- ສົ່ງເສີມການເຂົ້າເຖິງ ແລະ ຂະຫຍາຍຕະຫລາດ ທັງພາຍໃນ ແລະ ຕ່າງປະເທດ ໂດຍການສ້າງຖານຂໍ້ມູນ ແລະ ສະໜອງຂໍ້ມູນຂ່າວສານດ້ານຕະຫລາດໃຫ້ແກ່ວິສາຫະກິດຂະໜາດນ້ອຍ ແລະ ກາງ.
- ເພີ່ມທະວີການອຳນວຍຄວາມສະດວກດ້ານການຄ້າ ຈະເປັນທາງດ້ານການຈັດສົ່ງສິນຄ້າ, ການແຈ້ງພາສີ, ການຢັ້ງຢືນດ້ານເຕັກນິກຕ່າງໆ ເຊັ່ນ: ການຢັ້ງຢືນສຸຂະນາໄມພືດ ແລະ ສັດ, ມາດຕະຖານຄວາມປອດໄພຂອງອາຫານ ແລະ ສິນຄ້າ.
- ສ້າງໃຫ້ມີກົນໄກການຮ່ວມມື ລະຫວ່າງ ວິສາຫະກິດຂະໜາດໃຫຍ່ ຫລື ວິສາຫະກິດລົງທຶນໂດຍກົງຂອງຕ່າງປະເທດ ແລະ ວິສາຫະກິດຂະໜາດນ້ອຍ ແລະ ກາງ ເພື່ອເຮັດໃຫ້ວິສາຫະກິດຂະໜາດນ້ອຍ ແລະ ກາງ ສາມາດສະໜອງສິນຄ້າ ແລະ ບໍລິການ ໃຫ້ວິສາຫະກິດຂະໜາດໃຫຍ່ ລວມທັງການລົງທຶນໂດຍກົງຂອງຕ່າງປະເທດ.
- ຄົ້ນຄວ້າ ແລະ ກຳນົດຂະແໜງທຸລະກິດທີ່ມີທ່າແຮງ ແລະ ມີຄວາມໄດ້ປຽບໃນການແຂ່ງຂັນ ແລ້ວພັດທະນາຂອດຕ່າງໆຂອງການຄ້າ ແລະ ການຜະລິດຂອງຂະແໜງທຸລະກິດເຫລົ່ານັ້ນ ເພື່ອປັບປຸງຜະລິດຕະພາບ ແລະ ຄຸນນະພາບຜະລິດຕະພັນໃຫ້ສາມາດແຂ່ງຂັນ ແລະ ສອດຄ່ອງກັບຄວາມຕ້ອງການຂອງຕະຫລາດ.

- ສົ່ງເສີມການຮ່ວມກຸ່ມຂອງຂະແໜງທຸລະກິດປະເພດດຽວກັນ ແລະ ມີທີ່ຕັ້ງໃກ້ຄຽງກັນ ເພື່ອໃຫ້ສາມາດຮ່ວມມືກັນ ແລະ ແບ່ງງານກັນໃນການຜະລິດ ເພື່ອເຮັດໃຫ້ຕົ້ນທຶນຕໍ່າ ທັງເພີ່ມອໍານາດຕໍ່ລອງດ້ານຕະຫລາດ ແລະ ຜູ້ສະໜອງປັດໄຈການຜະລິດ.
- ສະໜອງທຶນສົມທົບໃຫ້ແກ່ວິສາຫະກິດຂະໜາດນ້ອຍ ແລະ ກາງ ເພື່ອເປັນຄ່າໃຊ້ຈ່າຍດ້ານການຕະຫລາດ ຈະເປັນການໄປຮ່ວມງານວາງສະແດງສິນຄ້າທັງພາຍໃນ ແລະ ຕ່າງປະເທດ.
- ໃຫ້ການຊ່ວຍເຫລືອດ້ານວິຊາການ ແລະ ດ້ານການເງິນ ໃຫ້ແກ່ວິສາຫະກິດຂະໜາດນ້ອຍ ແລະ ກາງ ຢູ່ບັນດາແຂວງໃຫ້ໄດ້ຮັບເຄື່ອງໝາຍ ໜຶ່ງເມືອງ ໜຶ່ງຜະລິດຕະພັນ (ODOP) ເຮັດໃຫ້ສິນຄ້າດັ່ງກ່າວສາມາດແຂ່ງຂັນກັບຕະຫລາດໄດ້ຫລາຍຂຶ້ນ.

### 4.2.5 ນະໂຍບາຍສ້າງ ແລະ ພັດທະນາຜູ້ປະກອບກິດຈະການໃໝ່

- ຝຶກອົບຮົມໃຫ້ແກ່ຜູ້ທີ່ສົນໃຈເລີ່ມຕົ້ນອາຊີບທຸລະກິດ ເພື່ອໃຫ້ເກີດຜູ້ປະກອບກິດຈະການໃໝ່ຢ່າງແຜ່ຫລາຍ ແລະ ພັດທະນາຜູ້ປະກອບກິດຈະການທີ່ມີຢູ່ແລ້ວ ເພື່ອເພີ່ມຄວາມຊໍານານໃນການບໍລິຫານທຸລະກິດ ໂດຍການປູກຈິດສໍານຶກໃຫ້ຊາວໜຸ່ມ, ນັກຮຽນ, ນັກສຶກສາ ໃຫ້ຫັນມາສົນໃຈອາຊີບນັກທຸລະກິດ.
- ສືບຕໍ່ເອົາວິຊາຮຽນກ່ຽວກັບທຸລະກິດເຂົ້າໃນຫລັກສູດການສຶກສາໃຫ້ກວ້າງຂວາງກວ່າເກົ່າ.
- ຂະຫຍາຍສູນກໍ່ສ້າງ (ສູນບົ່ມເພາະ) ຜູ້ປະກອບກິດຈະການໃໝ່ (Business Incubator) ໃນຄະນະຕ່າງໆຢູ່ບັນດາມະຫາວິທະຍາໄລ ແລະ ບ່ອນຕ່າງໆທີ່ມີເງື່ອນໄຂ.
- ຈັດຕັ້ງການຝຶກອົບຮົມ, ການສໍາມະນາ ແລະ ກິດຈະກໍາຕ່າງໆ ເພື່ອໃຫ້ຊາວໜຸ່ມ, ນັກຮຽນ, ນັກສຶກສາມີໂອກາດນໍາສະເໜີແນວຄິດ ແລະ ແຜນທຸລະກິດທີ່ມີຄວາມເປັນໄປໄດ້ ໃນການສ້າງຕັ້ງທຸລະກິດໃໝ່ (Start Up) ເພື່ອສະໜອງບໍລິການ ແລະ ຜະລິດຕະພັນແນວໃໝ່ ສາມາດຮັບໃຊ້ສັງຄົມຕາມຄວາມຕ້ອງການ.

### 4.2.6 ນະໂຍບາຍສ້າງສະພາບແວດລ້ອມທີ່ເອື້ອອໍານວຍໃຫ້ແກ່ການສ້າງ ແລະ ດໍາເນີນທຸລະກິດ

- ສືບຕໍ່ປັບປຸງລະບຽບການ ແລະ ວິທີການຄຸ້ມຄອງລັດຕໍ່ການເຄື່ອນໄຫວທຸລະກິດໃຫ້ມີຄວາມທັນສະໄໝ, ໂປ່ງໃສ, ກະທັດຮັດ ບໍ່ເຮັດໃຫ້ຜູ້ປະກອບກິດຈະການເສຍເວລາ ແລະ ມີຄ່າໃຊ້ຈ່າຍຫລາຍໃນການປະຕິບັດລະບຽບການຕ່າງໆທີ່ລັດວາງອອກ ເຮັດໃຫ້ການຈັດອັນດັບກ່ຽວກັບຄວາມສະດວກໃນການດໍາເນີນທຸລະກິດໃນ ສປປ ລາວ ຂອງທະນາຄານໂລກ ໃຫ້ດີກວ່າໃນສະພາບປະຈຸບັນຄື: ສປປ ລາວ ໄດ້ຖືກຈັດຢູ່ອັນດັບທີ 139 (ສໍາລັບອັນດັບລວມ) ແລະ 160 (ສໍາລັບການກໍ່ຕັ້ງທຸລະກິດໃໝ່) ຈາກ 190 ປະເທດ/ເຂດເສດຖະກິດ, ສ່ວນປະເທດສິງກະໂປ ຈັດຢູ່ໃນອັນດັບ 2 ແລະ 6, ປະເທດຫວຽດນາມ ຈັດຢູ່ໃນອັນດັບລວມ 82 ແລະ 121, ກໍາປູເຈຍ 131 ແລະ 180 ຕາມລໍາດັບ ໃນປີ 2017.

- ກ່ອນຈະອອກລະບຽບການຂອງລັດໃນການຄຸ້ມຄອງລັດຕໍ່ການເຄື່ອນໄຫວທຸລະກິດດ້ານຕ່າງໆ ຈະຕ້ອງມີຂະບວນການປະເມີນຜົນກະທົບ, ມີການປຶກສາຫາລືກັບພາກທຸລະກິດ ເພື່ອເອກະພາບໃນການຈັດຕັ້ງປະຕິບັດ.
- ເພີ່ມທະວີການນຳໃຊ້ເຕັກໂນໂລຊີຂໍ້ມູນຂ່າວສານໃນການຄຸ້ມຄອງລັດ ບໍ່ວ່າຈະເປັນລະບົບຂຶ້ນທະບຽນວິສາຫະກິດ, ການຂຶ້ນທະບຽນອາກອນ, ການອອກອະນຸຍາດຂະແໜງຕ່າງໆ ແລະ ການເກັບພາສີອາກອນ.

### 4.2.7 ນະໂຍບາຍພາສີ-ອາກອນ ແລະ ດ້ານການເງິນ

- ວິສາຫະກິດຂະໜາດນ້ອຍ ແລະ ກາງ ທີ່ດຳເນີນກິດຈະການໃນຂະແໜງທີ່ເປັນຍຸດທະສາດ ເຊັ່ນ: ກິດຈະການທີ່ຮັບໃຊ້ຄວາມໝັ້ນຄົງດ້ານສະບຽງອາຫານ, ກິດຈະການທີ່ປະກອບສ່ວນໃນການລຶບລ້າງຄວາມທຸກຍາກ ແລະ ກິດຈະການອື່ນທີ່ເຫັນສົມຄວນ ທີ່ຮັບໃຊ້ແນວທາງ ແລະ ນະໂຍບາຍຂອງພັກ ແລະ ລັດຖະບານ (ເຊິ່ງລັດຖະບານຈະສ້າງເປັນບັນຊີຕ່າງຫາກ) ຈະໄດ້ຮັບນະໂຍບາຍພາສີນຳເຂົ້າສຳລັບປັດໄຈການຜະລິດທີ່ຈຳເປັນ ແລະ ຈະໄດ້ຮັບນະໂຍບາຍພິເສດກວ່າວິສາຫະກິດອື່ນ ນອກຈາກທີ່ໄດ້ກຳນົດໄວ້ໃນກົດໝາຍສົ່ງເສີມການລົງທຶນ ຖ້າເປັນເປີເຊັນ ຈະຕໍ່າກວ່າ 5%.
- ສຳລັບຈຸນລະວິສາຫະກິດກໍ່ຕັ້ງໃໝ່ ລວມທັງ Start-Up ແລະ ຈຳພວກທີ່ຢູ່ໃນສູນກໍ່ສ້າງຜູ້ປະກອບກິດຈະການ ຈະໄດ້ຮັບການຍົກເວັ້ນອາກອນມູນຄ່າເພີ່ມ ແລະ ອາກອນກຳໄລ 1-5 ປີ.
- ສະໜອງທຶນໃຫ້ແກ່ທະນາຄານທຸລະກິດ ແລະ ສະຖາບັນການເງິນຈຸນລະພາກ ເພື່ອປ່ອຍສິນເຊື່ອໄລຍະຍາວ 5-7 ປີ ໃຫ້ແກ່ຈຸນລະວິສາຫະກິດ ແລະ ວິສາຫະກິດຂະໜາດນ້ອຍ ເພື່ອນຳໃຊ້ເຂົ້າໃນການສ້າງຕັ້ງ ແລະ ການຂະຫຍາຍທຸລະກິດ ໃນອັດຕາດອກເບ້ຍທີ່ຕໍ່າກວ່າດອກເບ້ຍປົກກະຕິ 5-10% ຕໍ່ປີ.
- ສະໜອງທຶນສົມທົບໃຫ້ແກ່ຈຸນລະວິສາຫະກິດ ແລະ ວິສາຫະກິດຂະໜາດນ້ອຍ ໃນການປັບປຸງ ແລະ ປ່ຽນຖ່າຍເຕັກໂນໂລຊີ ແລະ ການຊອກຫາຕະຫລາດ ທັງພາຍໃນ ແລະ ຕ່າງປະເທດ.
- ສະໜອງທຶນສົມທົບໃຫ້ແກ່ວິສາຫະກິດຂະໜາດນ້ອຍ ແລະ ກາງ ເພື່ອເປັນຄ່າໃຊ້ຈ່າຍສຳລັບການສະໜອງບໍລິການໃຫ້ຄຳປຶກສາຈາກຜູ້ຊ່ຽວຊານ ເພື່ອປັບປຸງທຸລະກິດດ້ານຕ່າງໆ ເຊັ່ນ: ການອອກແບບ ແລະ ພັດທະນາຜະລິດຕະພັນ, ການປັບປຸງ ແລະ ຢັ້ງຢືນດ້ານຄຸນນະພາບ ແລະ ມາດຕະຖານ, ການວາງແຜນຍຸດທະສາດດ້ານການຕະຫລາດ, ການຝຶກອົບຮົມ.

## 4.3 ບັນດາມາດຕະການ, ໂຄງການ ແລະ ກິດຈະກຳໃນແຕ່ລະຂົງເຂດນະໂຍບາຍ

ເພື່ອບັນລຸວິໄສທັດ ແລະ ຈຸດປະສົງ ຂອງແຜນພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ 2016-2020, ຄຽງຄູ່ກັບການຈັດຕັ້ງຜັນຂະຫຍາຍກິດຈະການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ທີ່ໄດ້ກຳນົດໃນກົດໝາຍວ່າດ້ວຍການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ແລ້ວ ຈະຕ້ອງສຸມໃສ່ຈັດຕັ້ງປະຕິບັດບັນດາມາດຕະການ, ໂຄງການ ແລະ ກິດຈະກຳຕ່າງໆ ໃນແຕ່ລະຂົງເຂດນະໂຍບາຍດັ່ງນີ້:

### 4.3.1 ນະໂຍບາຍສົ່ງເສີມການເພີ່ມຜະລິດຕະພາບ, ເຕັກໂນໂລຊີ ແລະ ນະວັດຕະກໍາ

1) ສົ່ງເສີມການຮ່ວມມືລະຫວ່າງພາກລັດ, ສະຖາບັນການສຶກສາ ແລະ ພາກທຸລະກິດ ໃນການພັດທະນາ ແລະ ຖ່າຍທອດເຕັກໂນໂລຊີ;
2) ສົ່ງເສີມ ແລະ ອໍານວຍຄວາມສະດວກໃຫ້ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນການຈົດທະບຽນຊັບສິນທາງປັນຍາ;
3) ສະໜັບສະໜູນການເຂົ້າເຖິງລະບົບການຢັ້ງຢືນຄຸນນະພາບ ແລະ ມາດຕະຖານ;
4) ໃຫ້ຄໍາປຶກສາ ແລະ ຝຶກອົບຮົມການຍົກລະດັບການບໍລິຫານຄຸນນະພາບ ແລະ ຜະລິດຕະພາບ ຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ;
5) ເຜີຍແຜ່ດ້ານຄຸນນະພາບ ແລະ ຜະລິດຕະພາບ ດ້ວຍຫລາຍຮູບແບບ;
6) ສ້າງລະບົບ ແລະ ດໍາເນີນການມອບລາງວັນນະວັດຕະກໍາ ດ້ານຕ່າງໆ ຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ;
7) ສະໜອງທຶນສົມທົບໃນການປັບປຸງ ແລະ ຍົກລະດັບເຕັກໂນໂລຊີ ໃຫ້ແກ່ວິສາຫະກິດຂະໜາດນ້ອຍ ແລະ ກາງ.

### 4.3.2 ນະໂຍບາຍສົ່ງເສີມການເຂົ້າເຖິງແຫລ່ງທຶນ

1) ພັດທະນາຜະລິດຕະພັນ ແລະ ການບໍລິການທາງດ້ານສິນເຊື່ອ ແລະ ດ້ານການເງິນໃຫ້ແກ່ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃຫ້ມີຄວາມຫລາກຫລາຍ;
2) ສ້າງຄວາມເຂັ້ມແຂງໃຫ້ບັນດາທະນາຄານ ແລະ ສະຖາບັນການເງິນ ລວມທັງສະຖາບັນການເງິນຈຸລະພາກ;
3) ສ້າງຄວາມອາດສາມາດໃຫ້ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນການເຂົ້າເຖິງແຫລ່ງທຶນ;
4) ສ້າງຄວາມເຂັ້ມແຂງໃຫ້ແກ່ກອງທຶນສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ;
5) ຄົ້ນຄວ້າ ແລະ ສຶກສາຄວາມເປັນໄປໄດ້ໃນການສ້າງສະຖາບັນການເງິນສະເພາະກິດ ສໍາລັບວິສາຫະກິດຂະໜາດນ້ອຍ ແລະ ກາງ;
6) ປັບປຸງຄວາມເຂັ້ມແຂງບັນດາອົງການຈັດຕັ້ງທີ່ອໍານວຍຄວາມສະດວກໃນການເຂົ້າເຖິງສິນເຊື່ອ ຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ.

### 4.3.3 ນະໂຍບາຍສົ່ງເສີມການເຂົ້າເຖິງການບໍລິການໃຫ້ຄໍາປຶກສາພັດທະນາທຸລະກິດ

1) ສ້າງຄວາມເຂັ້ມແຂງໃຫ້ອົງການ, ຫົວໜ່ວຍວິຊາການທີ່ສະໜອງບໍລິການໃຫ້ຄໍາປຶກສາພັດທະນາທຸລະກິດ;
2) ຊຸກຍູ້ບັນດາແຂວງໃນການສ້າງຕັ້ງສູນບໍລິການດ້ານວິຊາການໃຫ້ແກ່ວິສາຫະກິດຂະໜາດນ້ອຍ ແລະ ກາງ;
3) ສົ່ງເສີມການສະໜອງການບໍລິການດ້ານວິຊາການໃຫ້ມີຄວາມຫລາກຫລາຍ ໃຫ້ແກ່ວິສາຫະກິດຂະໜາດນ້ອຍ ແລະ ກາງ;

4) ສ້າງລະບົບຖານຂໍ້ມູນວິສາຫະກິດຂະໜາດນ້ອຍ ແລະ ກາງ ແລະ ຜູ້ສະໜອງບໍລິການໃຫ້ຄໍາປຶກສາພັດທະນາທຸລະກິດ;

5) ເຜີຍແຜ່ ແລະ ອໍານວຍຄວາມສະດວກໃຫ້ວິສາຫະກິດຂະໜາດນ້ອຍ ແລະ ກາງ ເຂົ້າເຖິງການບໍລິການໃຫ້ຄໍາປຶກສາພັດທະນາທຸລະກິດ.

#### 4.3.4 ນະໂຍບາຍເຂົ້າເຖິງ ແລະ ຂະຫຍາຍຕະຫລາດ

1) ສະໜັບສະໜູນໃນການຈັດຕັ້ງປະຕິບັດບັນດາກົດຈະກໍາສົ່ງເສີມການສົ່ງອອກ;

2) ສ້າງຖານຂໍ້ມູນຂ່າວສານ ແລະ ສະໜອງຂໍ້ມູນຂ່າວສານກ່ຽວກັບຕະຫລາດພາກພື້ນ ແລະ ສາກົນ;

3) ສ້າງໂອກາດ ແລະ ເພີ່ມຊ່ອງທາງການຕະຫຼາດແກ່ວິສາຫະກິດຂະໜາດນ້ອຍ ແລະ ກາງ;

4) ອໍານວຍຄວາມສະດວກທາງດ້ານການຄ້າໃຫ້ແກ່ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນການເຂົ້າສູ່ຕະຫລາດພາກພື້ນ ແລະ ສາກົນ;

5) ຄົ້ນຄວ້າຄວາມເປັນໄປໄດ້ໃນການສ້າງກອງທຶນສະໜັບສະໜູນການສົ່ງອອກຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ;

6) ສົ່ງເສີມການຮ່ວມມືລະຫວ່າງວິສາຫະກິດຂະໜາດນ້ອຍ ແລະ ກາງ ກັບວິສາຫະກິດຂະໜາດໃຫຍ່ ແລະ ວິສາຫະກິດການລົງທຶນຂອງຕ່າງປະເທດ;

7) ຄົ້ນຄວ້າຂະແໜງການວິສາຫະກິດຂະໜາດນ້ອຍ ແລະ ກາງ ທີ່ມີທ່າແຮງ ແລະ ມີຄວາມໄດ້ປຽບໃນການແຂ່ງຂັນ;

8) ສົ່ງເສີມການພັດທະນາຕ່ອງໂສ້ມູນຄ່າເພີ່ມ (Value Chain Development) ໃນບາງຂະແໜງການທີ່ມີທ່າແຮງ;

9) ສົ່ງເສີມການຮ່ວມກຸ່ມທຸລະກິດ (Cluster) ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນການເຂົ້າເຖິງຕະຫລາດ;

10) ສົ່ງເສີມການສ້າງເຄືອຂ່າຍວິສາຫະກິດຂະໜາດນ້ອຍ ແລະ ກາງ ທັງພາຍໃນ ແລະ ພາກພື້ນ ເພື່ອເພີ່ມທະວີການຮ່ວມມືທາງດ້ານທຸລະກິດ.

#### 4.3.5 ນະໂຍບາຍສ້າງ ແລະ ພັດທະນາຜູ້ປະກອບກິດຈະການໃໝ່

1) ສ້າງ ແລະ ບັນຈຸຫລັກສູດການກໍ່ສ້າງຜູ້ປະກອບກິດຈະການ ເຂົ້າໃນລະບົບການສຶກສາຊັ້ນສູງ ແລະ ອາຊີວະສຶກສາຂັ້ນຕ່າງໆ;

2) ຍົກລະດັບຄວາມຊໍານານກ່ຽວກັບການບໍລິຫານທຸລະກິດໃຫ້ແກ່ຜູ້ປະກອບກິດຈະການວິສາຫະກິດຂະໜາດນ້ອຍ ແລະ ກາງ;

3) ສະໜັບສະໜູນການສ້າງໃຫ້ມີຜູ້ປະກອບກິດຈະການໃໝ່ ໂດຍສະເພາະແມ່ນຊາວໜຸ່ມ, ແມ່ຍິງ ແລະ ນັກສຶກສາ;

4) ສົ່ງເສີມສະຖາບັນການສຶກສາ ໃຫ້ມີບົດບາດໃນການກໍ່ສ້າງຜູ້ປະກອບກິດຈະການໃໝ່ ເປັນຕົ້ນແມ່ນການສ້າງສູນກໍ່ສ້າງຜູ້ປະກອບກິດຈະການ (Business Incubator), ການຝຶກອົບຮົມ, ການຖ່າຍທອດເຕັກໂນໂລຊີ ແລະ ກິດຈະກຳສົ່ງເສີມຕ່າງໆ;
5) ສົ່ງເສີມໃຫ້ເກີດມີທຸລະກິດຕົວແທນ (Franchising Businesses);
6) ສ້າງລະບົບການຍ້ອງຍໍ ແລະ ດຳເນີນການຍ້ອງຍໍໃຫ້ແກ່ວິສາຫະກິດ ແລະ ຜູ້ປະກອບກິດຈະການທີ່ມີຜົນງານດີເດັ່ນໃນດ້ານຕ່າງໆ.

### 4.3.6 ນະໂຍບາຍສ້າງສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ການສ້າງຕັ້ງ ແລະ ດຳເນີນທຸລະກິດ

1) ປັບປຸງລະບຽບ ແລະ ລະບົບການຂຶ້ນທະບຽນວິສາຫະກິດໃຫ້ມີຄວາມສະດວກ ແລະ ວ່ອງໄວ;
2) ປັບປຸງລະບຽບ ແລະ ລະບົບການອອກອະນຸຍາດຂອງພາກສ່ວນກ່ຽວຂ້ອງໃຫ້ມີຄວາມສະດວກ ແລະ ວ່ອງໄວ;
3) ຄົ້ນຄວ້າ ແລະ ປັບປຸງລະບົບການເກັບອາກອນໃຫ້ມີຄວາມສະດວກໂປ່ງໃສ ແລະ ຍຸຕິທຳ;
4) ສົ່ງເສີມໃຫ້ເກີດມີເວທີປຶກສາຫາລື ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຢູ່ຂັ້ນທ້ອງຖິ່ນ.

### 4.3.7 ນະໂຍບາຍພາສີ-ອາກອນ ແລະ ດ້ານການເງິນ

1) ຄົ້ນຄວ້າ ແລະ ກຳນົດບັນດາກິດຈະການ ແລະ ຂະແໜງການບູລິມະສິດທີ່ຈະໄດ້ຮັບນະໂຍບາຍທາງດ້ານພາສີ-ອາກອນ ແລະ ການເງິນ;
2) ຄົ້ນຄວ້າ ແລະ ກຳນົດບັນດາເງື່ອນໄຂສຳລັບຈຸນລະວິສາຫະກິດກໍ່ຕັ້ງໃໝ່ ລວມທັງ Start-Up ເພື່ອໃຫ້ໄດ້ຮັບການຍົກເວັ້ນອາກອນມູນຄ່າເພີ່ມ ແລະ ອາກອນກຳໄລ;
3) ຈັດສັນງົບປະມານ ແລະ ແຫຼ່ງທຶນທີ່ເປັນໄປໄດ້ ເພື່ອສະໜອງສິນເຊື່ອໃຫ້ແກ່ຈຸນລະວິສາຫະກິດ;
4) ສ້າງ ແລະ ດຳເນີນໂຄງການທຶນສົມທົບ ໃຫ້ແກ່ຈຸນລະວິສາຫະກິດ ແລະ ວິສາຫະກິດຂະໜາດນ້ອຍ ໃນການປັບປຸງ ແລະ ປ່ຽນຖ່າຍເຕັກໂນໂລຊີ ແລະ ການຊອກຫາຕະຫລາດ ທັງພາຍໃນ ແລະ ຕ່າງປະເທດ;
5) ສ້າງ ແລະ ດຳເນີນໂຄງການທຶນສົມທົບໃຫ້ແກ່ວິສາຫະກິດຂະໜາດນ້ອຍ ແລະ ກາງ ເພື່ອເປັນຄ່າໃຊ້ຈ່າຍສຳລັບການສະໜອງບໍລິການໃຫ້ຄຳປຶກສາຈາກຜູ້ຊ່ຽວຊານ ເພື່ອປັບປຸງທຸລະກິດດ້ານຕ່າງໆ.

## 4.4 ໝາກຜົນ ແລະ ຕົວຊີ້ວັດ

ໝາກຜົນ ແລະ ຕົວຊີ້ວັດຂອງການຈັດຕັ້ງປະຕິບັດ 7 ນະໂຍບາຍ ທີ່ໄດ້ກຳນົດໃນແຜນພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ 2016-2020 ໄດ້ຄາດຄະເນໄວ້ດັ່ງນີ້:

| | ຂົງເຂດນະໂຍບາຍ | ໝາກຜົນ | ຕົວຊີ້ວັດ |
|---|---|---|---|
| 1 | ນະໂຍບາຍສົ່ງເສີມການເພີ່ມຜະລິດຕະພາບ, ເຕັກໂນໂລຊີ ແລະ ນະວັດຕະກໍາ | **1.1.** ຜະລິດຕະພາບໄດ້ຮັບການຍົກລະດັບ<br>**1.2.** ເຕັກໂນໂລຊີໄດ້ຮັບການພັດທະນາ ແລະ ນໍາໃຊ້<br>**1.3.** ນະວັດຕະກໍາໄດ້ຮັບການສົ່ງເສີມ | ຜະລິດຕະພາບແຮງງານແຫ່ງຊາດ ໃນປີ 2020 ເພີ່ມຂຶ້ນເປັນ 12.000 $ ຕໍ່ແຮງງານ ຈາກ 9.000 $ ຕໍ່ແຮງງານ ໃນປີ 2014 |
| 2 | ນະໂຍບາຍສົ່ງເສີມການເຂົ້າເຖິງແຫລ່ງທຶນ | **2.1.** ສະຖາບັນການເງິນໄດ້ຮັບການສົ່ງເສີມ ແລະ ປັບປຸງ<br>**2.2.** ເຄື່ອງມືຕ່າງໆສໍາລັບການສະໜອງສິນເຊື່ອໄດ້ຮັບການປັບປຸງ ແລະ ຫລາກຫລາຍຂຶ້ນ | ອັດຕາສ່ວນສິນເຊື່ອທີ່ປ່ອຍກູ້ໃຫ້ ວນກ ໃນປີ 2020 ເພີ່ມຂຶ້ນເປັນ 30% ຈາກ 20% ໃນປີ 2016 |
| 3 | ນະໂຍບາຍສົ່ງເສີມການເຂົ້າເຖິງການບໍລິການໃຫ້ຄໍາປຶກສາພັດທະນາທຸລະກິດ | **3.1.** ໜ່ວຍງານບໍລິການໃຫ້ຄໍາປຶກສາພັດທະນາທຸລະກິດໄດ້ຮັບການປັບປຸງ ແລະ ເຂັ້ມແຂງຂຶ້ນ | ວນກ ທີ່ໄດ້ຮັບການບໍລິການຈາກຜູ້ຊ່ຽວຊານ ເພີ່ມຂຶ້ນເປັນ 10% ໃນປີ 2020 ຈາກ 4,28% ໃນປີ 2013 |
| 4 | ນະໂຍບາຍເຂົ້າເຖິງ ແລະ ຂະຫຍາຍຕະຫລາດ | **4.1.** ການເຂົ້າເຖິງຕະຫລາດ ແລະ ການເຊື່ອມໂຍງເຂົ້າສູ່ຕ່ອງໂສ້ມູນຄ່າເພີ່ມໄດ້ຮັບການພັດທະນາ<br>**4.2.** ຄວາມສາມາດໃນການສົ່ງອອກຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ໄດ້ຮັບການສົ່ງເສີມ | ມູນຄ່າການສົ່ງອອກຂອງ ວນກ ໃນມູນຄ່າການສົ່ງອອກທັງໝົດເພີ່ມຂຶ້ນເປັນ 20% ໃນປີ 2020 ຈາກ 12,91% ຂອງມູນຄ່າການສົ່ງອອກທັງໝົດໃນປີ 2016 |
| 5 | ນະໂຍບາຍສ້າງ ແລະ ພັດທະນາຜູ້ປະກອບກິດຈະ | **5.1.** ຫລັກສູດກ່ຽວກັບການເປັນຜູ້ປະກອບກິດຈະການໄດ້ຮັບການບັນຈຸໃນລະບົບການສຶກສາ | ປະຊາກອນທຸລະກິດເພີ່ມຂຶ້ນເປັນ 4% ໃນປີ 2020 ຈາກ 2% ຂອງປະຊາກອນທັງໝົດ ໃນປີ 2013 |

| | | | |
|---|---|---|---|
| | ການໃໝ່ | **5.2.** ການພັດທະນາຊັບພະຍາກອນມະນຸດສຳລັບວິສາຫະກິດຂະໜາດນ້ອຍ ແລະ ກາງ ໄດ້ຮັບການສົ່ງເສີມ ໂດຍສະເພາະແມ່ນ ແມ່ຍິງ ແລະ ຊາວໜຸ່ມ | ການຈ້າງງານໃນ ວນກ ເພີ່ມຂຶ້ນເປັນ 85% ໃນປີ 2020 ຈາກ 82,18% ຂອງແຮງງານທັງໝົດໃນວິສາຫະກິດ ໃນປີ 2013 |
| **6** | ນະໂຍບາຍສ້າງສະພາບແວດລ້ອມທີ່ເອື້ອອຳນວຍ ໃຫ້ແກ່ການສ້າງຕັ້ງ ແລະ ດຳເນີນທຸລະກິດ | **6.1.** ວິສາຫະກິດຂະໜາດນ້ອຍ ແລະ ກາງ ມີສ່ວນຮ່ວມໃນການປັບປຸງແກ້ໄຂບັນດາລະບຽບການຕ່າງໆ ຫລາຍຂຶ້ນ | - ເວລາໃນການເລີ່ມຕົ້ນສ້າງຕັ້ງທຸລະກິດ ຫລຸດລົງເຫລືອ 25 ວັນ ໃນປີ 2020 ຈາກ 67 ວັນ ໃນປີ 2016<br>- ຕົ້ນທຶນການເລີ່ມຕົ້ນເຮັດທຸລະກິດ ຫລຸດລົງເຫລືອ 4% ໃນປີ 2020 ຈາກ 4,6% ຂອງ GDP ຕໍ່ຫົວຄົນ ໃນປີ 2016 |
| | | **6.2.** ການອອກໃບອະນຸຍາດຕ່າງໆໄດ້ຮັບການປັບປຸງແກ້ໄຂ | |
| **7** | ນະໂຍບາຍພາສີ-ອາກອນ ແລະ ດ້ານການເງິນ | **7.1.** ຕົ້ນທຶນການຜະລິດຂອງວິສາຫະກິດຂະໜາດນ້ອຍ ແລະ ກາງຫລຸດລົງ | 60% ຂອງ ວນກ ດຳເນີນກິດຈະການທີ່ມີຜົນກຳໄລ ໃນປີ 2020 ຈາກ 41% ໃນປີ 2013 |
| | | **7.2.** ວິສາຫະກິດຂະໜາດນ້ອຍ ແລະ ກາງໄດ້ຮັບການປັບປຸງທາງດ້ານເຕັກໂນໂລຊີ ແລະ ການຄຸ້ມຄອງທຸລະກິດ | ວນກ ນຳໃຊ້ຄອມພິວເຕີຊ່ວຍໃນການບັນຊາ ແລະ ບໍລິຫານການຜະລິດເພີ່ມຂຶ້ນເປັນ 15% ໃນປີ 2020 ຈາກ 6,2% ຂອງຈຳນວນວິສາຫະກິທີ່ນຳໃຊ້ຄອມພິວເຕີ ໃນປີ 2013. |

# V. ມາດຕະການຈັດຕັ້ງປະຕິບັດ ແລະ ກົນໄກການປະສານງານ

## 5.1 ມາດຕະການຈັດຕັ້ງປະຕິບັດ

(1) ເພື່ອເຮັດໃຫ້ແຜນພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ 2016-2020 ໄດ້ຮັບການຈັດຕັ້ງປະຕິບັດຢ່າງປະສົບຜົນສໍາເລັດ ຈະຕ້ອງໄດ້ເຜີຍແຜ່ແຜນພັດທະນາດັ່ງກ່າວໃຫ້ບັນຂະແໜງການທີ່ກ່ຽວຂ້ອງເພື່ອເປັນເອກະພາບກັນ ແລະ ຮ່ວມມືກັນໃນການຈັດຕັ້ງປະຕິບັດບັນດາມາດຕະການ, ໂຄງການຕ່າງໆໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ຕາມພາລະບົດບາດຂອງແຕ່ລະຂະແໜງການ.

(2) ກະຊວງ ຂະແໜງການ ແລະ ອໍານາດການປົກຄອງທ້ອງຖິ່ນຈະຕ້ອງບັນຈຸເອົາແຜນດັ່ງກ່າວ ເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມຂອງຕົນເອງ ພ້ອມທັງຈັດສັນງົບປະມານທີ່ເໝາະສົມໃຫ້ແກ່ການຈັດຕັ້ງປະຕິບັດກິດຈະການ ແລະ ໂຄງການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນຂະແໜງການທ້ອງຖິ່ນຂອງຕົນເອງ.

(3) ເພີ່ມທະວີການເປັນເຈົ້າການຂອງອົງການຈັດຕັ້ງຂອງພາກທຸລະກິດ ເຊັ່ນ: ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ ແລະ ບັນດາແຂວງ, ບັນດາສະມາຄົມ ແລະ ກຸ່ມທຸລະກິດໃນຂະແໜງຕ່າງໆ ເພື່ອຈັດຕັ້ງປະຕິບັດໂຄງການ ແລະ ກິດຈະກໍາສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ບໍ່ວ່າຈະເປັນການສະໜອງການບໍລິການດ້ານວິຊາການ, ການຝຶກອົບຮົມ, ການສະໜອງຂໍ້ມູນຂ່າວສານດ້ານທຸລະກິດ ແລະ ກິດຈະກໍາອື່ນໆທີ່ເປັນການກະຕຸກຊຸກຍູ້ການພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ.

(4) ດໍາເນີນການທົບທວນ ແລະ ສຶກສາຄວາມຈໍາເປັນໃນການປັບປຸງກົດໝາຍວ່າດ້ວຍການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ສະບັບເລກທີ 11/ສພຊ, ວັນທີ 21 ທັນວາ 2011 ເພື່ອກໍານົດກົນໄກປະສານງານ ແລະ ລະບົບການຈັດຕັ້ງໃຫ້ມີປະສິດທິພາບ, ກໍານົດບັນດານະໂຍບາຍທີ່ຈະໃຫ້ບູລິມະສິດ ໃຫ້ແກ່ວິສາຫະກິດຂະໜາດນ້ອຍ ແລະ ກາງ ຂະແໜງຕ່າງໆໃຫ້ມີຄວາມລະອຽດ ແລະ ສາມາດຈັດຕັ້ງປະຕິບັດໄດ້ຢ່າງມີປະສິດທິຜົນ.

(5) ຜັນຂະຫຍາຍບັນດານະໂຍບາຍດັ່ງກ່າວອອກເປັນແຜນງານ ແລະ ໂຄງການລະອຽດ ແລະ ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ຮ່ວມມືກັນໃນການຈັດຕັ້ງປະຕິບັດ. ພ້ອມກັນນັ້ນ ກໍ່ຄົ້ນຄວ້າອອກນິຕິກໍາລຸ່ມກົດໝາຍ ເພື່ອກໍານົດຫລັກການ, ວິທີການ ແລະ ລະບຽບການ ໃນການໃຫ້ບູລິມະສິດດ້ານຕ່າງໆແກ່ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນຂະແໜງການທີ່ມີລັກສະນະຍຸດທະສາດເຊັ່ນ: ການປະກອບສ່ວນລຶບລ້າງຄວາມທຸກຍາກ, ການແກ້ໄຂວຽກເຮັດງານທໍາ, ການອານຸລັກວິຊາຊີບທີ່ເປັນມູນເຊື້ອຂອງຊາດ, ການແກ້ໄຂບັນຫາສັງຄົມ ແລະ ອື່ນໆ ຕາມການເຫັນດີຂອງລັດຖະບານ.

(6) ອອກນະໂຍບາຍໄມ້ງົດໃຫ້ວິສາຫະກິດຂະໜາດນ້ອຍ ແລະ ກາງ ແລະ ພາກສ່ວນທີ່ຍັງບໍ່ໄດ້ຂຶ້ນທະບຽນ ຫັນມາຂຶ້ນທະບຽນເພື່ອໃຫ້ເຂົ້າເຈົ້າໄດ້ຮັບການຊ່ວຍເຫລືອດ້ານການເງິນ ແລະ ດ້ານວິຊາການ ຈາກພາກສ່ວນຕ່າງໆ.

## 5.2 ກົນໄກການປະສານງານ

(1) ຄົ້ນຄວ້າສ້າງໃຫ້ມີກົນໄກປະສານງານເພື່ອຊີ້ນໍາ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດແຜນພັດທະນາ ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນລະດັບຊາດ ແລະ ລະດັບທ້ອງຖິ່ນ ແລະ ສ້າງລະບົບການຈັດຕັ້ງທີ່ມີປະສິດທິພາບ ໃຫ້ໃກ້ຄຽງກັບປະເທດສະມາຊິກອາຊຽນ ຫລື ປະເທດທີ່ມີປະສົບການ ແລະ ມີຜົນສໍາເລັດໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ຢູ່ໃນລະດັບຊາດ ແລະ ລະດັບທ້ອງຖິ່ນ.

(2) ສ້າງລະບົບການຕິດຕາມປະເມີນຜົນໃນການຈັດຕັ້ງປະຕິບັດແຜນພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ຂອງລັດຖະບານ ເພື່ອໃຫ້ສາມາດລາຍງານສະພາບການໃນການຈັດຕັ້ງປະຕິບັດໄດ້ຢ່າງເປັນລະບົບ ແລະ ທັນການ.

# VI. ວິທີການຈັດຕັ້ງປະຕິບັດ

ເພື່ອເຮັດໃຫ້ແຜນພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ 2016-2020 ໄດ້ຮັບການຈັດຕັ້ງປະຕິບັດຢ່າງປະສິບຜົນສຳເລັດ ຈຶ່ງໄດ້ກຳນົດວິທີການຈັດຕັ້ງປະຕິບັດທີ່ຈຳເປັນຈຳນວນໜຶ່ງ ດັ່ງນີ້:

## 6.1 ການຜັນຂະຫຍາຍ

### 6.1.1 ການເພີ່ມທະວີການປະສານງານ

ການປະສານງານທີ່ມີປະສິດທິພາບ ແມ່ນເງື່ອນໄຂສຳຄັນທີ່ຈະເຮັດໃຫ້ການຈັດຕັ້ງປະຕິບັດແຜນພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ສະບັບນີ້ປະສົບຜົນສຳເລັດ, ເນື່ອງຈາກວ່າການສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ເປັນວຽກງານທີ່ມີຄວາມກ່ຽວພັນທັງໃນສາຍຕັ້ງ ແລະ ສາຍຂວາງກັບຫລາຍຂະແໜງການ. ສະນັ້ນ, ທຸກພາກສ່ວນທີ່ກ່ຽວຂ້ອງຈະຕ້ອງໄດ້ໃຫ້ການຮ່ວມມືໃນການຈັດຕັ້ງປະຕິບັດ ແລະ ສະໜອງຂໍ້ມູນຄວາມຄືບໜ້າໃຫ້ກັນ ແລະ ກັນຊາບ ໂດຍນຳໃຊ້ກົນໄກການປະສານງານ ແລະ ປະຕິບັດຕາມພາລະບົດບາດຂອງພາກສ່ວນຕ່າງໆທີ່ຈະກຳນົດໃນພາກຕໍ່ໄປ. ທັງນີ້ກໍ່ເພື່ອເຮັດໃຫ້ການປະຕິບັດວຽກງານດຳເນີນໄປຢ່າງມີຈຸດສຸມ, ເປັນການຫລີກລ້ຽງຄວາມຊໍ້າຊ້ອນໃນການປະຕິບັດວຽກງານ ແລະ ເປັນການຫລຸດຜ່ອນຊ່ອງຫວ່າງຄວາມຮັບຜິດຊອບ.

### 6.1.2 ການກຳນົດແຫລ່ງທຶນ ແລະ ການຈັດສັນທຶນ

ທຶນຮອນເປັນປັດໄຈສຳຄັນຕັດສິນຊີ້ຂາດການຈັດຕັ້ງປະຕິບັດບັນດາມາດຕະການ ແລະ ໂຄງການ ທີ່ກຳນົດໄວ້, ສະນັ້ນຈະຕ້ອງໄດ້ມີການກຳນົດແຫລ່ງທຶນ, ລະດົມທຶນ ແລະ ຈັດສັນທຶນຢ່າງເໝາະສົມ ຊຶ່ງນອກຈາກລະດົມການຊ່ວຍເຫລືອຈາກພາຍນອກແລ້ວ ຈະຕ້ອງໄດ້ຈັດສັນງົບປະມານປົກກະຕິຂອງລັດຖະບານເພື່ອຈະສາມາດຈັດຕັ້ງປະຕິບັດແຜນສະບັບນີ້ໃຫ້ສຳເລັດຕາມລະດັບຄາດໝາຍ.

### 6.1.3 ການເພີ່ມທະວີການປະກອບສ່ວນຂອງພາກເອກະຊົນ ແລະ ຜູ້ມີສ່ວນກ່ຽວຂ້ອງ

ການປະຕິບັດແຜນພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ຈະປະສົບຜົນສຳເລັດໄດ້ກໍ່ຕໍ່ເມື່ອໄດ້ຮັບການສະໜັບສະໜູນ ແລະ ການເຂົ້າຮ່ວມຢ່າງຫ້າວຫັນຂອງພາກທຸລະກິດ ແລະ ອົງການຕົວແທນຂອງເຂົາເຈົ້າ ໂດຍແມ່ນສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ເປັນໃຈກາງ ເນື່ອງຈາກວ່າພາກທຸລະກິດເປັນຜູ້ທີ່ໄດ້ຮັບຜົນກະທົບໂດຍກົງຈາກການຈັດຕັ້ງປະຕິບັດນະໂຍບາຍຂອງລັດຖະບານ. ຊຸກຍູ້ ແລະ ສ້າງເງື່ອນໄຂໃຫ້ຜູ້ປະກອບກິດຈະການຂະໜາດນ້ອຍ ແລະ ກາງ ໂດຍສະເພາະຜູ້ປະກອບກິດຈະການເພດຍິງ ແລະ ຊາວໜຸ່ມ ໄດ້ເຂົ້າຮ່ວມໃນກຳນົດການສ້າງ, ຈັດຕັ້ງປະຕິບັດ ແລະ ຕິດຕາມປະເມີນຜົນການຈັດຕັ້ງປະຕິບັດແຜນພັດທະນາສະບັບນີ້.

### 6.1.4 ການເຊື່ອມໂຍງກັບແຜນງານ ແລະ ແຜນການອື່ນໆຂອງລັດຖະບານ

ແຜນພັດທະນາສະບັບນີ້ແມ່ນໄດ້ເອົາເຂົ້າເປັນເປັນສ່ວນໜຶ່ງຂອງແຜນພັດທະນາຂອງຂະແໜງອຸດສາຫະກຳ ແລະ ການຄ້າ 2016-2020 ແລະ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020). ສະນັ້ນ ໃນການຈັດຕັ້ງປະຕິບັດຈຶ່ງຕ້ອງປະສານສົມທົບຢ່າງໃກ້ສິດ ກັບການປະຕິບັດບັນດາຍຸດທະສາດ, ແຜນການ ແລະ ແຜນງານລວມຂອງລັດຖະບານ.

### 6.1.5 ການແບ່ງຄວາມຮັບຜິດຊອບທີ່ຈະແຈ້ງ

ການແບ່ງຄວາມຮັບຜິດຊອບທີ່ຈະແຈ້ງຊັດເຈນ ແລະ ຂາດຕົວ ແລະ ການປະສານງານທີ່ມີປະສິດທິພາບ ແມ່ນມີຄວາມຈຳເປັນຢ່າງຍິ່ງ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດແຜນພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ສະບັບນີ້ປະສົບຜົນສຳເລັດ. ພາກສ່ວນທີ່ກ່ຽວຂ້ອງຈະຕ້ອງມີຄວາມເຂົ້າໃຈໃນທາງດຽວກັນກ່ຽວກັບວິໄສທັດ ແລະ ວິທີການທີ່ຈະນຳໃຊ້ເຂົ້າໃນການສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນຕໍ່ໜ້າ.

### 6.1.6 ການດັດປັບໃຫ້ມີຄວາມເໝາະສົມ

ແຜນພັດທະນາສະບັບນີ້ ສ້າງຂຶ້ນບົນພື້ນຖານຂໍ້ມູນກ່ຽວກັບບັນຫາ ແລະ ຄວາມຮຽກຮ້ອງຕ້ອງການຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ເພື່ອໃຊ້ເປັນທິດທາງລວມເບື້ອງຕົ້ນສຳລັບການພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງໃນໄລຍະປີ 2016-2020 ໃນທົ່ວປະເທດ. ສະນັ້ນ ໃນການຈັດຕັ້ງປະຕິບັດຕົວຈິງຈະໄດ້ມີການດັດປັບໃຫ້ແທດເໝາະກັບສະພາບການ ແລະ ຈຸດພິເສດຂອງແຕ່ລະຂະແໜງການ ແລະ ທ້ອງຖິ່ນ ແລະ ຄວາມພ້ອມໃນແຕ່ລະໄລຍະ ບົນພື້ນຖານການປຶກສາຫາລືກັບຂະແໜງການທີ່ກ່ຽວຂ້ອງຂອງລັດ, ທ້ອງຖິ່ນ, ພາກທຸລະກິດ ແລະ ຜູ້ທີ່ມີສ່ວນຮ່ວມອື່ນໆ.

## 6.2 ກົນໄກການປະສານງານ

ການຈັດຕັ້ງປະຕິບັດແຜນພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ພວກເຮົາຍັງຂາດກົນໄກທີ່ເປັນລະບົບເພື່ອເຮັດໜ້າທີ່ປະສານງານ, ຕິດຕາມ ແລະ ໃຫ້ການຊີ້ນຳໃນການຈັດຕັ້ງປະຕິບັດໃນແຕ່ລະໄລຍະ ເຊິ່ງເມື່ອກ່ອນພວກເຮົາມີຄະນະກຳມະການແຫ່ງຊາດເພື່ອສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ. ພາຍຫລັງໄດ້ມີການປະກາດໃຊ້ກົດໝາຍວ່າດ້ວຍການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ຖືວ່າຄະນະກຳມະການດັ່ງກ່າວໄດ້ຖືກຍຸບເລີກໄປໃນຕົວ. ແຕ່ເນື່ອງຈາກວ່າການສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ເປັນການປັບປຸງວຽກງານທີ່ເປັນລັກສະນະແກນກາງ (Cross Cutting Issues), ດັ່ງນັ້ນ ທຸກພາກສ່ວນຕ້ອງໄດ້ຈັດຕັ້ງປະຕິບັດການສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ຕາມພາລະບົດບາດຂອງຕົນເອງ.

### 6.2.1 ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ຫ້ອງວ່າການສຳລັກງານນາຍົກລັດຖະມົນຕີ ຈະມີບົດບາດທີ່ສຳຄັນໃນການສັງລວມຄວາມຄືບໜ້າການຈັດຕັ້ງປະຕິບັດ, ລາຍງານ ແລະ ຂໍທິດຊີ້ນຳຈາກຄະນະລັດຖະບານ ເພື່ອຊີ້ນຳ ແລະ ຕິດຕາມການປະຕິບັດວຽກງານຂອງພາກສ່ວນກ່ຽວຂ້ອງຢ່າງຕໍ່ເນື່ອງ.

### 6.2.2 ກະຊວງອຸດສະຫະກຳ ແລະ ການຄ້າ

ກະຊວງອຸດສະຫະກຳ ແລະ ການຄ້າ ມີໜ້າທີ່ດັ່ງນີ້:

- ເຊື່ອມໂຍງແຜນພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ເຂົ້າກັບແຜນການ ແລະ ຍຸດທະສາດລວມ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ແລະ ຂອງຊາດ ເຊັ່ນ: ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 2016-2020, ແຜນພັດທະນາຂະແໜງອຸດສາຫະກຳ ແລະ ການຄ້າ 2016-2020 ແລະ ອື່ນໆ;
- ປະສານກັບບັນດາກະຊວງ, ອົງກອນ ຂັ້ນສູນກາງ ແລະ ພະແນກຕ່າງໆຂອງແຂວງ ໃນການປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດແຜນພັດທະນາສະບັບນີ້;
- ຊຸກຍູ້ການລະດົມທຶນ ແລະ ດຳເນີນການລະດົມທຶນຈາກແຫລ່ງຕ່າງໆ ເພື່ອມາຈັດຕັ້ງປະຕິບັດບັນດາມາດຕາການ, ໂຄງການ ແລະ ກິດຈະກຳຕ່າງໆ ທີ່ໄດ້ກຳນົດໄວ້.

### 6.2.3 ກົມສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ

ກົມສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ມີໜ້າທີ່ຫລັກໃນການເປັນຈຸດປະສານງານສຳລັບການສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນ ສປປ ລາວ, ສະນັ້ນ ຈຶ່ງມີໜ້າທີ່ຕົ້ນຕໍດັ່ງນີ້:

- ເຜີຍແຜ່ແຜນພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ສະບັບນີ້ ໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງ ລວມທັງພາກລັດຂັ້ນກະຊວງ ແລະ ທ້ອງຖິ່ນ, ພາກທຸລະກິດ ແລະ ຄູ່ຮ່ວມພັດທະນາ ໄດ້ຮັບຊາບ ແລະ ເຂົ້າໃຈຢ່າງທົ່ວເຖິງ;
- ລະດົມທຶນຈາກແຫລ່ງຕ່າງໆ ເພື່ອຈັດຕັ້ງປະຕິບັດບັນດາມາດຕະການ, ໂຄງການ ແລະ ກິດຈະກຳທີ່ໄດ້ລະບຸໄວ້ຢູ່ໃນແຜນພັດທະນາສະບັບນີ້;
- ປະສານງານ ແລະ ຊຸກຍູ້ໜ່ວຍງານທີ່ກ່ຽວຂອງໃນລະດັບສູນກາງ ແລະ ທ້ອງຖິ່ນ ໃນການຈັດຕັ້ງປະຕິບັດແຜນພັດທະນາສະບັບນີ້;
- ຕິດຕາມກວດກາ, ປະເມີນຜົນ ແລະ ລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດແຜນພັດທະນາສະບັບນີ້ ຢ່າງເປັນປະຈຳ.

### 6.2.4 ພາກທຸລະກິດ/ສະມາຄົມທຸລະກິດ

ພາກທຸລະກິດ/ສະມາຄົມທຸລະກິດ ມີບົດບາດສຳຄັນ ແລະ ມີສ່ວນຮ່ວມໃນການຈັດຕັ້ງປະຕິບັດແຜນພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ໂດຍສະເພາະແມ່ນການໃຫ້ຄຳປຶກສາຫາລືໃນທາງປະຕິບັດຕົວຈິງ ແລະ ການສະທ້ອນໃຫ້ເຫັນຜົນກະທົບຂອງບັນດາມາດຕະການ ແລະ ໂຄງການ ຕໍ່ພາກທຸລະກິດ.

### 6.2.5 ທະນາຄານ ແລະ ສະຖາບັນການເງິນ

ບັນດາທະນາຄານ ແລະ ສະຖາບັນການເງິນ, ລວມທັງສະຖາບັນການເງິນຈຸລະພາກ ຮ່ວມກັບຜູ້ໃຫ້ບໍລິການພັດທະນາທຸລະກິດ ບໍ່ວ່າຈະເປັນໜ່ວຍງານຂອງລັດຖະບານ ຫລື ພາກເອກະຊົນ ເປັນຜູ້ທີ່ມີບົດບາດສຳຄັນໃນການສະໜອງທຶນ

ແລະ ໃຫ້ການບໍລິການຕ່າງໆແກ່ວິສາຫະກິດຂະໜາດນ້ອຍ ແລະ ກາງ. ສະນັ້ນ, ຈຶ່ງມີໜ້າທີ່ນໍາເອົາບັນດາມາດຕະການທີ່ກ່ຽວຂ້ອງເຂົ້າໄປເປັນສ່ວນໜຶ່ງຂອງຍຸດທະສາດ ແລະ ແຜນການຂອງຕົນ ເພື່ອຈັດຕັ້ງປະຕິບັດໃຫ້ເກີດດອກອອກຜົນ.

### 6.2.6 ບັນດາກະຊວງ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງ ຂັ້ນສູນກາງ ແລະ ທ້ອງຖິ່ນ

ບັນດາກະຊວງ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງ ຂັ້ນສູນກາງ ແລະ ທ້ອງຖິ່ນມີຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດແຜນພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງສະບັບນີ້ ຕາມພາລະບົດບາດຂອງຕົນ ເນື່ອງຈາກວ່າການສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ມີການກ່ຽວພັນຢ່າງສະໜິດແໜ້ນທັງສາຍຕັ້ງ ແລະ ສາຍຂວາງ. ນອກຈາກການບັນຈຸເອົາບັນດາມາດຕະການ ແລະ ໂຄງການທີ່ກ່ຽວຂ້ອງເຂົ້າໃນແຜນງານ ແລະ ແຜນການຂອງຕົນ ເພື່ອຈັດຕັ້ງປະຕິບັດແລ້ວ ຂະແໜງການຕ່າງໆຍັງຕ້ອງໄດ້ໃຫ້ການຮ່ວມມືໃນການຕິດຕາມປະເມີນຜົນການຈັດຕັ້ງປະຕິບັດໃນແຕ່ລະໄລຍະ ເພື່ອໃຫ້ກົມສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ສາມາດເຮັດໜ້າທີ່ຂອງຕົນ ໃນການເປັນຜູ້ປະສານງານ ແລະ ລາຍງານຄວາມຄືບໜ້າໃຫ້ຂັ້ນເທິງເພື່ອຊາບ ແລະ ໃຫ້ທິດຊີ້ນໍາຢ່າງເປັນລະບົບຕໍ່ເນື່ອງ.

## 6.3 ການຕິດຕາມກວດກາ, ປະເມີນຜົນ ແລະ ການລາຍງານ

ການຕິດຕາມກວດກາ, ປະເມີນຜົນ ແລະ ການລາຍງານ ທີ່ມີປະສິດທິພາບ ແມ່ນມີຄວາມຈໍາເປັນເພື່ອຮັບປະກັນການຈັດຕັ້ງປະຕິບັດແຜນພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ສະບັບນີ້ ເພາະຈະຊ່ວຍໃຫ້ສາມາດເກັບກໍາຂໍ້ມູນກ່ຽວກັບຄວາມຄືບໜ້າ, ຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກ ລວມທັງຜົນກະທົບ ເພື່ອລາຍງານຂັ້ນເທິງຮັບຊາບ ແລະ ໃຫ້ທິດຊີ້ນໍາການປັບປຸງແກ້ໄຂຢ່າງທັນການໃນກໍລະນີຈໍາເປັນ. ການຕິດຕາມປະເມີນຜົນແມ່ນຈະໄດ້ເຮັດໃນສອງລະດັບ: ການຕິດຕາມປະເມີນຜົນການຈັດຕັ້ງປະຕິບັດ ແລະ ການຕິດຕາມປະເມີນຜົນກະທົບ. ດ້ວຍການຮ່ວມມືຈາກພາກສ່ວນທີ່ກ່ຽວຂ້ອງລວມທັງຄູ່ຮ່ວມພັດທະນາ, ກົມສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ຈະສືບຕໍ່ນໍາໃຊ້ລະບົບການຕິດຕາມປະເມີນຜົນທີ່ໄດ້ພັດທະນາຂຶ້ນມາ ເພື່ອຕິດຕາມປະເມີນຜົນການຈັດຕັ້ງປະຕິບັດແຜນພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ 2016-2020. ສ່ວນການຕິດຕາມປະເມີນຜົນກະທົບ ນອກຈາກຈະໃຊ້ລະບົບດັ່ງກ່າວແລ້ວຍັງຈະໄດ້ອີງໃສ່ບົດລາຍງານຜົນການສໍາຫລວດຕ່າງໆ ໂດຍສະເພາະແມ່ນການສໍາຫລວດວິສາຫະກິດ ຊຶ່ງດໍາເນີນທຸກໆສອງປີ.

ກົມສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ຈະໄດ້ເປັນໃຈກາງໃນການສັງລວມ ແລະ ລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດແຜນພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ 2016-2020 ໃຫ້ແກ່ກະຊວງອຸດສາຫະກໍາ ແລະ ການຄ້າ, ລັດຖະບານ ແລະ ພາກສ່ວນກ່ຽວຂ້ອງໄດ້ຮັບຊາບຢ່າງເປັນປະຈໍາ. ນອກຈາກການ ລາຍງານທຸກໆ 3 ເດືອນ, 6 ເດືອນ ແລະ ປະຈໍາປີຕາມລະບົບປົກກະຕິແລ້ວ, ກົມສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ຍັງຈະສ້າງບົດລາຍງານປະຈໍາປີກ່ຽວກັບ "ສະພາບຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ຂອງ ສປປ ລາວ" ເພື່ອເຜີຍແຜ່ໃຫ້ທຸກພາກສ່ວນໄດ້ຮັບຊາບຢ່າງທົ່ວເຖິງ.

# VII. ງົບປະມານ ແລະ ແຫລ່ງທຶນ

## 7.1 ຄາດຄະເນງົບປະມານ

ເພື່ອເຮັດໃຫ້ບັນດາມາດຕະການ ແລະ ໂຄງການທີ່ກຳນົດໄວ້ຢູ່ໃນແຜນພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ 2016-2020 ໄດ້ຮັບການຈັດຕັ້ງປະຕິບັດຢ່າງປະສິບຜົນສຳເລັດຕາມລະດັບຄາດໝາຍທີ່ຕັ້ງໄວ້, ໃນ 5 ປີຕໍ່ໜ້າຈະຕ້ອງການງົບປະມານທັງໝົດ **569.038.000.000** ກີບ, ໃນນີ້ ທຶນພາຍໃນ **95.743.000.000** ກີບ, ທຶນຕ່າງປະເທດ **473.295.000.000** ກີບ. ຄາດຄະເນງົບປະມານທີ່ຕ້ອງການທັງໝົດນີ້ແມ່ນກວມເອົາທຶນສຳລັບໂຄງການປ່ອຍສິນເຊື່ອ **335.000.000.000** ກີບ ທີ່ຈະສະໜອງໃຫ້ສະຖາບັນການເງິນເພື່ອປ່ອຍກູ້ເປັນອັນສະເພາະເຈາະຈິງໃຫ້ແກ່ວິສາຫະກິດຂະໜາດນ້ອຍ ແລະ ກາງ ນອກຈາກສິນເຊື່ອທີ່ສະຖາບັນການເງິນປ່ອຍກູ້ປົກກະຕິຢູ່ແລ້ວ (ລາຍລະອຽດເບິ່ງເອກະສານຊ້ອນທ້າຍ 3).

## 7.2 ແຫລ່ງທຶນ

ບັນດາຄູ່ຮ່ວມພັດທະນາ ເປັນຜູ້ທີ່ມີບົດບາດສຳຄັນໃນການໃຫ້ການສະໜັບສະໜູນທາງດ້ານທຶນຮອນ ແລະ ເຕັກນິກວິຊາການເຂົ້າໃນການຈັດຕັ້ງປະຕິບັດແຜນພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ຢູ່ ສປປ ລາວ ໃນໄລຍະທີ່ຜ່ານມາ. ດັ່ງນັ້ນ ລັດຖະບານ ໂດຍສະເພາະກະຊວງແຜນການ ແລະ ການລົງທຶນ ແລະ ກະຊວງການເງິນ ຕ້ອງໄດ້ເອົາແຜນພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ນີ້ ເຂົ້າເປັນບູລິມະສິດໃນແຜນການຮ່ວມມືທາງດ້ານວິຊາການ ແລະ ທາງດ້ານການເງິນກັບຄູ່ຮ່ວມພັດທະນາ ແລະ ປະເທດເພື່ອນມິດ.

ພ້ອມດຽວກັນນັ້ນ ຕ້ອງໄດ້ລະດົມທຶນຈາກພາກເອກະຊົນ ລວມທັງວິສາຫະກິດຂະໜາດນ້ອຍ ແລະ ກາງ ເອງ ໃນຮູບແບບ "ການຮ່ວມຮັບຜິດຊອບຄ່າໃຊ້ຈ່າຍ" ເປັນຕົ້ນແມ່ນການເຂົ້າຮ່ວມຝຶກອົບຮົມ, ການໄປທັດສະນະສຶກສາ, ການເຂົ້າຮ່ວມງານຕະຫລາດນັດ ແລະ ງານວາງສະແດງສິນຄ້າ ແລະ ອື່ນໆ. ໃນບາງກໍລະນີ ກໍ່ຕ້ອງໄດ້ລະດົມການສະໜັບສະໜູນຈາກວິສາຫະກິດຂະໜາດໃຫຍ່ ແລະ ສະຖາບັນການເງິນ ເຂົ້າໃນການຈັດຕັ້ງປະຕິບັດກິດຈະກຳຕ່າງໆເຊັ່ນ: ການປະກວດແຜນທຸລະກິດດີເດັ່ນປະຈຳປີ, ການມອບລາງວັນຜູ້ປະກອບກິດຈະການດີເດັ່ນ ແລະ ອື່ນໆ ຕາມຄວາມເໝາະສົມ.

## ເອກະສານຊ້ອນທ້າຍ 1: ຂົງເຂດນະໂຍບາຍ, ໝາກຜົນ ແລະ ມາດຕະການ, ໂຄງການ ແລະ ກິດຈະກຳ

<table>
<tr><th></th><th>ຂົງເຂດນະໂຍບາຍ</th><th>ໝາກຜົນ</th><th>ມາດຕະການ, ໂຄງການ ແລະ ກິດຈະກຳ</th></tr>
<tr><td rowspan="3">1</td><td rowspan="3">ນະໂຍບາຍສົ່ງເສີມການເພີ່ມຜະລິດຕະພາບ, ເຕັກໂນໂລຊີ ແລະ ນະວັດຕະກຳ</td><td>1.1. ຜະລິດຕະພາບໄດ້ຮັບການຍົກລະດັບ</td><td rowspan="3">1) ສົ່ງເສີມການຮ່ວມມືລະຫວ່າງພາກລັດ, ສະຖາບັນການສຶກສາ ແລະ ພາກທຸລະກິດໃນການພັດທະນາ ແລະ ຖ່າຍທອດເຕັກໂນໂລຊີ<br>2) ສົ່ງເສີມ ແລະ ອຳນວຍຄວາມສະດວກໃຫ້ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນການຈົດທະບຽນຊັບສິນທາງປັນຍາ<br>3) ສະໜັບສະໜູນການເຂົ້າເຖິງລະບົບການຢັ້ງຢືນຄຸນນະພາບ ແລະ ມາດຕະຖານ<br>4) ສະໜອງການປຶກສາ ແລະ ຝຶກອົບຮົມການຍົກລະດັບດ້ານການບໍລິຫານຄຸນນະພາບຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ<br>5) ເຜີຍແຜ່ດ້ານຄຸນນະພາບ ແລະ ຜະລິດຕະພາບ<br>6) ສ້າງລະບົບ ແລະ ດຳເນີນການມອບລາງວັນນະວັດຕະກຳ ດ້ານຕ່າງໆ ຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ<br>7) ສະໜອງທຶນສົມທົບໃນການປັບປຸງ ແລະ ຍົກລະດັບເຕັກໂນໂລຊີໃຫ້ແກ່ວິສາຫະກິດຂະໜາດນ້ອຍ ແລະ ກາງ</td></tr>
<tr><td>1.2. ເຕັກໂນໂລຊີໄດ້ຮັບການພັດທະນາ ແລະ ນຳໃຊ້</td></tr>
<tr><td>1.3. ນະວັດຕະກຳໄດ້ຮັບການສົ່ງເສີມ</td></tr>
<tr><td>2</td><td>ນະໂຍບາຍສົ່ງເສີມການເຂົ້າເຖິງແຫລ່ງທຶນ</td><td>2.1. ສະຖາບັນການເງິນໄດ້ຮັບການສົ່ງເສີມ ແລະ ປັບປຸງ</td><td></td></tr>
</table>

| | | | |
|---|---|---|---|
| | | **2.2.** ເຄື່ອງມືຕ່າງໆສຳລັບການສະໜອງສິນເຊື່ອໄດ້ຮັບການປັບປຸງ ແລະ ຫລາຍຫລາຍຂຶ້ນ | 1) ພັດທະນາຜະລິດຕະພັນ ແລະ ການບໍລິການທາງດ້ານສິນເຊື່ອ ແລະ ດ້ານການເງິນໃຫ້ແກ່ວິສາຫະກິດຂະໜາດ ນ້ອຍ ແລະ ກາງ ໃຫ້ມີຄວາມຫລາກຫລາຍ<br>2) ສ້າງຄວາມເຂັ້ມແຂງໃຫ້ບັນດາທະນາຄານ ແລະ ສະຖາບັນການເງິນ ລວມທັງສະຖາບັນການເງິນຈຸລະພາກ<br>3) ສ້າງຄວາມອາດສາມາດໃຫ້ວິສາຫະກິດຂະໜາດນ້ອຍ ແລະ ກາງໃນການເຂົ້າເຖິງແຫລ່ງທຶນ<br>4) ການສ້າງຄວາມເຂັ້ມແຂງໃຫ້ແກ່ກອງທຶນສົ່ງເສີມ ແລະພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ<br>5) ຄົ້ນຄວ້າ ແລະ ສຶກສາຄວາມເປັນໄປໄດ້ໃນການສ້າງ ສະຖາບັນການເງິນສະເພາະກິດສຳລັບວິສາຫະກິດຂະໜາດນ້ອຍ ແລະ ກາງ<br>6) ປັບປຸງຄວາມເຂັ້ມແຂງບັນດາອົງການຈັດຕັ້ງທີ່ອຳນວຍຄວາມສະດວກໃນການເຂົ້າເຖິງສິນເຊື່ອຂອງ ວນກ |
| 3 | **ນະໂຍບາຍສົ່ງເສີມການເຂົ້າເຖິງການບໍລິການໃຫ້ຄຳປຶກສາພັດທະນາທຸລະກິດ** | **3.1.** ໜ່ວຍງານບໍລິການໃຫ້ຄຳປຶກສາພັດທະນາທຸລະກິດໄດ້ຮັບການປັບປຸງ ແລະ ເຂັ້ມແຂງຂຶ້ນ | 1) ສ້າງຄວາມເຂັ້ມແຂງໃຫ້ອົງການ, ຫົວໜ່ວຍວິຊາການທີ່ສະໜອງບໍລິການໃຫ້ຄຳປຶກສາພັດທະນາທຸລະກິດ<br>2) ຊຸກຍູ້ບັນດາແຂວງໃນການສ້າງຕັ້ງສູນບໍລິການດ້ານວິຊາການໃຫ້ແກ່ ວນກ<br>3) ສົ່ງເສີມການສະໜອງການບໍລິການດ້ານວິຊາການໃຫ້ມີຄວາມຫຼາກຫຼາຍໃຫ້ແກ່ ວນກ<br>4) ສ້າງລະບົບຖານຂໍ້ມູນວິສາຫະກິດຂະໜາດນ້ອຍ ແລະ ກາງ ແລະ ຜູ້ສະໜອງບໍລິການໃຫ້ຄຳປຶກສາພັດທະນາທຸລະກິດ<br>5) ເຜີຍແຜ່ ແລະ ອຳນວຍຄວາມສະດວກໃຫ້ ວນກ ເຂົ້າເຖິງການບໍລິການໃຫ້ຄຳປຶກສາພັດທະນາທຸລະກິດ |

| | | | |
|---|---|---|---|
| **4** | **ນະໂຍບາຍເຂົ້າເຖິງ ແລະ ຂະຫຍາຍຕະຫລາດ** | **4.1.**ການເຂົ້າເຖິງຕະຫລາດ ແລະ ການເຊື່ອມໂຍງເຂົ້າສູ່ຕອງໂສ້ມູນຄ່າເພີ່ມໄດ້ຮັບການພັດທະນາ | **1)** ສະໜັບສະໜູນໃນການຈັດຕັ້ງປະຕິບັດບັນດາກິດຈະກຳສົ່ງເສີມການສົ່ງອອກ<br>**2)** ສ້າງຖານຂໍ້ມູນຂ່າວສານ ແລະ ສະໜອງຂໍ້ມູນຂ່າວສານກ່ຽວກັບຕະຫລາດພາກພື້ນ ແລະ ສາກົນ<br>**3)** ສ້າງໂອກາດ ແລະ ເພີ່ມຊ່ອງທາງການຕະຫຼາດແກ່ວິສາຫະກິດຂະໜາດນ້ອຍ ແລະ ກາງ<br>**4)** ອຳນວຍຄວາມສະດວກທາງດ້ານການຄ້າໃຫ້ແກ່ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນການເຂົ້າສູ່ຕະຫລາດພາກພື້ນ ແລະ ສາກົນ<br>**5)** ຄົ້ນຄວ້າຄວາມເປັນໄປໄດ້ໃນການສ້າງກອງທຶນສະໜັບສະໜູນການສົ່ງອອກຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ<br>**6)** ສົ່ງເສີມການຮ່ວມມືລະຫວ່າງວິສາຫະກິດຂະໜາດນ້ອຍ ແລະ ກາງ ກັບ ວິສາຫະກິດຂະໜາດໃຫຍ່ ແລະ ວິສາຫະກິດການລົງທຶນຂອງຕ່າງປະເທດ<br>**7)** ຄົ້ນຄວ້າຂະແໜງການວິສາຫະກິດຂະໜາດນ້ອຍ ແລະ ກາງທີ່ມີທ່າແຮງ ແລະ ມີຄວາມໄດ້ປຽບໃນການແຂ່ງຂັນ<br>**8)** ສົ່ງເສີມການພັດທະນາໃນຕ່ອງໂສ້ມູນຄ່າເພີ່ມ (Value Chain Development) ໃນບາງຂະແໜງທີ່ມີທ່າແຮງ<br>**9)** ສົ່ງເສີມການຮວມກຸ່ມທຸລະກິດ (Cluster) ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ວິສາຫະກິດຂະໜາດນ້ອຍ ແລະ ກາງໃນການເຂົ້າເຖິງຕະຫລາດ<br>**10)** ສົ່ງເສີມການສ້າງເຄືອຂ່າຍວິສາຫະກິດຂະຫນາດນ້ອຍ ແລະ ກາງ ທັງພາຍໃນ ແລະ ພາກພື້ນ ເພື່ອເພີ່ມທະວີການຮ່ວມມືທາງດ້ານທຸລະກິດ |
| | | **4.2.** ຄວາມສາມາດໃນການສົ່ງອອກຂອງ ວນກ ໄດ້ຮັບການສົ່ງເສີມ | |

<table>
<tr><td rowspan="2">5</td><td rowspan="2">ນະໂຍບາຍສ້າງ ແລະ ພັດທະນາຜູ້ປະກອບກິດຈະການໃໝ່</td><td>5.1. ຫລັກສູດກ່ຽວກັບການເປັນຜູ້ປະກອບກິດຈະການໄດ້ຮັບການຈຸໃນລະບົບການສຶກສາ</td><td rowspan="2">1) ສ້າງ ແລະ ບັນຈຸຫລັກສູດການກໍ່ສ້າງຜູ້ປະກອບກິດຈະການ ເຂົ້າໃນລະບົບການສຶກສາຊັ້ນສູງ ແລະ ອາຊີວະສຶກສາຂັ້ນຕ່າງໆ<br>2) ຍົກລະດັບຄວາມຊຳນານກ່ຽວກັບການບໍລິຫານທຸລະກິດໃຫ້ແກ່ຜູ້ປະກອບກິດຈະການວິສາຫະກິດຂະໜາດນ້ອຍ ແລະ ກາງ<br>3) ສະໜັບສະໜູນການສ້າງໃຫ້ມີຜູ້ປະກອບກິດຈະການໃໝ່ ໂດຍສະເພາະແມ່ນຊາວໜຸ່ມ, ແມ່ຍິງ ແລະ ນັກສຶກສາ<br>4) ສົ່ງເສີມສະຖາບັນການສຶກສາໃຫ້ມີບົດບາດໃນການກໍ່ສ້າງຜູ້ປະກອບກິດຈະການໃໝ່ ເປັນຕົ້ນແມ່ນການສ້າງສູນກໍ່ສ້າງຜູ້ປະກອບກິດຈະການ (Business Incubator), ການຝຶກອົບຮົມ, ການຖ່າຍທອດເຕັກໂນໂລຊີ ແລະ ກິດຈະກຳສົ່ງເສີມຕ່າງໆ<br>5) ສົ່ງເສີມໃຫ້ເກີດມີທຸລະກິດຕົວແທນ (Franchising Businesses)<br>6) ສ້າງລະບົບການຍ້ອງຍໍ ແລະ ດຳເນີນການຍ້ອງຍໍ ໃຫ້ແກ່ວິສາຫະກິດ ແລະ ຜູ້ປະກອບກິດຈະການທີ່ມີຜົນງານດີເດັ່ນໃນດ້ານຕ່າງໆ</td></tr>
<tr><td>5.2. ການພັດທະນາຊັບພະຍາກອນມະນຸດສຳລັບ ວນກ ໄດ້ຮັບການສົ່ງເສີມ ໂດຍສະເພາະແມ່ນ ແມ່ຍິງ ແລະ ຊາວໜຸ່ມ</td></tr>
<tr><td rowspan="2">6</td><td rowspan="2">ນະໂຍບາຍສ້າງສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ການສ້າງຕັ້ງ ແລະ ດຳເນີນທຸລະກິດ</td><td>6.1. ວນກ ມີສ່ວນຮ່ວມໃນການປັບປຸງແກ້ໄຂບັນດາລະບຽບການຕ່າງໆຫລາຍຂຶ້ນ</td><td rowspan="2">1) ປັບປຸງລະບຽບ ແລະ ລະບົບການຂຶ້ນທະບຽນວິສາຫະກິດໃຫ້ມີຄວາມສະດວກ ແລະ ວ່ອງໄວ<br>2) ປັບປຸງລະບຽບ ແລະ ລະບົບການອອກອະນຸຍາດຂອງພາກສ່ວນກ່ຽວຂ້ອງໃຫ້ມີຄວາມສະດວກ ແລະ ວ່ອງໄວ<br>3) ຄົ້ນຄວ້າ ແລະ ປັບປຸງລະບົບການເກັບອາກອນໃຫ້ມີຄວາມສະດວກໂປ່ງໃສ ແລະ ຍຸຕິທຳ<br>4) ສົ່ງເສີມໃຫ້ເກີດມີເວທີປຶກສາຫາລື ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຢູ່ຂັ້ນທ້ອງຖິ່ນ</td></tr>
<tr><td>6.2. ການອອກໃບອະນຸຍາດຕ່າງໆໄດ້ຮັບການປັບປຸງແກ້ໄຂ</td></tr>
</table>

| | | | |
|---|---|---|---|
| 7 | **ນະໂຍບາຍພາສີ-ອາກອນ ແລະ ດ້ານການເງິນ** | **7.1.** ຕົ້ນທຶນການຜະລິດຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ຫລຸດລົງ | **1)** ຄົ້ນຄວ້າ ແລະ ກຳນົດບັນດາກິດຈະການແລະຂະແໜງການບູລິມະສິດທີ່ຈະໄດ້ຮັບນະໂຍບາຍທາງດ້ານພາສີ-ອາກອນ ແລະ ການເງິນ<br>**2)** ຄົ້ນຄວ້າ ແລະ ກຳນົດບັນດາເງື່ອນໄຂສຳລັບຈຸນລະວິສາຫະກິດກໍ່ຕັ້ງໃໝ່ລວມທັງ Start-Up ເພື່ອໃຫ້ໄດ້ຮັບການຍົກເວັ້ນອາກອນມູນຄ່າເພີ່ມ ແລະ ອາກອນກຳໄລ<br>**3)** ຈັດສັນງົບປະມານ ແລະ ແຫລ່ງທຶນທີ່ເປັນໄປໄດ້ເພື່ອສະໜອງສິນເຊື່ອໃຫ້ແກ່ຈູນລະວິສາຫະກິດ<br>**4)** ສ້າງ ແລະ ດຳເນີນໂຄງການທຶນສົມທົບ ໃຫ້ແກ່ຈຸນລະວິສາຫະກິດ ແລະ ວິສາຫະກິດຂະໜາດນ້ອຍ ໃນການປັບປຸງ ແລະ ປ່ຽນຖ່າຍເຕັກໂນໂລຊີ ແລະ ການຊອກຫາຕະຫລາດ ທັງພາຍໃນ ແລະຕ່າງປະເທດ<br>**5)** ສ້າງ ແລະ ດຳເນີນໂຄງການທຶນສົມທົບໃຫ້ແກ່ວິສາຫະກິດຂະໜາດນ້ອຍ ແລະ ກາງ ເພື່ອເປັນຄ່າໃຊ້ຈ່າຍສຳລັບການສະໜອງບໍລິການໃຫ້ຄຳປຶກສາຈາກຜູ້ຊ່ຽວຊານເພື່ອປັບປຸງທຸລະກິດດ້ານຕ່າງໆ |
| | | **7.2.** ວິສາຫະກິດຂະໜາດນ້ອຍ ແລະ ກາງ ໄດ້ຮັບການປັບປຸງທາງດ້ານເຕັກໂນໂລຊີ ແລະ ການຄຸ້ມຄອງທຸລະກິດ | |

# ເອກະສານຊ້ອນທ້າຍ 2: ພາກສ່ວນທີ່ມີສ່ວນຮ່ວມໃນການຈັດຕັ້ງປະຕິບັດແຜນພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ 2016-2020

| | ຂົງເຂດນະໂຍບາຍ | ມາດຕະການ, ໂຄງການ ແລະ ກິດຈະກຳ | ພາກສ່ວນທີ່ມີສ່ວນຮ່ວມຫລັກ |
|---|---|---|---|
| 1 | **ນະໂຍບາຍສົ່ງເສີມການເພີ່ມຜະລິດຕະພາບ, ເຕັກໂນໂລຊີ ແລະ ນະວັດຕະກຳ** | 1) ສົ່ງເສີມການຮ່ວມມືລະຫວ່າງພາກລັດ, ສະຖາບັນການສຶກສາ ແລະ ພາກທຸລະກິດໃນການພັດທະນາ ແລະ ຖ່າຍທອດເຕັກໂນໂລຊີ<br>2) ສົ່ງເສີມ ແລະ ອຳນວຍຄວາມສະດວກໃຫ້ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນການຈົດທະບຽນຊັບສິນທາງປັນຍາ<br>3) ສະໜັບສະໜູນການເຂົ້າເຖິງລະບົບການຢັ້ງຢືນຄຸນນະພາບ ແລະ ມາດຕະຖານ<br>4) ສະໜອງການປຶກສາ ແລະ ຝຶກອົບຮົມການຍົກລະດັບດ້ານການບໍລິຫານຄຸນນະພາບຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ<br>5) ເຜີຍແຜ່ດ້ານຄຸນນະພາບ ແລະ ຜະລິດຕະພາບ<br>6) ສ້າງລະບົບ ແລະ ດຳເນີນການມອບລາງວັນນະວັດຕະກຳ ດ້ານຕ່າງໆ ຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ<br>7) ສະໜອງທຶນສົມທົບໃນການປັບປຸງ ແລະ ຍົກລະດັບເຕັກໂນໂລຊີໃຫ້ແກ່ວິສາຫະກິດຂະໜາດນ້ອຍ ແລະ ກາງ | **1) ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ<br>2) ກະຊວງອຸດສາຫະກຳ ແລະ ການຄ້າ<br>3) ກະຊວງສຶກສາທິການ ແລະ ກິລາ<br>4) ກະຊວງການເງິນ<br>5) ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ** |

| | | | |
|---|---|---|---|
| **2** | **ນະໂຍບາຍສົ່ງເສີມການເຂົ້າເຖິງແຫລ່ງທຶນ** | 1) ພັດທະນາຜະລິດຕະພັນ ແລະ ການບໍລິການທາງດ້ານສິນເຊື່ອ ແລະ ດ້ານການເງິນໃຫ້ແກ່ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃຫ້ມີຄວາມຫລາກຫລາຍ<br>2) ສ້າງຄວາມເຂັ້ມແຂງໃຫ້ບັນດາທະນາຄານ ແລະ ສະຖາບັນການເງິນລວມທັງສະຖາບັນການເງິນຈຸລະພາກ<br>3) ສ້າງຄວາມອາດສາມາດໃຫ້ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນການເຂົ້າເຖິງແຫລ່ງທຶນ<br>4) ສ້າງຄວາມເຂັ້ມແຂງໃຫ້ແກ່ກອງທຶນສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ<br>5) ຄົ້ນຄວ້າ ແລະ ສຶກສາຄວາມເປັນໄປໄດ້ໃນການສ້າງສະຖາບັນການເງິນສະເພາະກິດສໍາລັບວິສາຫະກິດຂະໜາດນ້ອຍ ແລະ ກາງ<br>6) ປັບປຸງຄວາມເຂັ້ມແຂງບັນດາອົງການຈັດຕັ້ງທີ່ອໍານວຍຄວາມສະດວກໃນການເຂົ້າເຖິງສິນເຊື່ອຂອງ ວນກ | **1) ກະຊວງການເງິນ**<br>**2) ທະນາຄານ ແຫ່ງ ສປປ ລາວ**<br>**3) ກະຊວງອຸດສາຫະກໍາ ແລະ ການຄ້າ**<br>**4) ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ**<br>**5) ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ** |
| **3** | **ນະໂຍບາຍສົ່ງເສີມການເຂົ້າເຖິງການບໍລິການໃຫ້ຄໍາປຶກສາພັດທະນາທຸລະກິດ** | 1) ສ້າງຄວາມເຂັ້ມແຂງໃຫ້ອົງການ, ຫົວໜ່ວຍວິຊາການທີ່ສະໜອງບໍລິການໃຫ້ຄໍາປຶກສາພັດທະນາທຸລະກິດ<br>2) ຊຸກຍູ້ບັນດາແຂວງໃນການສ້າງຕັ້ງສູນບໍລິການດ້ານວິຊາການໃຫ້ແກ່ ວນກ<br>3) ສົ່ງເສີມການສະໜອງການບໍລິການດ້ານວິຊາການໃຫ້ມີຄວາມຫຼາກຫຼາຍໃຫ້ແກ່ ວນກ<br>4) ສ້າງລະບົບຖານຂໍ້ມູນວິສາຫະກິດຂະໜາດນ້ອຍ ແລະ ກາງ ແລະ ຜູ້ສະໜອງບໍລິການໃຫ້ຄໍາປຶກສາພັດທະນາທຸລະກິດ<br>5) ເຜີຍແຜ່ ແລະ ອໍານວຍຄວາມສະດວກໃຫ້ ວນກ ເຂົ້າເຖິງການບໍລິການໃຫ້ຄໍາປຶກສາພັດທະນາທຸລະກິດ | **1) ກະຊວງອຸດສາຫະກໍາແລະການຄ້າ**<br>**2) ກະຊວງສຶກສາທິການ ແລະ ກິລາ**<br>**3) ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ** |

| | | | |
|---|---|---|---|
| 4 | **ນະໂຍບາຍເຂົ້າເຖິງ ແລະ ຂະຫຍາຍຕະຫລາດ** | 1) ສະໜັບສະໜູນໃນການຈັດຕັ້ງປະຕິບັດບັນດາກິດຈະກຳສົ່ງເສີມການສົ່ງອອກ<br>2) ສ້າງຖານຂໍ້ມູນຂ່າວສານ ແລະ ສະໜອງຂໍ້ມູນຂ່າວສານກ່ຽວກັບຕະຫລາດພາກພື້ນ ແລະ ສາກົນ<br>3) ສ້າງໂອກາດ ແລະ ເພີ່ມຊ່ອງທາງການຕະຫຼາດແກ່ວິສາຫະກິດຂະໜາດນ້ອຍ ແລະ ກາງ<br>4) ອຳນວຍຄວາມສະດວກທາງດ້ານການຄ້າໃຫ້ແກ່ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນການເຂົ້າສູ່ຕະຫລາດພາກພື້ນ ແລະ ສາກົນ<br>5) ຄົ້ນຄວ້າຄວາມເປັນໄປໄດ້ໃນການສ້າງກອງທຶນສະໜັບສະໜູນການສົ່ງອອກຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ<br>6) ສົ່ງເສີມການຮ່ວມມືລະຫວ່າງວິສາຫະກິດຂະໜາດນ້ອຍ ແລະ ກາງ ກັບວິສາຫະກິດຂະໜາດໃຫຍ່ ແລະ ວິສາຫະກິດການລົງທຶນຂອງຕ່າງປະເທດ<br>7) ຄົ້ນຄວ້າຂະແໜງການວິສາຫະກິດຂະໜາດນ້ອຍ ແລະ ກາງທີ່ມີທ່າແຮງ ແລະ ມີຄວາມໄດ້ປຽບໃນການແຂ່ງຂັນ<br>8) ສົ່ງເສີມການພັດທະນາໃນຕ່ອງໂສ້ມູນຄ່າເພີ່ມ (Value Chain Development) ໃນບາງຂະແໜງທີ່ມີທ່າແຮງ<br>9) ສົ່ງເສີມການຮ່ວມກຸ່ມທຸລະກິດ (Cluster) ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ວິສາຫະກິດຂະໜາດນ້ອຍ ແລະ ກາງໃນການເຂົ້າເຖິງຕະຫລາດ<br>10) ສົ່ງເສີມການສ້າງເຄືອຂ່າຍວິສາຫະກິດຂະໜາດນ້ອຍ ແລະ ກາງ ທັງພາຍໃນ ແລະ ພາກພື້ນ ເພື່ອເພີ່ມທະວີການຮ່ວມມືທາງດ້ານທຸລະກິດ | **1) ກະຊວງອຸດສາຫະກຳແລະການຄ້າ**<br>**2) ກະຊວງກະສິກຳ ແລະ ປ່າໄມ້**<br>**3) ກະຊວງການເງິນ**<br>**4) ກະຊວງການຕ່າງປະເທດ**<br>**5) ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ** |

| | | | |
|---|---|---|---|
| **5** | **ນະໂຍບາຍສ້າງ ແລະ ພັດທະນາຜູ້ປະກອບກິດຈະການໃໝ່** | 1) ບັນຈຸຫລັກສູດການກໍ່ສ້າງຜູ້ປະກອບກິດຈະການ ເຂົ້າໃນລະບົບການສຶກສາຊັ້ນສູງ ແລະ ອາຊີວະສຶກສາຂັ້ນຕ່າງໆ<br>2) ຍົກລະດັບຄວາມຊໍານານກ່ຽວກັບການບໍລິຫານທຸລະກິດໃຫ້ແກ່ຜູ້ປະກອບກິດຈະການວິສາຫະກິດຂະໜາດນ້ອຍ ແລະ ກາງ<br>3) ສະໜັບສະໜູນການສ້າງໃຫ້ມີຜູ້ປະກອບກິດຈະການໃໝ່ ໂດຍສະເພາະແມ່ນຊາວໜຸ່ມ, ແມ່ຍິງ ແລະ ນັກສຶກສາ<br>4) ສົ່ງເສີມສະຖາບັນການສຶກສາໃຫ້ມີບົດບາດໃນການກໍ່ສ້າງຜູ້ປະກອບກິດຈະການໃໝ່ ເປັນຕົ້ນແມ່ນການສ້າງສູນກໍ່ສ້າງຜູ້ປະກອບກິດຈະການ (Business Incubator), ການຝຶກອົບຮົມ, ການຖ່າຍທອດເຕັກໂນໂລຊີ ແລະ ກິດຈະກໍາສົ່ງເສີມຕ່າງໆ<br>5) ສົ່ງເສີມໃຫ້ເກີດມີທຸລະກິດຕົວແທນ (Franchising Businesses);<br>6) ສ້າງລະບົບການຍ້ອງຍໍ ແລະ ດໍາເນີນການຍ້ອງຍໍ ໃຫ້ແກ່ວິສາຫະກິດ ແລະ ຜູ້ປະກອບກິດຈະການທີ່ມີຜົນງານດີເດັ່ນໃນດ້ານຕ່າງໆ | **1) ກະຊວງອຸດສາຫະກໍາ ແລະ ການຄ້າ**<br>**2) ກະຊວງສຶກສາທິການ ແລະ ກິລາ**<br>**3) ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ** |

| | | | |
|---|---|---|---|
| 6 | **ນະໂຍບາຍສ້າງສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ການສ້າງຕັ້ງ ແລະ ດຳເນີນທຸລະກິດ** | 1) ປັບປຸງລະບຽບ ແລະ ລະບົບການຂຶ້ນທະບຽນວິສາຫະກິດໃຫ້ມີຄວາມສະດວກ ແລະ ວ່ອງໄວ<br>2) ປັບປຸງລະບຽບ ແລະ ລະບົບການອອກອະນຸຍາດຂອງພາກສ່ວນກ່ຽວຂ້ອງໃຫ້ມີຄວາມສະດວກ ແລະ ວ່ອງໄວ<br>3) ຄົ້ນຄວ້າ ແລະ ປັບປຸງລະບົບການເກັບອາກອນໃຫ້ມີຄວາມສະດວກໂປ່ງໃສ ແລະ ຍຸຕິທຳ<br>4) ສົ່ງເສີມໃຫ້ເກີດມີເວທີປຶກສາຫາລື ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຢູ່ຂັ້ນທ້ອງຖິ່ນ | 1) **ກະຊວງອຸດສາຫະກຳແລະການຄ້າ**<br>2) **ກະຊວງການເງິນ**<br>3) **ກະຊວງແຜນການ ແລະ ການລົງທຶນ**<br>4) **ທະນາຄານ ແຫ່ງ ສປປ ລາວ**<br>5) **ກະຊວງສາທາລະນະສຸກ**<br>6) **ກະຊວງໂຍທາທິການ ແລະ ຂົນສົ່ງ**<br>7) **ກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ**<br>8) **ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ**<br>9) **ກະຊວງໂຍທາທິການ ແລະ ຂົນສົ່ງ**<br>10) **ກະຊວງປ້ອງກັນຄວາມສະຫງົບ**<br>11) **ກະຊວງແຮງງານ ແລະ ສະຫວັດດີການສັງຄົມ**<br>12) **ກະຊວງຍຸຕິທຳ**<br>13) **ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ** |

| | | | |
|---|---|---|---|
| **7** | **ນະໂຍບາຍພາສີ-ອາກອນ ແລະ ດ້ານການເງິນ** | 1) ຄົ້ນຄວ້າ ແລະ ກຳນົດບັນດາກິດຈະການ ແລະ ຂະແໜງການບູລິມະສິດທີ່ຈະໄດ້ຮັບນະໂຍບາຍທາງດ້ານພາສີ-ອາກອນແລະການເງິນ<br>2) ຄົ້ນຄວ້າ ແລະ ກຳນົດບັນດາເງື່ອນໄຂສຳລັບຈຸນລະວິສາຫະກິດກໍ່ຕັ້ງໃໝ່ ລວມທັງ Start-Up ເພື່ອໃຫ້ໄດ້ຮັບການຍົກເວັ້ນອາກອນມູນຄ່າເພີ່ມ ແລະ ອາກອນກຳໄລ<br>3) ຈັດສັນງົບປະມານ ແລະ ແຫລ່ງທຶນທີ່ເປັນໄປໄດ້ເພື່ອສະໜອງສິນເຊື່ອໃຫ້ແກ່ຈູນລະວິສາຫະກິດ<br>4) ສ້າງ ແລະ ດຳເນີນໂຄງການທຶນສົມທົບ ໃຫ້ແກ່ຈຸນລະວິສາຫະກິດ ແລະ ວິສາຫະກິດຂະໜາດນ້ອຍ ໃນການປັບປຸງ ແລະ ປ່ຽນຖ່າຍເຕັກໂນໂລຊີ ແລະ ການຊອກຫາຕະຫລາດ ທັງພາຍໃນ ແລະ ຕ່າງປະເທດ<br>5) ສ້າງ ແລະ ດຳເນີນໂຄງການທຶນສົມທົບໃຫ້ແກ່ວິສາຫະກິດຂະໜາດນ້ອຍ ແລະ ກາງເພື່ອເປັນຄ່າໃຊ້ຈ່າຍສຳລັບການສະໜອງບໍລິການໃຫ້ຄຳປຶກສາຈາກຜູ້ຊ່ຽວຊານເພື່ອປັບປຸງທຸລະກິດດ້ານຕ່າງໆ | **1) ກະຊວງອຸດສາຫະກຳ ແລະ ການຄ້າ**<br>**2) ກະຊວງການເງິນ**<br>**3) ທະນາຄານ ແຫ່ງ ສປປ ລາວ**<br>**4) ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ** |

## ເອກະສານຊ້ອນທ້າຍ 3: ຄາດຄະເນງົບປະມານການຈັດຕັ້ງປະຕິບັດແຜນພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ 2016-2020

| ລ/ດ | ນະໂຍບາຍ ແລະ ມາດຕະການ, ໂຄງການ ແລະ ກິດຈະກຳ | ທຶນທີ່ຕ້ອງການຈັດຕັ້ງປະຕິບັດ ( ກີບ ) | | |
|---|---|---|---|---|
| | | ທຶນພາຍໃນ | ທຶນຕ່າງປະເທດ | ທຶນທັງໝົດ |
| | | **95.743.000.000** | **473.295.000.000** | **569.038.000.000** |
| **1** | **ນະໂຍບາຍສົ່ງເສີມການເພີ່ມຜະລິດຕະພາບ, ເຕັກໂນໂລຊີ ແລະ ນະວັດຕະກຳ** | **2.168.000.000** | **10.480.000.000** | **12.648.000.000** |
| 1.1 | ສົ່ງເສີມການຮ່ວມມືລະຫວ່າງພາກລັດ, ສະຖາບັນການສຶກສາ ແລະ ພາກທຸລະກິດໃນການພັດທະນາ ແລະ ຖ່າຍທອດເຕັກໂນໂລຊີ | 320.000.000 | 1.600.000.000 | 1.920.000.000 |
| 1.2 | ສົ່ງເສີມແລະ ອຳນວຍຄວາມສະດວກໃຫ້ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນການຈົດທະບຽນຊັບສິນທາງປັນຍາ | 8.000.000 | 240,000,000 | 248.000.000 |
| 1.3 | ສະໜັບສະໜູນການເຂົ້າເຖິງລະບົບການຢັ້ງຢືນຄຸນນະພາບ ແລະ ມາດຕະຖານ | 160.000.000 | 480.000.000 | 640.000.000 |
| 1.4 | ສະໜອງການປຶກສາ ແລະ ຝຶກອົບຮົມການຍົກລະດັບດ້ານການບໍລິຫານຄຸນນະພາບຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ | 240.000.000 | 2.160.000.000 | 2.400.000.000 |
| 1.5 | ເຜີຍແຜ່ດ້ານຄຸນນະພາບ ແລະ ຜະລິດຕະພາບ | 960.000.000 | 1.280.000.000 | 2.240.000.000 |
| 1.6 | ສ້າງລະບົບ ແລະ ດຳເນີນການມອບລາງວັນນະວັດຕະກຳດ້ານຕ່າງໆ ຂອງ ວນກ | 240.000.000 | 2.160.000.000 | 2.400.000.000 |
| 1.7 | ສະໜອງທຶນສົມທົບໃນການປັບປຸງ ແລະ ຍົກລະດັບເຕັກໂນໂລຊີໃຫ້ແກ່ ວນກ | 240.000.000 | 2.560.000.000 | 2.800.000.000 |
| **2** | **ນະໂຍບາຍສົ່ງເສີມການເຂົ້າເຖິງແຫລ່ງທຶນ** | **66.100.000.000** | **412.000.000.000** | **478.100.000.000** |
| 2.1 | ພັດທະນາຜະລິດຕະພັນ ແລະ ການບໍລິການທາງດ້ານສິນເຊື່ອແລະ ດ້ານການເງິນໃຫ້ແກ່ວິສາຫະກິດຂະໜາດ ນ້ອຍ ແລະ ກາງໃຫ້ມີຄວາມຫລາກຫລາຍ | 31.000.000.000 | 120.000.000.000 | 151.000.000.000 |
| 2.2 | ສ້າງຄວາມເຂັ້ມແຂງໃຫ້ບັນດາທະນາຄານ ແລະ ສະຖາບັນການເງິນ ລວມທັງສະຖາບັນການເງິນຈຸລະພາກ | 800.000.000 | 1.400.000.000 | 2.200.000.000 |

| | | | | |
|---|---|---|---|---|
| 2.3 | ສ້າງຄວາມອາດສາມາດໃຫ້ວິສາຫະກິດຂະໜາດນ້ອຍ ແລະ ກາງໃນການເຂົ້າເຖິງແຫລ່ງທຶນ | 1.500.000.000 | 1.600.000.000 | 3.100.000.000 |
| 2.4 | ສ້າງຄວາມເຂັ້ມແຂງໃຫ້ແກ່ກອງທຶນສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ | 32.000.000.000 | 288.000.000.000 | 320.000.000.000 |
| 2.5 | ຄົ້ນຄວ້າ ແລະ ສຶກສາຄວາມເປັນໄປໄດ້ໃນການສະຖາບັນການເງິນສະເພາະກິດສຳລັບວິສາຫະກິດຂະໜາດນ້ອຍ ແລະ ກາງ (ທຶນສຳລັບກໍ່ຕັ້ງ ແລະ ປ່ອຍສິນເຊື່ອ) | | | |
| 2.6 | ປັບປຸງຄວາມເຂັ້ມແຂງບັນດາອົງການຈັດຕັ້ງທີ່ອຳນວຍຄວາມສະດວກໃນການເຂົ້າເຖິງສິນເຊື່ອຂອງ ວນກ (ສູນຂໍ້ມູນສິນເຊື່ອຂອງທະນາຄານກາງ, ກົມທະບຽນສານ, ສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ, ໜ່ວຍງານຈົດທະບຽນຫຼັກຊັບ) | 800.000.000 | 1.000.000.000 | 1.800.000.000 |
| **3** | **ນະໂຍບາຍສົ່ງເສີມການເຂົ້າເຖິງການບໍລິການໃຫ້ຄຳປຶກສາພັດທະນາທຸລະກິດ** | **2.200.000.000** | **2.800.000.000** | **5.000.000.000** |
| 3.1 | ສ້າງຄວາມເຂັ້ມແຂງໃຫ້ອົງການ, ຫົວໜ່ວຍວິຊາການທີ່ສະໜອງບໍລິການໃຫ້ຄຳປຶກສາພັດທະນາທຸລະກິດ | 600.000.000 | 800.000.000 | 1.400.000.000 |
| 3.2 | ຊຸກຍູ້ບັນດາແຂວງໃນການສ້າງຕັ້ງສູນບໍລິການດ້ານວິຊາການໃຫ້ແກ່ ວນກ | 600.000.000 | 600.000.000 | 1.200.000.000 |
| 3.3 | ສົ່ງເສີມການສະໜອງການບໍລິການດ້ານວິຊາການໃຫ້ມີຄວາມຫຼາກຫຼາຍໃຫ້ແກ່ ວນກ | 400.000.000 | 600.000.000 | 1.000.000.000 |
| 3.4 | ສ້າງລະບົບຖານຂໍ້ມູນວິສາຫະກິດຂະໜາດນ້ອຍ ແລະ ກາງ ແລະ ຜູ້ສະໜອງບໍລິການໃຫ້ຄຳປຶກສາພັດທະນາທຸລະກິດ | 200.000.000 | 400.000.000 | 600.000.000 |
| 3.5 | ເຜີຍແຜ່ ແລະ ອຳນວຍຄວາມສະດວກໃຫ້ ວນກ ເຂົ້າເຖິງການບໍລິການໃຫ້ຄຳປຶກສາພັດທະນາທຸລະກິດ | 400.000.000 | 400.000.000 | 800.000.000 |
| **4** | **ນະໂຍບາຍເຂົ້າເຖິງ ແລະ ຂະຫຍາຍຕະຫລາດ** | **12.200.000.000** | **7.200.000.000** | **19.400.000.000** |
| 4.1 | ສະໜັບສະໜູນໃນການຈັດຕັ້ງປະຕິບັດບັນດາກິດຈະກຳສົ່ງເສີມການສົ່ງອອກ | 800.000.000 | 1.200.000.000 | 2.000.000.000 |
| 4.2 | ສ້າງຖານຂໍ້ມູນຂ່າວສານ ແລະ ສະໜອງຂໍ້ມູນຂ່າວສານກ່ຽວກັບຕະຫລາດພາກພື້ນ ແລະ ສາກົນ | 500.000.000 | 1.000.000.000 | 1.500.000.000 |
| 4.3 | ສ້າງໂອກາດ ແລະ ເພີ່ມຊ່ອງທາງການຕະຫຼາດແກ່ ວນກ | 400.000.000 | 600.000.000 | 1.000.000.000 |
| 4.4 | ອຳນວຍຄວາມສະດວກທາງດ້ານການຄ້າໃຫ້ແກ່ວນກ ໃນການເຂົ້າສູ່ຕະຫຼາດພາກພື້ນ ແລະ ສາກົນ | 1.000.000.000 | 2.000.000.000 | 3.000.000.000 |
| 4.5 | ຄົ້ນຄວ້າຄວາມເປັນໄປໄດ້ໃນການສ້າງກອງທຶນສະໜັບສະໜູນການສົ່ງອອກຂອງ ວນກ | 400.000.000 | 400.000.000 | 800.000.000 |

| | | | | |
|---|---|---|---|---|
| 4.6 | ສົ່ງເສີມການຮ່ວມມືລະຫວ່າງ ວນກ ກັບ ວິສາຫະກິດຂະໜາດໃຫຍ່ ແລະ ວິສາຫະກິດການລົງທຶນຂອງຕ່າງປະເທດ | | 2.000.000.000 | 2.000.000.000 |
| 4.7 | ຄົ້ນຄວ້າຂະແໜງການວິສາຫະກິດຂະໜາດນ້ອຍ ແລະ ກາງ ທີ່ມີທ່າແຮງ ແລະ ມີຄວາມໄດ້ປຽບໃນການແຂ່ງຂັນ | 300,000,000 | | 300.000.000 |
| 4.8 | ສົ່ງເສີມການພັດທະນາໃນຕ່ອງໂສ້ມູນຄ່າເພີ່ມ (Value Chain Development) ໃນບາງຂະແໜງທີ່ມີທ່າແຮງ | 3.000.000.000 | | 3.000.000.000 |
| 4.9 | ສົ່ງເສີມການຮ່ວມກຸ່ມທຸລະກິດ (Cluster) ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ ວນກ ໃນການເຂົ້າເຖິງຕະຫຼາດ | 4.150.000.000 | | 4.150.000.000 |
| 4.10 | ສົ່ງເສີມການສ້າງເຄືອຂ່າຍວນກ ທັງພາຍໃນ ແລະ ພາກພື້ນ ເພື່ອເພີ່ມທະວີການຮ່ວມມືທາງດ້ານທຸລະກິດ | 1.650.000.000 | | 1.650.000.000 |
| **5** | **ນະໂຍບາຍສ້າງແລະພັດທະນາຜູ້ປະກອບກິດຈະການໃໝ່** | **1.740.000.000** | **10.100.000.000** | **11.840.000.000** |
| 5.1 | ສ້າງ ແລະ ບັນຈຸຫລັກສູດການກໍ່ສ້າງຜູ້ປະກອບກິດຈະການ ເຂົ້າໃນລະບົບການສຶກສາຊັ້ນສູງ ແລະ ອາຊີວະສຶກສາຂັ້ນຕ່າງໆ | | 1.000.000.000 | 1.000.000.000 |
| 5.2 | ຍົກລະດັບຄວາມຊໍານານກ່ຽວກັບການບໍລິຫານທຸລະກິດໃຫ້ແກ່ຜູ້ປະກອບກິດຈະການ ວນກ | 200.000.000 | 500.000.000 | 700.000.000 |
| 5.3 | ສະໜັບສະໜູນການສ້າງໃຫ້ມີຜູ້ປະກອບກິດຈະການໃໝ່ໂດຍສະເພາະແມ່ນຊາວໜຸ່ມ, ແມ່ຍິງ ແລະ ນັກສຶກສາ | 400.000.000 | 800.000.000 | 1.200.000.000 |
| 5.4 | ສົ່ງເສີມສະຖາບັນການສຶກສາໃຫ້ມີບົດບາດໃນການກໍ່ສ້າງຜູ້ປະກອບກິດຈະການໃໝ່ ເປັນຕົ້ນແມ່ນການສ້າງສູນກໍ່ສ້າງຜູ້ປະກອບກິດຈະການ (Business Incubator), ການຝຶກອົບຮົມ, ການຖ່າຍທອດເຕັກໂນໂລຊີ ແລະ ກິດຈະກໍາສົ່ງເສີມຕ່າງໆ | 400.000.000 | 5.200.000.000 | 5.600.000.000 |
| 5.5 | ສົ່ງເສີມໃຫ້ເກີດມີທຸລະກິດຕົວແທນ (Franchising Businesses) | 240.000.000 | 1.600.000.000 | 1.840.000.000 |
| 5.6 | ສ້າງລະບົບການຍ້ອງຍໍ ແລະ ດໍາເນີນການຍ້ອງຍໍ ໃຫ້ແກ່ວິສາຫະກິດ ແລະ ຜູ້ປະກອບກິດຈະການທີ່ມີຜົນງານດີເດັ່ນໃນດ້ານຕ່າງໆ | 500.000.000 | 1.000.000.000 | 1.500.000.000 |
| **6** | **ສ້າງສະພາບແວດລ້ອມທີ່ເອື້ອອໍານວຍໃຫ້ແກ່ການສ້າງຕັ້ງ ແລະ ດໍາເນີນທຸລະກິດ** | **1.840.000.000** | **8.560.000.000** | **10.400.000.000** |
| 6.1 | ປັບປຸງລະບຽບ ແລະ ລະບົບການຂຶ້ນທະບຽນວິສາຫະກິດໃຫ້ມີຄວາມສະດວກ ແລະ ວ່ອງໄວ | 400.000.000 | 1.200.000.000 | 1.600.000.000 |

| | | | | |
|---|---|---|---|---|
| 6.2 | ປັບປຸງລະບຽບ ແລະ ລະບົບການອອກອະນຸຍາດຂອງພາກສ່ວນກ່ຽວຂ້ອງໃຫ້ມີຄວາມສະດວກ ແລະ ວ່ອງໄວ | 800.000.000 | 3.200.000.000 | 4.000.000.000 |
| 6.3 | ຄົ້ນຄວ້າ ແລະ ປັບປຸງລະບົບການເກັບອາກອນໃຫ້ມີຄວາມສະດວກໂປ່ງໃສ ແລະ ຍຸຕິທຳ | 240.000.000 | 2.160.000.000 | 2.400.000.000 |
| 6.4 | ສົ່ງເສີມໃຫ້ເກີດມີເວທີປຶກສາຫາລືລະຫວ່າງ ພາກລັດ ແລະ ພາກເອກະຊົນ ຢູ່ຂັ້ນທ້ອງຖິ່ນ | 400.000.000 | 2.000.000.000 | 2.400.000.000 |
| **7** | **ນະໂຍບາຍພາສີ-ອາກອນ ແລະ ດ້ານການເງິນ** | **9.495.000.000** | **22.155.000.000** | **31.650.000.000** |
| 7.1 | ຄົ້ນຄວ້າ ແລະ ກຳນົດບັນດາກິດຈະການ ແລະ ຂະແໜງການບູລິມະສິດທີ່ຈະໄດ້ຮັບນະໂຍບາຍທາງດ້ານພາສີ-ອາກອນ ແລະ ການເງິນ | 75.000.000 | 175.000.000 | 250.000.000 |
| 7.2 | ຄົ້ນຄວ້າ ແລະ ກຳນົດບັນດາເງື່ອນໄຂສໍາລັບຈຸນລະວິສາຫະກິດກໍ່ຕັ້ງໃໝ່ລວມທັງ Start-Up ເພື່ອໃຫ້ໄດ້ຮັບການຍົກເວັ້ນອາກອນມູນຄ່າເພີ່ມ ແລະ ອາກອນກຳໄລ | 45.000.000 | 105.000.000 | 150.000.000 |
| 7.3 | ຈັດສັນງົບປະມານ ແລະ ແຫລ່ງທຶນທີ່ເປັນໄປໄດ້ເພື່ອສະໜອງສິນເຊື່ອໃຫ້ແກ່ຈູນລະວິສາຫະກິດ | 4.500.000.000 | 10.500.000.000 | 15.000.000.000 |
| 7.4 | ສ້າງ ແລະ ດຳເນີນໂຄງການທຶນສົມທົບ ໃຫ້ແກ່ຈຸນລະວິສາຫະກິດ ແລະ ວິສາຫະກິດຂະໜາດນ້ອຍ ໃນການປັບປຸງ ແລະ ປ່ຽນຖ່າຍເຕັກໂນໂລຊີ ແລະ ການຊອກຫາຕະຫລາດທັງພາຍໃນ ແລະ ຕ່າງປະເທດ | 375.000.000 | 875.000.000 | 1.250.000.000 |
| 7.5 | ສ້າງ ແລະ ດຳເນີນໂຄງການທຶນສົມທົບໃຫ້ແກ່ວິສາຫະກິດຂະໜາດນ້ອຍ ແລະ ກາງ ເພື່ອເປັນຄ່າໃຊ້ຈ່າຍສໍາລັບການສະໜອງບໍລິການໃຫ້ຄໍາປຶກສາຈາກຜູ້ຊ່ຽວຊານເພື່ອປັບປຸງທຸລະກິດດ້ານຕ່າງໆ | 4.500.000.000 | 10.500.000.000 | 15.000.000.000 |